# ເອກະສານ

## ສຶກສາອົບຮົມການເມືອງ-ແນວຄິດ

## ສຳລັບ ສະມາຊິກພັກ, ພະນັກງານ ແລະ ປະຊາຊົນ

## ເພື່ອດຳເນີນກອງປະຊຸມໃຫຍ່ 3 ຂັ້ນ ຂອງພັກ

2023

# ສາລະບານ


- ຄຳແນະນຳ ຂອງຄະນະໂຄສະນາອົບຮົມສູນກາງພັກ
- ແຈ້ງການແນະນຳ ຂອງຄະນະໂຄສະນາອົບຮົມ ນະຄອນຫຼວງວຽງຈັນ
- ເອກະສານອົບຮົມການເມືອງ-ແນວຄິດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ພັກປະຊາຊົນປະຕິວັດລາວ

ຄະນະໂຄສະນາອົບຮົມສູນກາງພັກ

ເລກທີ 34/ຄອສພ

ນະຄອນຫຼວງວຽງຈັນ, ວັນທີ 15 ກັນຍາ 2023

# ຄຳແນະນຳ
## ຂອງຄະນະໂຄສະນາອົບຮົມສູນກາງພັກ
## ກ່ຽວກັບການນຳໃຊ້ເອກະສານສຶກສາອົບຮົມການເມືອງ-ແນວຄິດ
## ສຳລັບ ສະມາຊິກພັກ, ພະນັກງານຫຼັກແຫຼ່ງ ເພື່ອດຳເນີນກອງປະຊຸມໃຫຍ່ຂອງພັກ 3 ຂັ້ນ

ເຖິງ: ຄະນະພັກບັນດາກະຊວງ, ອົງການທຽບເທົ່າ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າແຫ່ງຊາດ, ອົງການຈັດຕັ້ງມະຫາຊົນອ້ອມຂ້າງສູນກາງ, ຄະນະພັກນະຄອນຫຼວງ, ຄະນະພັກແຂວງ, ເມືອງ, ນະຄອນ ແລະ ຮາກຖານພັກ ໃນຂອບເຂດທົ່ວປະເທດ.

ເລື່ອງ: ການນຳໃຊ້ເອກະສານ ແລະ ຈັດຕັ້ງສຶກສາອົບຮົມການເມືອງ-ແນວຄິດ ສຳລັບ ສະມາຊິກພັກ-ພະນັກງານຫຼັກແຫຼ່ງ ເພື່ອດຳເນີນກອງປະຊຸມໃຫຍ່ຂອງພັກ 3 ຂັ້ນ.

- ອີງຕາມຄຳສັ່ງຂອງຄະນະເລຂາທິການສູນກາງພັກ ສະບັບເລກທີ 411/ຄລສພ, ລົງວັນທີ 8 ສິງຫາ 2023 ວ່າດ້ວຍການກະກຽມ ແລະ ດຳເນີນກອງປະຊຸມໃຫຍ່ 3 ຂັ້ນ ຂອງພັກ.
- ອີງຕາມຄຳແນະນຳຂອງຄະນະຈັດຕັ້ງສູນກາງພັກ ສະບັບເລກທີ 211/ຄຈສພ, ລົງວັນທີ 16 ສິງຫາ 2023 ກ່ຽວກັບການຈັດຕັ້ງປະຕິບັດຄຳສັ່ງຂອງຄະນະເລຂາທິການສູນກາງພັກ ວ່າດ້ວຍການກະກຽມ ແລະ ດຳເນີນກອງປະຊຸມໃຫຍ່ 3 ຂັ້ນ ຂອງພັກ.
- ອີງຕາມມະຕິຕົກລົງຂອງກົມການເມືອງສູນກາງພັກ ສະບັບເລກທີ 20/ກມສພ, ລົງວັນທີ 13 ຕຸລາ 2022 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຄະນະໂຄສະນາອົບຮົມສູນກາງພັກ.

ຄະນະໂຄສະນາອົບຮົມສູນກາງພັກ (ກົມອົບຮົມ) ໄດ້ສ້າງເອກະສານສຶກສາອົບຮົມການເມືອງ-ແນວຄິດ ສຳລັບ ສະມາຊິກພັກ, ພະນັກງານຫຼັກແຫຼ່ງ ເພື່ອກະກຽມດຳເນີນກອງປະຊຸມໃຫຍ່ຂອງພັກ 3 ຂັ້ນ ຢູ່ບັນດາກະຊວງ-ອົງການທຽບເທົ່າ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າແຫ່ງຊາດ, ອົງການຈັດຕັ້ງມະຫາຊົນ, ຄະນະ

Scanned with CamScanner

ພັກແຂວງ, ນະຄອນຫຼວງວຽງຈັນ, ເມືອງ, ນະຄອນ ໃຫ້ສອດຄ່ອງກັບເນື້ອໃນຂອງຄໍາສັ່ງ, ຄໍາແນະນໍາ ດັ່ງກ່າວ. ສະນັ້ນ, ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດໄດ້ຮັບຜົນດີ, ຄະນະໂຄສະນາອົບຮົມສູນກາງພັກ ແນະນໍາບາງບັນຫາ ດັ່ງນີ້:

## I. ຈຸດປະສົງ-ລະດັບຄາດໝາຍ.

1. ເພື່ອສຶກສາອົບຮົມການເມືອງ-ແນວຄິດໃຫ້ເປົ້າໝາຍ ທີ່ຈະກຽມເຂົ້າຄັດເລືອກເປັນ ຄະນະພັກໃນແຕ່ລະຂັ້ນຢູ່ບັນດາກະຊວງ, ແຂວງ, ເມືອງ, ນະຄອນ ແລະ ບັນດາອົງການຕ່າງໆ ທີ່ຈະດໍາເນີນກອງປະຊຸມໃຫຍ່ຂັ້ນຂອງຕົນ ໄດ້ມີຄວາມຮັບຮູ້-ເຂົ້າໃຈ ຕໍ່ກັບຄວາມໝາຍ, ຄວາມສໍາຄັນຂອງກອງປະຊຸມ 3 ຂັ້ນ; ກໍາແໜ້ນເຖິງ ການຍົກສູງບົດບາດການນໍາພາຂອງພັກ ເຂົ້າໃນວຽກງານຕ່າງໆ; ພ້ອມດຽວກັນນັ້ນ ຍັງເປັນການຝຶກຝົນຫຼໍ່ຫຼອມຕົນເອງ ດ້ານຄຸນທາດການເມືອງ ຄຸນສົມບັດສົມບັດປະຕິວັດ ຂອງພະນັກງານ, ສະມາຊິກພັກ.

2. ບົນພື້ນຖານການຮຽນຮູ້, ເຂົ້າໃຈດັ່ງກ່າວ ພະນັກງານ, ສະມາຊິກພັກ ທີ່ຖືກຄັດເລືອກເຂົ້າໃນຄະນະນໍາ ຕາມທີ່ກອງປະຊຸມໃຫຍ່ແຕ່ລະຂັ້ນເລືອກເອົານັ້ນ ເປັນເຈົ້າການອຸທິດສະຕິປັນຍາ ແລະ ເຫື່ອແຮງເຂົ້າໃສ່ພາລະກິດປະຕິວັດ, ເຮັດໃຫ້ປະຊາຊົນມີຄວາມເຊື່ອໝັ້ນ ແລະ ສັດທາ ເພື່ອເຮັດໃຫ້ປະເທດຊາດມັ່ງຄັ່ງເຂັ້ມແຂງ, ປະຊາຊົນຮັ່ງມີຜາສຸກ, ສັງຄົມສາມັກຄີປອງດອງ, ປະຊາທິປະໄຕ, ຍຸຕິທໍາ ແລະ ສີວິໄລ.

## II. ເນື້ອໃນ.

ເນື້ອໃນເອກະສານປະກອບມີ 4 ບົດ ດັ່ງນີ້:

ບົດທີ 1: ຄວາມເຂົ້າໃຈກ່ຽວກັບ ກອງປະຊຸມໃຫຍ່ 3 ຂັ້ນ ຂອງພັກ.

ບົດທີ 2: ຍົກສູງຄວາມສາມາດນໍາພາ ແລະ ຄວາມເປັນແບບຢ່າງນໍາໜ້າຂອງສະມາຊິກພັກ.

ບົດທີ 3: ຕັ້ງໜ້າຝຶກຝົນຫຼໍ່ຫຼອມ ຄຸນທາດການເມືອງ ແລະ ຄຸນສົມບັດສົມທໍາປະຕິວັດ.

ບົດທີ 4: ເດັດດ່ຽວແກ້ໄຂປະກົດການຫຍໍ້ທໍ້ ໃນຖັນແຖວພະນັກງານ, ສະມາຊິກພັກ.

## III. ເປົ້າໝາຍເຂົ້າຮ່ວມສຶກສາອົບຮົມ.

ສະມາຊິກພັກ, ພະນັກງານຫຼັກແຫຼ່ງ ທີ່ເຮັດວຽກຢູ່ບັນດາກະຊວງ, ອົງການທຽບເທົ່າ ອ້ອມຂ້າງສູນກາງ, ນະຄອນຫຼວງວຽງຈັນ, ແຂວງ, ເມືອງ, ນະຄອນ ແລະ ຮາກຖານພັກ.

## IV. ວິທີຈັດຕັ້ງປະຕິບັດ.

- ໃຫ້ຄະນະພັກກະຊວງ, ອົງການທຽບເທົ່າອ້ອມຂ້າງສູນກາງ, ຄະນະພັກນະຄອນຫຼວງ, ແຂວງ, ເມືອງ ນະຄອນ ແລະ ຄະນະພັກຮາກຖານ ແຕ່ລະບ່ອນເອົາເອກະສານນີ້ ຈັດຕັ້ງສຶກສາອົບຮົມສະມາຊິກພັກ-ພະນັກງານຫຼັກແຫຼ່ງ ຢູ່ໃນຄວາມຮັບຜິດຊອບຂອງຕົນຢ່າງທົ່ວເຖິງ ແລະ ເລິກເຊິ່ງ ໂດຍອີງໃສ່ສະພາບຕົວຈິງຂອງແຕ່ລະບ່ອນ. ໝາຍຄວາມວ່າ ບ່ອນໃດມີສະມາຊິກພັກ-ພະນັກງານຫຼັກແຫຼ່ງຫຼາຍ ອາດຈັດຕັ້ງສຶກສາອົບຮົມເປັນຫຼາຍຊຸດ ຕາມຄວາມເໝາະສົມຂອງແຕ່ລະບ່ອນ.
- ກໍານົດເວລາຮຽນເອກະສານ 2 ວັນ ໂດຍມີການແບ່ງຈຸ ຄົ້ນຄວ້າຮໍ່າຮຽນ ຢ່າງເລິກເຊິ່ງ.
- ສໍາລັບຜູ້ທີ່ມາບັນຍາຍເອກະສານນີ້ ຕ້ອງແມ່ນ ລະຂາທິການ ເລຂາພັກ ເປັນຜູ້ຮັບຜິດຊອບ ບັນຍາຍໂດຍກົງ.

ສະແກນດ້ວຍ CamScanner

- ມອບໃຫ້ຄະນະໂຄສະນາອົບຮົມແຂວງ, ນະຄອນຫຼວງວຽງຈັນ, ເມືອງ, ນະຄອນ ທີ່ເປັນເສນາທິການໃຫ້ຄະນະພັກຂັ້ນຂອງຕົນ ເພື່ອຈັດຕັ້ງສຶກສາອົບຮົມເອກະສານນີ້ ຕາມພາລະບົດບາດຂອງຕົນ.

ພາຍຫຼັງຈັດຕັ້ງຮ່ຳຮຽນ ສຶກສາອົບຮົມສຳເລັດແລ້ວ ໃຫ້ລາຍງານໄປຍັງ ຄະນະໂຄສະນາອົບຮົມສູນກາງພັກ ຮັບຊາບ.

ດັ່ງນັ້ນ, ຈຶ່ງແນະນຳ ມາເພື່ອຊາບ ແລະ ຈັດຕັ້ງປະຕິບັດໃຫ້ໄດ້ ຮັບຜົນດີ.

ຫົວໜ້າຄະນະໂຄສະນາອົບຮົມສູນກາງພັກ

ຄຳພັນ ເຜີຍຍະວົງ

ສະແກນດ້ວຍ CamScanner

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ນະຄອນຫຼວງວຽງຈັນ
ຄະນະໂຄສະນາອົບຮົມ

ເລກທີ 358 /ຄອນວ
ວັນທີ 22 ພະຈິກ 2023

# ແຈ້ງການແນະນຳ

## ກ່ຽວກັບການນຳໃຊ້ເອກະສານສຶກສາອົບຮົມການເມືອງ-ແນວຄິດ ສຳລັບສະມາຊິກພັກ, ພະນັກງານ ແລະ ປະຊາຊົນ ເພື່ອກະກຽມ ແລະ ດຳເນີນກອງປະຊຸມໃຫຍ່ 3 ຂັ້ນ ຂອງພັກ ທົ່ວນະຄອນຫຼວງວຽງຈັນ.

**ຮຽນ: - ບັນດາສະຫາຍ ກຳມະການປະຈຳພັກ, ກຳມະການພັກ ນະຄອນຫຼວງວຽງຈັນ**
**- ສະຫາຍເລຂາຄະນະພັກເມືອງ, ຄະນະພັກກອງບັນຊາການ ປກສ, ປກສ ນະຄອນຫຼວງວຽງຈັນ**
**- ສະຫາຍເລຂາ ຄະນະພັກຮາກຖານ, ໜ່ວຍພັກຮາກຖານ ພະແນກການ, ອົງການທຽບເທົ່າ ພະແນກ, ຂັ້ນນະຄອນຫຼວງວຽງຈັນ ແລະ ຮາກຖານພັກ ຂັ້ນເມືອງ ທົ່ວນະຄອນຫຼວງວຽງຈັນ.**
**- ສະຫາຍຫົວໜ້າຄະນະໂຄສະນາອົບຮົມ 9 ເມືອງ ແລະ ຜູ້ເຮັດວຽກງານການເມືອງ-ແນວຄິດ ຂັ້ນພະແນກການ, ອົງການທຽບເທົ່າພະແນກ ທົ່ວນະຄອນຫຼວງວຽງຈັນ.**

- ອີງຕາມ ຄຳສັ່ງຂອງຄະນະເລຂາທິການສູນກາງພັກ ສະບັບເລກທີ 411/ຄລສພ ລົງວັນທີ 08 ສິງຫາ 2023 ວ່າດ້ວຍການກະກຽມ ແລະ ດຳເນີນກອງປະຊຸມໃຫຍ່ 3 ຂັ້ນຂອງພັກ;
- ອີງຕາມ ຄຳແນະນຳຂອງຄະນະໂຄສະນາອົບຮົມສູນກາງພັກ ສະບັບເລກທີ 34/ຄອສພ ລົງວັນທີ 15 ກັນຍາ 2023 ກ່ຽວກັບການນຳໃຊ້ເອກະສານສຶກສາອົບຮົມການເມືອງ-ແນວຄິດ ສຳລັບສະມາຊິກພັກ, ພະນັກງານ ຫຼັກແຫຼ່ງ ເພື່ອດຳເນີນກອງປະຊຸມໃຫຍ່ຂອງພັກ 3 ຂັ້ນ;
- ອີງຕາມ ມະຕິຂອງຄະນະປະຈຳພັກນະຄອນຫຼວງວຽງຈັນ ສະບັບເລກທີ 796/ຄປພ.ນວ, ລົງວັນທີ 21 ພະຈິກ 2023 ວ່າດ້ວຍການກະກຽມ ແລະ ດຳເນີນກອງປະຊຸມໃຫຍ່ຂອງພັກ ແຕ່ລະຂັ້ນ ທົ່ວນະຄອນຫຼວງວຽງຈັນ.

ຄະນະໂຄສະນາອົບຮົມ ນະຄອນຫຼວງວຽງຈັນ ອອກແຈ້ງການແນະນຳ ກ່ຽວກັບການນຳໃຊ້ເອກະສານສຶກສາອົບຮົມການເມືອງ-ແນວຄິດ ສຳລັບສະມາຊິກພັກ, ພະນັກງານ ແລະ ປະຊາຊົນ ເພື່ອຍູ້ແຮງໃຫ້ແກ່ການກະກຽມ ແລະ ດຳເນີນກອງປະຊຸມໃຫຍ່ຂອງພັກແຕ່ລະຂັ້ນ ທົ່ວນະຄອນຫຼວງວຽງຈັນ ໃຫ້ເປັນຂະບວນການຟົດຟື້ນ, ມີເນື້ອໃນທີ່ເລິກເຊິ່ງ, ສົມບູນຄົບຖ້ວນ ແລະ ເປັນເອກະພາບກັນ ໃນທົ່ວນະຄອນຫຼວງວຽງຈັນ, ດັ່ງນີ້:

1. ມອບເປັນຄວາມຮັບຜິດຊອບໂດຍກົງຂອງສະຫາຍເລຂາພັກເມືອງ; ເລຂາຄະນະພັກກອງບັນຊາການ ປກສ, ປກສ ນະຄອນຫຼວງ; ເລຂາຄະນະພັກຮາກຖານ, ໜ່ວຍພັກຮາກຖານ ພະແນກການ, ອົງການທຽບເທົ່າພະແນກ; ເລຂາໜ່ວຍພັກບ້ານ ແລະ ຮາກຖານພັກ ທົ່ວນະຄອນຫຼວງວຽງຈັນ ນຳພາຈັດຕັ້ງສຶກສາອົບຮົມການເມືອງ-ແນວຄິດ ໃຫ້ສະມາຊິກພັກ, ພະນັກງານ ແລະ ປະຊາຊົນ ໃນຂອບເຂດຄວາມຮັບຜິດຊອບ ຢ່າງເລິກເຊິ່ງ ແລະ ທົ່ວເຖິງ ຊຶ່ງໃຫ້ເອົາໃຈໃສ່ບາງບັນຫາສຳຄັນ ດັ່ງນີ້:

**1.1 ເນື້ອໃນເອກະສານສຶກສາອົບຮົມ ມີ 4 ບົດ ຄື:**

ບົດທີ 1: ຄວາມຮັບຮູ້ເຂົ້າໃຈກ່ຽວກັບ ກອງປະຊຸມໃຫຍ່ 3 ຂັ້ນຂອງພັກ.

ບົດທີ 2: ຍົກສູງຄວາມສາມາດນຳພາ ແລະ ຄວາມເປັນແບບຢ່າງນຳໜ້າຂອງພັກ.

ບົດທີ 3: ຕັ້ງໜ້າຝຶກຝົນຫຼໍ່ຫຼອມ ຄຸນທາດການເມືອງ ແລະ ຄຸນສົມບັດສິນທຳປະຕິວັດ.

ບົດທີ 4: ເດັດດ່ຽວແກ້ໄຂປະກົດການຫຍໍ້ທໍ້ ໃນຖັນແຖວພະນັກງານ, ສະມາຊິກພັກ.

**1)** ສຳລັບສຶກສາອົບຮົມໃຫ້ຄະນະພັກ, ສະມາຊິກພັກ, ພະນັກງານຫຼັກແຫຼ່ງ ຂັ້ນນະຄອນຫຼວງ, ຂັ້ນພະແນກການ, ຂັ້ນເມືອງ, ຄະນະພັກ ແລະ ສະມາຊິກພັກຂັ້ນບ້ານ ແມ່ນໃຫ້ນຳໃຊ້ເອກະສານ 4 ບົດ.

**2)** ສຳລັບສຶກສາອົບຮົມໃຫ້ພະນັກງານທົ່ວໄປ ຂັ້ນນະຄອນຫຼວງ, ຂັ້ນພະແນກການ, ຂັ້ນເມືອງ ແມ່ນໃຫ້ນຳໃຊ້ເອກະສານບົດທີ 1, 3 ແລະ 4.

**3)** ສຳລັບສຶກສາອົບຮົມໃຫ້ປະຊາຊົນແມ່ນໃຫ້ນຳໃຊ້ເອກະສານບົດທີ 1 ເປັນຕົ້ນຕໍ ສົມທົບກັບເອກະສານອື່ນໆທີ່ກ່ຽວຂ້ອງກັນ.

**1.2 ເປົ້າໝາຍສຶກສາອົບຮົມ:**

- ສະມາຊິກພັກ, ພະນັກງານຫຼັກແຫຼ່ງ ທີ່ເຮັດວຽກຢູ່ບັນດາພະແນກການ, ອົງການທຽບເທົ່າພະແນກ ແລະ ເມືອງ, ລັດວິສາຫະກິດ, ກົມກອງການຜະລິດ ໃນທົ່ວນະຄອນຫຼວງວຽງຈັນ.
- ພະນັກງານ, ລັດຖະກອນ ທີ່ເປັນວິຊາການ, ພະນັກງານຂັ້ນບ້ານ ແລະ ປະຊາຊົນໃນໜ່ວຍ 10 ຫຼັງຄາເຮືອນ ທີ່ມີອາຍຸ 18 ປີ ຂຶ້ນໄປ ຢູ່ແຕ່ລະບ້ານ ທົ່ວນະຄອນຫຼວງວຽງຈັນ.

**1.3 ຜູ້ບັນລະຍາຍເອກະສານສຶກສາອົບຮົມ:**

- ຂັ້ນພະແນກການ, ອົງການທຽບເທົ່າພະແນກ, ປກສ, ປກຊ ນະຄອນຫຼວງວຽງຈັນ ແມ່ນໃຫ້ກຳມະການປະຈຳພັກນະຄອນຫຼວງ ຜູ້ຮັບຜິດຊອບແຕ່ລະຂົງເຂດວຽກງານ; ກຳມະການພັກ ທີ່ຄອບຕຳແໜ່ງຫົວໜ້າພະແນກການ, ອົງການທຽບເທົ່າພະແນກ ນະຄອນຫຼວງວຽງຈັນ ເປັນຜູ້ນຳພາສຶກສາອົບຮົມ;
- ຂັ້ນເມືອງ: ແມ່ນກຳມະການປະຈຳພັກ ນະຄອນຫຼວງຜູ້ຊີ້ນຳເມືອງ; ເລຂາຄະນະພັກເມືອງ; ຂັ້ນຮາກຖານພັກທີ່ມີເປົ້າໝາຍຈຳນວນຫຼາຍບໍ່ສາມາດເຂົ້າຮ່ວມຢູ່ຂັ້ນເມືອງໄດ້ໝົດ ກໍໃຫ້ສະຫາຍກຳມະການປະຈຳພັກເມືອງຜູ້ຊີ້ນຳຂົງເຂດນັ້ນ ຫຼື ສະຫາຍເລຂາພັກບ່ອນນັ້ນ ເປັນຜູ້ນຳພາສຶກສາອົບຮົມ;
- ຂັ້ນບ້ານ: ແມ່ນກຳມະການປະຈຳພັກເມືອງ, ກຳມະການພັກເມືອງ ຜູ້ຊີ້ນຳບ້ານ ນຳພາ ຫຼື ຊີ້ນຳບັນຊາໃຫ້ເລຂາ ໜ່ວຍພັກບ້ານ ສຶກສາອົບຮົມໃຫ້ສະມາຊິກພັກ, ພະນັກງານຂັ້ນບ້ານ ແລະ ປຸກລະດົມແນວຄິດຂອງປະຊາຊົນໜ່ວຍ 10 ຫຼັງຄາເຮືອນ ຕາມຈຸດພິເສດຕົວຈິງຂອງແຕ່ລະບ່ອນ.

**1.4 ຮູບການຈັດຕັ້ງສຶກສາອົບຮົມ:**

1) ການຈັດຕັ້ງສຶກສາອົບຮົມການເມືອງ-ແນວຄິດໃຫ້ເປົ້າໝາຍຕ່າງໆ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ໃຫ້ຈັດເປັນວາລະສະເພາະ ໂດຍອີງໃສ່ຄວາມເໝາະສົມຂອງສະພາບການ ແລະ ເງື່ອນໄຂອຳນວຍຕົວຈິງ, (ໃຊ້ເວລາ 01 ວັນ ຫຼື ຕາມສະພາບການຕົວຈິງ) ແລະ ໃຫ້ສຳເລັດກ່ອນການເປີດກອງປະຊຸມໃຫຍ່ຂອງພັກຂັ້ນຕົນ.

2) ສຳລັບຂັ້ນບ້ານ ນອກຈາກການສຶກສາອົບຮົມຜ່ານການບັນຍາຍເອກະສານບົດທີ1 ແລ້ວ, ໃຫ້ມີການໂຄສະນາເຜີຍແຜ່ຜ່ານທາງໂທລະໂຄ່ງຕື່ມອີກ.

**2.** ຄະນະໂຄສະນາອົບຮົມນະຄອນຫຼວງວຽງຈັນ ຈະສະໜອງເນື້ອໃນເອກະສານໃຫ້ສະເພາະ ຄະນະປະຈຳພັກນະຄອນຫຼວງ, ຂັ້ນພະແນກການ, ຂັ້ນເມືອງ ພາກສ່ວນລະ 01 ຊຸດ; ສຳລັບແຕ່ລະຮາກຖານພັກ ມອບໃຫ້ເປັນຄວາມຮັບຜິດຊອບຂອງສະຫາຍເລຂາພັກເມືອງ; ເລຂາຄະນະພັກກອງບັນຊາການ ປກຊ, ປກສ ນະຄອນຫຼວງ; ເລຂາຄະນະພັກຮາກຖານ, ເລຂາໜ່ວຍພັກຮາກຖານ ພະແນກການ-ອົງການທຽບເທົ່າພະແນກ ອຳນວຍເງື່ອນໄຂດ້ານງົບປະມານ ເພື່ອສະໜອງເອກະສານສຶກສາອົບຮົມການເມືອງ-ແນວຄິດ ໃຫ້ທຸກພາກສ່ວນໃນຄວາມຮັບຜິດຊອບຕົນ.

ຄະນະໂຄສະນາອົບຮົມນະຄອນຫຼວງ, ຄະນະໂຄສະນາອົບຮົມເມືອງ ແລະ ຜູ້ເຮັດວຽກງານການເມືອງ-ແນວຄິດຂອງພະແນກການ-ອົງການທຽບເທົ່າພະແນກ ເປັນໃຈກາງປະສານງານກັບທຸກພາກສ່ວນ, ສົມທົບດ້ານວິຊາການ ແລະ ເນື້ອໃນເອກະສານ ໃນການຈັດຕັ້ງສຶກສາອົບຮົມ ພ້ອມທັງລົງຕິດຕາມ, ຊຸກຍູ້, ເກັບກຳ, ສັງລວມ ແລະ ສະຫຼຸບລາຍງານສະພາບການຈັດຕັ້ງປະຕິບັດ.

3. ພາຍຫຼັງການຈັດຕັ້ງສຶກສາອົບຮົມສຳເລັດແລ້ວ ໃຫ້ແຕ່ລະພາກສ່ວນ ລາຍງານຕໍ່ຄະນະພັກຂັ້ນເທິງ ແລະ ຄະນະໂຄສະນາອົບຮົມນະຄອນຫຼວງວຽງຈັນ ຮັບຊາບ ທັນຕາມກຳນົດເວລາ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງບັນດາສະຫາຍ ເພື່ອຮັບຊາບ ແລະ ຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ.

**ຫົວໜ້າຄະນະໂຄສະນາອົບຮົມ ນະຄອນຫຼວງວຽງຈັນ**

ປອ. ຊົງເລົ໋າ ຢົງບູ

# ບົດທີ 1
# ຄວາມເຂົ້າໃຈກ່ຽວກັບ
# ການດຳເນີນກອງປະຊຸມໃຫຍ່ 3 ຂັ້ນ ຂອງພັກ

**✱ ຈຸດປະສົງ-ລະດັບຄາດໝາຍ.**

1. ເພື່ອເຮັດໃຫ້ພະນັກງານ, ສະມາຊິກພັກ ມີຄວາມຮັບຮູ້, ເຂົ້າໃຈກ່ຽວກັບຄວາມໝາຍ ແລະ ຄວາມສຳຄັນຂອງການດຳເນີນກອງປະຊຸມໃຫຍ່ 3 ຂັ້ນ ຂອງພັກ.

2. ເຂົ້າໃຈກ່ຽວກັບເນື້ອໃນຕ້ອງກຳແໜ້ນ ໃນການດຳເນີນກອງປະຊຸມໃຫຍ່ 3 ຂັ້ນ ຂອງພັກ ແລະ ເປັນເຈົ້າການນຳເອົາມະຕິກອງປະຊຸມ ໄປຈັດຕັ້ງຜັນຂະຫຍາຍ ໃຫ້ເກີດຜົນເປັນຈິງ.

3. ບົນພື້ນຖານຄວາມຮັບຮູ້, ເຂົ້າໃຈດັ່ງກ່າວ ເພື່ອເປັນການປັບປຸງພາຍໃນພັກ ໃຫ້ມີຄວາມປອດໃສ, ເຂັ້ມແຂງ ແລະ ໜັກແໜ້ນ ຮັບປະກັນການກໍ່ສ້າງພັກຕາມ 5 ຫຼັກການ ແລະ 3 ທິດນຳຂອງພັກ, ຖືກຕ້ອງຕາມກົດລະບຽບພັກ; ເພື່ອຄັດເລືອກບຸກຄະລາກອນ ທີ່ມີມາດຕະຖານ, ເງື່ອນໄຂຕາມທີ່ກຳນົດໄວ້ ປະກອບເຂົ້າໃນການຈັດຕັ້ງແຕ່ລະຂັ້ນ ໃນລະບົບການເມືອງ, ເພື່ອບຸກທະລຸການສ້າງການຫັນປ່ຽນຢ່າງແຂງແຮງ ແລະ ເລິກເຊິ່ງວຽກງານພະນັກງານຂອງຂະແໜງການ, ທ້ອງຖິ່ນ, ສາມາດຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງໃນໄລຍະໃໝ່ ແລະ ເພື່ອສ້າງຄວາມເຊື່ອໝັ້ນ, ສັດທາຂອງມະຫາຊົນ ຕໍ່ການນຳພາຂອງຄະນະພັກແຕ່ລະຂັ້ນ ກໍຄື ພະນັກງານ, ສະມາຊິກພັກ.

## I. ຄວາມໝາຍ ແລະ ຄວາມສຳຄັນ ຂອງການດຳເນີນກອງປະຊຸມໃຫຍ່ 3 ຂັ້ນ ຂອງພັກ.

### 1. ຄວາມໝາຍ ຂອງການດຳເນີນກອງປະຊຸມໃຫຍ່ 3 ຂັ້ນ ຂອງພັກ.

ການດຳເນີນກອງປະຊຸມໃຫຍ່ 3 ຂັ້ນ ຂອງພັກ ແມ່ນການດຳເນີນກອງປະຊຸມພັກ ຂັ້ນສູນກາງ; ຂັ້ນແຂວງ, ນະຄອນຫຼວງວຽງຈັນ, ເມືອງ-ນະຄອນ; ຂັ້ນການຈັດຕັ້ງຮາກຖານພັກ; ແມ່ນຫຼັກການຈັດຕັ້ງຂອງພັກເຮົາ ມີຄວາມໝາຍ ໃນການປັບປຸງປົວແປງພາຍໃນພັກ ໃຫ້ມີຄວາມປອດໃສ, ເຂັ້ມແຂງ ແລະ ໜັກແໜ້ນ ທັງຮັບປະກັນການກໍ່ສ້າງພັກຕາມ 5 ຫຼັກການ ແລະ 3 ທິດນຳຂອງພັກ, ຖືກຕ້ອງຕາມກົດລະບຽບພັກ; ເປັນບັ້ນດຳເນີນຊີວິດການເມືອງ ໃນທົ່ວອົງຄະນະພັກ ແນໃສ່ຍົກສູງຄວາມສາມາດນຳພາຂອງຄະນະພັກ ນັບແຕ່ຂັ້ນຮາກຖານຂຶ້ນມາ ໃຫ້ສົມຄູ່ກັບການເລັ່ງທວງ ຂອງໜ້າທີ່ການເມືອງໃນໄລຍະໃໝ່, ຮັບປະກັນການຄົ້ນຄວ້າ, ເລືອກເຟັ້ນບຸກຄະລາກອນ ປະກອບເຂົ້າໃນຄະນະພັກແຕ່ລະຂັ້ນ ໃຫ້ຖືກຕ້ອງ, ຄົບຖ້ວນ ຕາມມາດຕະຖານ, ເງື່ອນໄຂທີ່ໄດ້ກຳນົດໄວ້ ເພື່ອເປັນຫຼັກແຫຼ່ງນຳພາ ຕະຫຼອດສະໄໝ ຂອງທຸກອົງຄະນະພັກ.

### 2. ຄວາມສຳຄັນ ຂອງການດຳເນີນກອງປະຊຸມໃຫຍ່ 3 ຂັ້ນ ຂອງພັກ.

ເນື່ອງຈາກວ່າ ການດຳເນີນກອງປະຊຸມໃຫຍ່ 3 ຂັ້ນ ຂອງພັກ ແມ່ນຕ້ອງໄດ້ໃຊ້ເວລາ 5 ປີໃດ ດຳເນີນກອງປະຊຸມໃຫຍ່ຂັ້ນຂອງຕົນ 1 ຄັ້ງ; ສະນັ້ນ, ຈຶ່ງມີຄວາມສຳຄັນທີ່ສຸດ ສຳລັບສະມາຊິກພັກ, ເພາະວ່າ ຖ້າສະມາຊິກພັກສະຫາຍໃດ ຫາກໄດ້ເລືອກເຂົ້າໃນຄະນະບໍລິຫານງານພັກ ແຕ່ລະຂັ້ນແລ້ວ ຖືວ່າ ແມ່ນກຽດ ແລະ ສັກສີ ຂອງສະມາຊິກພັກຜູ້ນັ້ນ ທີ່ຈະເຮັດໜ້າທີ່ໃນການນຳພາ-ບັນຊາ ເພາະວ່າ ຜູ້ທີ່ໄດ້ຮັບເລືອກ ເຂົ້າໃນຄະນະບໍລິຫານງານພັກ ລ້ວນແຕ່ແມ່ນຜູ້ທີ່ມີມາດຕະຖານ ເງື່ອນໄຂຄົບຖ້ວນ ຕາມກົດລະບຽບຂອງພັກ ໄດ້ກຳນົດ

ໄວ້; ກົງກັນຂ້າມ, ຖ້າຫາກຄັດເລືອກເອົາຜູ້ທີ່ບໍ່ມີເງື່ອນໄຂມາດຕະຖານຄົບຖ້ວນ ເຂົ້າໃນຄະນະບໍລິຫານງານພັກ ຈະເຮັດໃຫ້ພັກສູນເສຍຄວາມສາມາດ ໃນການນໍາພາ ເພາະສະມາຊິກພັກຜູ້ນັ້ນ ບໍ່ມີຄວາມຮູ້, ຄວາມສາມາດ, ບໍ່ມີຄຸນທາດການເມືອງໜັກແໜ້ນ. ສະນັ້ນ, ການດໍາເນີນກອງປະຊຸມໃຫຍ່ 3 ຂັ້ນ ຂອງພັກ ຈຶ່ງມີຄວາມໝາຍສໍາຄັນ ສໍາລັບພັກກໍາອໍານາດ.

## II. ເນື້ອໃນຕ້ອງກໍາແໜ້ນ ໃນການດໍາເນີນກອງປະຊຸມໃຫຍ່ 3 ຂັ້ນ ຂອງພັກ.

### 1. ບົດລາຍງານການເມືອງ.

ລາຍງານການເມືອງ ຕ້ອງສ່ອງແສງໃຫ້ເຫັນສະພາບຕົວຈິງ, ເງື່ອນໄຂ, ຈຸດພິເສດ ແລະ ໜ້າທີ່ການເມືອງ ຂອງອົງຄະນະພັກຂັ້ນຕົນ; ຕ້ານທັດສະນະລອກແບບ ແລະ ຈົດກ່າຍຈາກພາກສ່ວນອື່ນ. ໂຄງປະກອບຂອງລາຍງານການເມືອງ ແບ່ງອອກເປັນ 2 ພາກ ຄື:

**ພາກທີ I:** ຕີລາຄາຮອບດ້ານ ຕໍ່ການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຂອງຄະນະພັກຂັ້ນຕົນ ໃນ 5 ປີຜ່ານມາ ຍົກໃຫ້ເຫັນຜົນງານທີ່ພົ້ນເດັ່ນ, ຈຸດອ່ອນ-ຂໍ້ຄົງຄ້າງ, ສາເຫດ, ສິ່ງທ້າທາຍ ແລະ ບົດຮຽນທີ່ຖອດຖອນໄດ້ ໃນການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່, ແຜນພັດທະນາເສດຖະກິດ-ສັງຄົມ; ການຕີລາຄາຕ້ອງໃຫ້ເລິກເຊິ່ງ, ພາວະວິໄສ, ກົງໄປກົງມາ ແລະ ຖືກຕ້ອງກັບສະພາບຄວາມເປັນຈິງ.

**ພາກທີ II:** ກໍານົດທິດທາງ, ໜ້າທີ່, ນະໂຍບາຍ, ກົນໄກ ແລະ ບັນດາຄາດໝາຍໃຫຍ່ ທີ່ຈະຕ້ອງສູ້ຊົນນໍາພາຈັດຕັ້ງປະຕິບັດໃນຕໍ່ໜ້າ ໃຫ້ສອດຄ່ອງກັບແນວທາງນະໂຍບາຍຂອງພັກ ໃນແຕ່ລະໄລຍະ, ວິໄສທັດ, ຍຸດທະສາດ ການພັດທະນາເສດຖະກິດ-ສັງຄົມ ຂອງລັດ ແລະ ສະພາບຄວາມເປັນຈິງ ກໍຄື ທ່າແຮງບົ່ມຊ້ອນຂອງທ້ອງຖິ່ນ ແລະ ຂະແໜງການ (ລະອຽດຈະມີເອກະສານແນະນໍາຂອງທ້ອງຖິ່ນ).

### 2. ແຜນພັດທະນາເສດຖະກິດ-ສັງຄົມ ຂອງທ້ອງຖິ່ນ ຫຼື ແຜນພັດທະນາຂະແໜງການ.

ໂຄງປະກອບຮ່າງ ແຜນພັດທະນາເສດຖະກິດ-ສັງຄົມ ຂອງທ້ອງຖິ່ນ ຫຼື ແຜນພັດທະນາຂະແໜງການປະກອບດ້ວຍ 2 ພາກ ຄື:

**ພາກທີ I:** ຕີລາຄາການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມ ຂອງທ້ອງຖິ່ນ ຫຼື ແຜນພັດທະນາຂະແໜງການຕົນ ໃນໄລຍະ 5 ປີ ຜ່ານມາ.

**ພາກທີ II:** ກໍານົດທິດທາງ, ໜ້າທີ່, ມາດຕະການ, ນະໂຍບາຍ ແລະ ກົນໄກ ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ຂອງທ້ອງຖິ່ນ ຫຼື ແຜນພັດທະນາຂະແໜງການຕົນ 5 ປີຕໍ່ໜ້າ ໃຫ້ສອດຄ່ອງກັບວິໄສທັດ, ຍຸດທະສາດ ການພັດທະນາເສດຖະກິດ-ສັງຄົມຂອງລັດ, ສອດຄ່ອງກັບຄວາມສາມາດ ແລະ ທ່າແຮງບົ່ມຊ້ອນ ຂອງທ້ອງຖິ່ນ ແລະ ຂະແໜງການ; ກໍານົດທິດທາງໃນການແກ້ໄຂບັນຫາທາງດ້ານເສດຖະກິດ, ບັນຫາດ້ານການເງິນ-ເງິນຕາຕ່າງໆ ທີ່ເປັນສິ່ງກີດໜ່ວງ ຕໍ່ການພັດທະນາເສດຖະກິດ-ສັງຄົມ ຂອງທ້ອງຖິ່ນ ແລະ ຂະແໜງການ (ລະອຽດຈະມີເອກະສານແນະນໍາ ຂອງກະຊວງ, ອົງການ).

**3. ດ້ານບຸກຄະລາກອນ.**

ສໍາລັບບຸກຄະລາກອນ ທີ່ຈະເປັນຄະນະພັກ ຂອງແຕ່ລະຂັ້ນນັ້ນ, ແມ່ນໃຫ້ປະກອບມີ 3 ຮຸ່ນ ຄື: ຮຸ່ນອາວຸໂສ, ຮຸ່ນກາງ, ຮຸ່ນໜຸ່ມ ແລະ ເພດຍິງ ປະກອບເຂົ້າໃນຄະນະພັກນັ້ນໆ. ສໍາລັບຮຸ່ນໜຸ່ມ ຕ້ອງແມ່ນຜູ້ທີ່ໜຸ່ມແໜ້ນ ທາງດ້ານເນື້ອໃນ ແລະ ຄຸນສົມບັດສິນທໍາປະຕິວັດ, ມີຄວາມຮູ້ ຄວາມສາມາດ ໃນລະດັບແນ່ນອນ (ລາຍລະອຽດ ໃຫ້ອີງໃສ່ຄໍາສັ່ງແນະນໍາ ຂອງຄະນະເລຂາທິການສູນກາງພັກ ສະບັບເລກທີ 411/ຄລສພ, ລົງວັນທີ 8 ສິງຫາ 2023 ແລະ ຄໍາແນະນໍາ ຂອງຄະນະຈັດຕັ້ງສູນກາງພັກ ສະບັບເລກທີ 211/ຄຈສພ, ລົງວັນທີ 16 ສິງຫາ 2023).

**4. ກອງປະຊຸມໃຫຍ່ 3 ຂັ້ນ ຂອງພັກ.**

ກອງປະຊຸມໃຫຍ່ 3 ຂັ້ນ ຂອງພັກ ປະກອບມີ ດັ່ງນີ້:

**1. ຂັ້ນສູນກາງ.**

ກອງປະຊຸມຂັ້ນນີ້ ແມ່ນກອງປະຊຸມໃຫຍ່ ຜູ້ແທນທົ່ວປະເທດຂອງພັກ ຫຼື ເອີ້ນວ່າ ກອງປະຊຸມໃຫຍ່ຂອງພັກ ເຮັດໜ້າທີ່ ດັ່ງນີ້:

①. ພິຈາລະນາ ແລະ ຮັບຮອງ ເອົາລາຍງານການເມືອງ ຂອງຄະນະບໍລິຫານງານສູນກາງພັກ; ໃຫ້ທິດຊີ້ນໍາ ຕໍ່ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ແຫ່ງລັດ.

②. ພິຈາລະນາ ແລະ ຮັບຮອງ ເອົາກົດລະບຽບພັກ.

③. ພິຈາລະນາ ແລະ ຮັບຮອງ ເອົາບົດສໍາຫຼວດການນໍາພາລວມ ຂອງຄະນະບໍລິຫານງານສູນກາງພັກ ຊຸດເກົ່າ.

④. ເລືອກຕັ້ງ ຄະນະບໍລິຫານງານສົມບູນ ແລະ ສໍາຮອງສູນກາງພັກ ຊຸດໃໝ່.

⑤. ພິຈາລະນາ ແລະ ຮັບຮອງ ເອົາມະຕິກອງປະຊຸມໃຫຍ່ ຜູ້ແທນທົ່ວປະເທດຂອງພັກ.

⑥. ເລືອກຕັ້ງ ກໍາມະການກົມການເມືອງສູນກາງພັກ.

⑦. ເລືອກຕັ້ງ ເລຂາທິການໃຫຍ່ ຄະນະບໍລິຫານງານສູນກາງພັກ.

⑧. ເລືອກຕັ້ງ ກໍາມະການ ຄະນະເລຂາທິການສູນກາງພັກ.

⑨. ເລືອກຕັ້ງ ຜູ້ປະຈໍາການ ຄະນະເລຂາທິການສູນກາງພັກ.

⑩. ເລືອກຕັ້ງ ປະທານ ແລະ ຮອງປະທານ ຄະນະກວດກາສູນກາງພັກ.

**2. ຂັ້ນກະຊວງ, ອົງການ, ແຂວງ, ນະຄອນຫຼວງວຽງຈັນ, ເມືອງ ແລະ ນະຄອນ.**

①. ພິຈາລະນາ ແລະ ຮັບຮອງ ເອົາລາຍງານການເມືອງ ຂອງຄະນະບໍລິຫານງານພັກ ແລະ ໃຫ້ທິດຊີ້ນໍາ ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຢູ່ຂັ້ນຕົນ.

②. ພິຈາລະນາ ແລະ ຮັບຮອງ ເອົາບົດສໍາຫຼວດການນໍາພາ ຂອງຄະນະບໍລິຫານງານພັກ ຊຸດເກົ່າ.

③. ເລືອກຕັ້ງ ຄະນະບໍລິຫານງານພັກ ຊຸດໃໝ່ ແລະ ເລືອກຕັ້ງຜູ້ແທນ ໄປຮ່ວມກອງປະຊຸມໃຫຍ່ອົງຄະນະພັກຂັ້ນເທິງ.

④. ພິຈາລະນາ ແລະ ຮັບຮອງ ເອົາມະຕິຂອງກອງປະຊຸມໃຫຍ່ຂັ້ນຕົນ.

⑤. ເລືອກຕັ້ງ ຄະນະປະຈໍາພັກ; ຈໍານວນຄະນະປະຈໍາພັກ ບໍ່ໃຫ້ເກີນ 1/3 ຂອງຈໍານວນ ຄະນະບໍລິຫານງານພັກທັງໝົດ.

⑥. ເລືອກຕັ້ງ ເລຂາ ແລະ ຮອງເລຂາ ຄະນະພັກ.

⑦. ເລືອກຕັ້ງ ປະທານ ແລະ ຮອງປະທານ ຄະນະກວດກາພັກ.

**3. ຂັ້ນຮາກຖານພັກ.**

①. ພິຈາລະນາ ແລະ ຮັບຮອງ ເອົາລາຍງານການເມືອງ; ໃຫ້ທິດຊີ້ນຳ ແຜນພັດທະນາກົມກອງ ຫຼື ແຜນພັດທະນາເສດຖະກິດ-ສັງຄົມ ຂອງບ້ານ.

②. ພິຈາລະນາ ແລະ ຮັບຮອງ ເອົາບົດສຳຫຼວດການນຳພາລວມ ຂອງຄະນະພັກ ຊຸດເກົ່າ.

③. ເລືອກຕັ້ງຄະນະພັກຮາກຖານ, ຄະນະໜ່ວຍພັກ ຊຸດໃໝ່ ແລະ ເລືອກຕັ້ງເອົາຜູ້ແທນ ໄປຮ່ວມກອງປະຊຸມໃຫຍ່ ຂອງອົງຄະນະພັກຂັ້ນເທິງ (ຖ້າມີ); ໜ່ວຍພັກທີ່ມີສະມາຊິກພັກສົມບູນບໍ່ຮອດ 9 ສະຫາຍ ໃຫ້ກອງປະຊຸມໃຫຍ່ເລືອກຕັ້ງເອົາແຕ່ເລຂາ ແລະ ຮອງເລຂາໜ່ວຍພັກ.

④. ພິຈາລະນາ ແລະ ຮັບຮອງ ເອົາມະຕິກອງປະຊຸມໃຫຍ່ຂັ້ນຕົນ.

⑤. ຄະນະພັກຮາກຖານໃດ ທີ່ມີຈຳນວນກຳມະການ ໃນຄະນະພັກແຕ່ 9 ສະຫາຍຂຶ້ນໄປ ໃຫ້ເລືອກຕັ້ງຄະນະປະຈຳ, ເລຂາ, ຮອງເລຂາຄະນະພັກ ແລະ ເລືອກຕັ້ງປະທານ, ຮອງປະທານກວດກາພັກ. ກໍລະນີ ທີ່ຄະນະພັກຮາກຖານໃດ ທີ່ມີກຳມະການພັກບໍ່ເຖິງ 9 ສະຫາຍ ໃຫ້ເລືອກຕັ້ງເລຂາ, ຮອງເລຂາຄະນະພັກ ແລະ ປະທານ, ຮອງປະທານກວດກາພັກ.

⑥. ໜ່ວຍພັກໃດ ທີ່ມີກຳມະການຄະນະໜ່ວຍພັກ ໃຫ້ເລືອກຕັ້ງເອົາເລຂາ, ຮອງເລຂາຄະນະພັກ ແລະ ຜູ້ກວດກາໜ່ວຍພັກ; ໜ່ວຍພັກໃດ ທີ່ບໍ່ມີກຳມະການຄະນະໜ່ວຍພັກ ໃຫ້ເລືອກຕັ້ງເອົາແຕ່ເລຂາ ແລະ ຮອງເລຂາໜ່ວຍພັກ.

**5. ການນຳເອົາຜົນກອງປະຊຸມໄປຈັດຕັ້ງປະຕິບັດ.**

①. ພາຍຫຼັງສຳເລັດກອງປະຊຸມໃຫຍ່ ຂັ້ນຂອງຕົນແລ້ວ ຕ້ອງນຳເອົາເນື້ອໃນ, ມະຕິກອງປະຊຸມໄປຈັດຕັ້ງເຊື່ອມຊຶມ ແລະ ເຜີຍແຜ່ ຜົນສຳເລັດກອງປະຊຸມໃຫ້ສະມາຊິກພັກ, ພະນັກງານ ໃຫ້ຮັບຮູ້, ເຂົ້າໃຈເລິກເຊິ່ງ, ທົ່ວເຖິງ. ຕິດພັນກັບການເຜີຍແຜ່ມະຕິກອງປະຊຸມໃຫຍ່ຂັ້ນຂອງຕົນ ໃຫ້ເປັນຮູບປະທຳ.

②. ນຳເອົາຜົນສຳເລັດ ຂອງກອງປະຊຸມໃຫຍ່ ຜູ້ແທນທົ່ວປະເທດ ໄປແຈ້ງໃຫ້ປະຊາຊົນໄດ້ຮັບຮູ້ຢ່າງທົ່ວເຖິງ ເປັນຕົ້ນແມ່ນ ຈຳນວນຄະນະບໍລິຫານງານສູນກາງພັກ, ກົມການເມືອງ, ຄະນະເລຂາທິການສູນກາງພັກ ແລະ ເລຂາທິການໃຫຍ່.

③. ສຳລັບພະນັກງານ, ສະມາຊິກພັກ ໃຫ້ນຳເອົາເນື້ອໃນ, ມະຕິກອງປະຊຸມດັ່ງກ່າວ ມາສ້າງເປັນແຜນວຽກ, ແຜນດຳເນີນງານ, ແຜນການ, ໂຄງການເຄື່ອນໄຫວລະອຽດ ໃນແຕ່ລະໄລຍະ, ຕາມໜ້າທີ່ຄວາມຮັບຜິດຊອບຂອງຕົນ ໃຫ້ລະອຽດຈະແຈ້ງ ແລະ ດຳເນີນການຈັດຕັ້ງປະຕິບັດ ຕາມເນື້ອໃນຈິດໃຈກອງປະຊຸມດັ່ງກ່າວ ຢ່າງມີປະສິດທິຜົນ.

## III. ທິດທາງໃນການກະກຽມກອງປະຊຸມໃຫຍ່ 3 ຂັ້ນ ຂອງພັກ.

1. ໃຫ້ຄະນະພັກກະຊວງ, ອົງການ ແລະ ທ້ອງຖິ່ນ ເພີ່ມທະວີວຽກງານນຳພາສຶກສາອົບຮົມການເມືອງ-ແນວຄິດ, ຍູ້ແຮງຂະບວນການຮອບດ້ານ ຕິດພັນກັບການປະຕິບັດຂໍ້ແຂ່ງຂັນ ຮັກຊາດ ແລະ ພັດທະນາ ໂດຍສະເພາະ ແມ່ນການປັບປຸງກໍ່ສ້າງພັກ-ພະນັກງານ, ປັບປຸງກົງຈັກການຈັດຕັ້ງ ເພື່ອເປັນກຳລັງແຮງໃນການສືບຕໍ່ຈັດຕັ້ງປະຕິບັດມະຕິ ໃນທ້າຍສະໄໝ ໃຫ້ສາມາດບັນລຸຄາດໝາຍສູ້ຊົນຕ່າງໆ ທີ່ກອງປະຊຸມໃຫຍ່ຂັ້ນຂອງຕົນໄດ້ວາງອອກໃຫ້ມີຜົນສຳເລັດ; ຈຸດສຸມ ແມ່ນເລັ່ງໃສ່ແກ້ໄຂບັນຫາຕົວຈິງທີ່ຕັ້ງຂຶ້ນ ຊຶ່ງເປັນບັນຫາເຄັ່ງຮ້ອນ,

ເປັນຕົ້ນແມ່ນ ບັນຫາເງິນເຟີ້, ອັດຕາແລກປ່ຽນ, ໜີ້ສິນ, ການຜະລິດເປັນສິນຄ້າ, ການພັດທະນາຊົນນະບົດ, ການແກ້ໄຂຄວາມທຸກຍາກຂອງປະຊາຊົນ ແກ້ໄຂປະກົດການຫຍໍ້ທໍ້ຕ່າງໆ ໃນກົງຈັກການຈັດຕັ້ງພັກ-ລັດ ແລະ ໃນສັງຄົມ ໃຫ້ມີການຫັນປ່ຽນຢ່າງເດັ່ນຊັດຂຶ້ນ; ປຸກລະດົມປະຊາຊົນບັນດາເຜົ່າ ໃຫ້ເປັນເຈົ້າຕົນເອງ ແລະ ເຂົ້າຮ່ວມຂະບວນການຕ່າງໆ ຢ່າງແຂງແຮງ ແລະ ກວ້າງຂວາງ.

2. ຖືສຳຄັນ ແລະ ເອົາໃຈໃສ່ ກະກຽມດ້ານເນື້ອໃນຂອງກອງປະຊຸມໃຫຍ່ ແຕ່ລະອົງຄະນະພັກ ໃຫ້ຮັບປະກັນເນື້ອໃນ ຢ່າງເລິກເຊິ່ງ, ແທດກັບຕົວຈິງ ແລະ ສາມາດຈັດຕັ້ງປະຕິບັດໃຫ້ເປັນຈິງ.

3. ຕ້ອງຄັດເລືອກໃຫ້ໄດ້ ພະນັກງານນຳພາ-ຄຸ້ມຄອງ ແລະ ສືບທອດປ່ຽນແທນ ທີ່ຮັບປະກັນຄຸນນະພາບ, ມີມາດຕະຖານ, ເງື່ອນໄຂຄົບຖ້ວນ ໂດຍສະເພາະ ດ້ານຄຸນທາດການເມືອງ ແລະ ຄຸນສົມບັດສິນທຳປະຕິວັດ, ບໍລິສຸດຜຸດຜ່ອງຕໍ່ອຸດົມການຂອງພັກ, ຮັບໃຊ້ປະເທດຊາດ ແລະ ປະຊາຊົນຢ່າງແທ້ຈິງ ເຂົ້າໃນໂຄງປະກອບບຸກຄະລາກອນ ທີ່ຈະສະໜັກເຂົ້າເປັນຄະນະພັກ ຊຸດໃໝ່ ໃຫ້ມີຄວາມຕໍ່ເນື່ອງ ແລະ ເປັນລະບົບ ທັງ 3 ຮຸ່ນພະນັກງານ, ມີສັດສ່ວນເພດ, ເຜົ່າ ທີ່ເໝາະສົມສອດຄ່ອງຕາມເງື່ອນໄຂ, ຈຸດພິເສດຂອງທ້ອງຖິ່ນ, ຂົງເຂດ ກໍຄື ຂະແໜງການນັ້ນໆ.

**ສັງລວມແລ້ວ:** ການດຳເນີນກອງປະຊຸມໃຫຍ່ 3 ຂັ້ນ ຂອງພັກ ແມ່ນການຄັດເລືອກເອົາຜູ້ນຳພາ ທີ່ມີຄວາມຮູ້, ຄວາມສາມາດ, ມີທັດສະນະຮັບໃຊ້ຊາດ, ຮັບໃຊ້ປະຊາຊົນ ເຂົ້າໃນຄະນະພັກແຕ່ລະຂັ້ນ ເພື່ອນຳພາສ້າງສາພັດທະນາປະເທດຊາດ, ແມ່ນການດຳເນີນຊີວິດການເມືອງ ທ້າຍສະໄໝ ຂອງຄະນະບໍລິຫານງານພັກແຕ່ລະຂັ້ນ ແມ່ນບັ້ນດຳເນີນຊີວິດການເມືອງ ເພື່ອຕີລາຄາການນຳພາລວມ, ສຳຫຼວດກວດກາ, ຕີລາຄາຄວາມຮັບຜິດຊອບຂອງບຸກຄົນ ຄະນະພັກ ຕະຫຼອດສະໄໝຜ່ານມາ. ສະນັ້ນ, ເພື່ອຮັບປະກັນ ໃຫ້ການດຳເນີນກອງປະຊຸມໃຫຍ່ 3 ຂັ້ນ ຂອງພັກ ໃຫ້ມີຄຸນນະພາບ, ຖືກຕ້ອງຕາມຕົວຈິງ ກ່ອນອື່ນໝົດ ບັນດາສະຫາຍຄະນະພັກຕ້ອງຍົກສູງຄວາມຮັບຜິດຊອບ ຕີລາຄາການຈັດຕັ້ງປະຕິບັດໜ້າທີ່ການເມືອງ ຂອງຕົນເອງຢ່າງພາວະວິໄສ, ໄປຄຽງຄູ່ກັບການຕິຊົມຕົນເອງ ແລະ ຕິຊົມ ຊຶ່ງກັນ ແລະ ກັນ ຢ່າງຈິງໃຈ; ພ້ອມກັນນີ້ ກໍເອົາໃຈໃສ່ກວດກາຕີລາຄາກ່ຽວກັບການແກ້ໄຂຈຸດອ່ອນ, ຂໍ້ຄົງຄ້າງ ຈາກຄຳຕຳນິສິ່ງຂ່າວຕ່າງໆ ຂອງການຈັດຕັ້ງພັກ, ສະມາຊິກພັກ, ພະນັກງານ ຕໍ່ການນຳພາລວມຂອງຄະນະພັກ ແລະ ຕໍ່ແຕ່ລະສະຫາຍ ໃນຄະນະພັກ ໃນໄລຍະຜ່ານມາ.

# ບົດທີ 2

# ຍົກສູງຄວາມສາມາດນຳພາ ແລະ ຄວາມເປັນແບບຢ່າງນຳໜ້າຂອງພັກ

**✱ ຈຸດປະສົງ-ລະດັບຄາດໝາຍ.**

1. ເພື່ອເຮັດໃຫ້ພະນັກງານ, ສະມາຊິກພັກ ມີຄວາມຮັບຮູ້, ເຂົ້າໃຈ ກ່ຽວກັບຄວາມຈຳເປັນ ແລະ ຄວາມຮຽກຮ້ອງຕ້ອງການ ໃນການຍົກສູງຄວາມສາມາດນຳພາ ແລະ ຄວາມເປັນແບບຢ່າງນຳໜ້າຂອງພັກເຮົາ.

2. ເຂົ້າໃຈກ່ຽວກັບ ການຍົກສູງຄວາມສາມາດ ນຳພາຂອງພັກ ແມ່ນປັດໄຈຕັດສິນໄຊຊະນະຂອງ ພາລະກິດປະຕິວັດ ຢູ່ປະເທດເຮົາ ແລະ ທິດທາງຍົກສູງຄວາມສາມາດນຳພາ ແລະ ຄວາມເປັນແບບຢ່າງນຳໜ້າ ຂອງພັກເຮົາ ໃນຕໍ່ໜ້າ.

3. ບົນພື້ນຖານຄວາມຮັບຮູ້, ເຂົ້າໃຈດັ່ງກ່າວ ສະມາຊິກພັກ, ພະນັກງານ ຕ້ອງຝຶກຝົນຫຼໍ່ຫຼອມຕົນ ເອງ ໃຫ້ມີຄວາມສາມາດ ນຳພາເປັນແບບຢ່າງນຳໜ້າ ເພື່ອຍົກລະດັບຄວາມສາມາດນຳພາຂອງຕົນ ໃຫ້ສົມຄູ່ ກັບຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງ ໃນໄລຍະໃໝ່ ຂອງການປະຕິວັດ ແລະ ສາມາດນຳພາ ພາ ລະກິດປະຕິວັດໄປສູ່ຈຸດໝາຍ ທີ່ພັກເຮົາກຳນົດອອກ.

## I. ຄວາມຈຳເປັນ ແລະ ຄວາມຮຽກຮ້ອງຕ້ອງການ ໃນການຍົກສູງຄວາມສາມາດນຳພາ ແລະ ຄວາມເປັນແບບຢ່າງນຳໜ້າຂອງພັກເຮົາ.

ນັບແຕ່ມື້ສ້າງຕັ້ງ ພັກເຮົາໄດ້ຮັບການມອບໝາຍໜ້າທີ່ ແລະ ຄວາມຮັບຜິດຊອບອັນໃຫຍ່ຫຼວງ ແລະ ໜັກໜ່ວງ ຈາກປະຊາຊົນລາວບັນດາເຜົ່າ ເພື່ອນຳພາປວງຊົນລາວທັງຊາດ ເຮັດສຳເລັດພາລະກຳປະຫວັດ ສາດແຕ່ລະໄລຍະ. ຕະຫຼອດ 65 ກວ່າປີ ແຫ່ງການນຳພາຂອງຕົນ, ພັກເຮົາຍາມໃດ ກໍຕັ້ງໜ້າປັບປຸງ ແລະ ກໍ່ສ້າງຕົນເອງ ໃຫ້ມີຄວາມປອດໃສ, ເຂັ້ມແຂງ, ໜັກແໜ້ນ ໂດຍຢຶດໝັ້ນຢູ່ໃນຫຼັກການ, ຈຸດໝາຍຍຸດທະ ສາດ ແລະ ອຸດົມການຂອງຕົນ. ພຶດຕິກຳຂອງການປະຕິວັດຢູ່ປະເທດເຮົາ ໄດ້ພິສູດໃຫ້ເຫັນວ່າ ການນຳພາ ຂອງພັກ ມີລັກສະນະເປັນກົດເກນ, ແມ່ນປັດໄຈຕັດສິນ ທຸກໄຊຊະນະຂອງການປະຕິວັດ ຢູ່ປະເທດເຮົາ. ໃນ ເງື່ອນໄຂໃໝ່ນີ້, ໃນຖານະເປັນພັກກຳອຳນາດ ເພື່ອສືບຕໍ່ນຳພາ ແກ້ໄຂຄວາມທຸກຍາກຂອງປະຊາຊົນ ເຮັດ ໃຫ້ປະເທດຊາດ ຫຼຸດພົ້ນອອກຈາກສະຖານະພາບດ້ອຍພັດທະນາ; ນຳພາການພັດທະນາປະເທດຊາດ ຕາມ ທິດຍືນຍົງ ສູ່ຈຸດໝາຍສັງຄົມນິຍົມ ຢ່າງໜັກແໜ້ນ ໃນທ່າມກາງທີ່ສະພາບການພາຍໃນປະເທດ, ພາກພື້ນ ແລະ ສາກົນ ທີ່ມີທັງກາລະໂອກາດ, ຂໍ້ສະດວກ, ຂໍ້ຫຍຸ້ງຍາກ ແລະ ສິ່ງທ້າທາຍ, ທ້າທາຍຫຼາຍປະການນີ້ ການຍົກສູງຄວາມສາມາດນຳພາ ແລະ ຄວາມເປັນແບບຢ່າງນຳໜ້າຂອງພັກ ແມ່ນຄວາມຈຳເປັນພາວະວິ ໄສ, ເປັນບັນຫາພື້ນຖານ ແລະ ບັນຫາຮີບດ່ວນ ຂອງການກໍ່ສ້າງພັກ ໃນເງື່ອນໄຂປັດຈຸບັນ.

### 1. ຍົກສູງຄວາມສາມາດນຳພາ ແລະ ຄວາມເປັນແບບຢ່າງນຳໜ້າຂອງພັກ ແມ່ນບັນຫາພື້ນຖານຂອງການກໍ່ສ້າງພັກກຳອຳນາດ.

ປັດຈຸບັນ, ພັກເຮົາເປັນພັກກຳອຳນາດ ມີຄວາມຮັບຜິດຊອບຕໍ່ທົ່ວສັງຄົມ ແລະ ຕັດສິນຊາຕາກຳ ຂອງປະເທດຊາດ, ພັກເຮົາຈະສາມາດຮັບປະກັນໃຫ້ປະເທດຊາດຂອງພວກເຮົາ ຂະຫຍາຍຕົວກ້າວຂຶ້ນ ຕາມ ທິດທາງເຮັດໃຫ້ປະຊາຊົນຮັ່ງມີ-ຜາສຸກ, ປະເທດຊາດມັ່ງຄັ່ງເຂັ້ມແຂງ, ສັງຄົມສາມັກຄີປອງດອງ, ປະຊາທິ

ປະໄຕ, ຍຸຕິທຳ ແລະ ສີວິໄລ ໄດ້ ຫຼື ບໍ່ນັ້ນ ບັນຫາທີ່ເປັນພື້ນຖານກ່ອນໝູ່ໝົດ (ບັນຫາທີ່ຕ້ອງໄດ້ເຮັດກ່ອນໝູ່) ແມ່ນຂຶ້ນກັບວ່າ, ພັກເຮົາຈະຍົກສູງຄວາມສາມາດນຳພາ ແລະ ຄວາມເປັນແບບຢ່າງນຳໜ້າ ໃຫ້ທຽມທັນກັບຄວາມຮຽກຮ້ອງຕ້ອງການ ຂອງການພັດທະນາ ແລະ ສົມຄູ່ກັບພາລະກຳປະຫວັດສາດ ໃນໄລຍະໃໝ່ ຫຼື ບໍ່.

ການຍົກສູງຄວາມສາມາດນຳພາ ແລະ ຄວາມເປັນແບບຢ່າງນຳໜ້າຂອງພັກ ແມ່ນບັນຫາພື້ນຖານທີ່ສຸດ ຕໍ່ການນຳພາຂອງພັກເຮົາ ໃນໄລຍະໃໝ່, ຖ້າພັກຢາກກຳອຳນາດໄດ້ຢ່າງຍາວນານ, ພັກຕ້ອງເພີ່ມທະວີບົດບາດການນຳພາ, ປັບປຸງ ແລະ ປົວແປງພາຍໃນພັກໃຫ້ມີຄວາມປອດໃສ, ເຂັ້ມແຂງ ແລະ ໜັກແໜ້ນ ຢູ່ສະເໝີ ເພື່ອສາມາດຮັບປະກັນບົດບາດເປັນກອງນຳໜ້າ ຂອງຊົນຊັ້ນກຳມະກອນ, ເປັນຕົວແທນແຫ່ງຜົນປະໂຫຍດຂອງຊາວຜູ້ອອກແຮງງານ ແລະ ປວງຊົນລາວທັງຊາດຢ່າງແທ້ຈິງ.

**2. ຍົກສູງຄວາມສາມາດນຳພາ ແລະ ຄວາມເປັນແບບຢ່າງນຳໜ້າຂອງພັກ ແມ່ນປັດໄຈຕັດສິນໄຊຊະນະຂອງພາລະກິດປະຕິວັດ ຢູ່ປະເທດເຮົາ.**

ພັກການເມືອງ ເວົ້າລວມ ເມື່ອສ້າງຕັ້ງຂຶ້ນແລ້ວມີບົດບາດ, ໜ້າທີ່ນຳພາ, ພັກເຮົານັບແຕ່ມື້ສ້າງຕັ້ງຂຶ້ນ ໄດ້ຢືນຢັນວ່າ: ການນຳພາຂອງພັກ ເປັນປັດໄຈຕັດສິນກວ່າໝູ່ ຕໍ່ໄຊຊະນະ ຫຼື ປະລາໄຊ ຂອງການປະຕິວັດຢູ່ປະເທດເຮົາ. ພຶດຕິກຳແຫ່ງການນຳພາຂອງພັກເຮົາ ໄດ້ພິສູດໃຫ້ເຫັນຢ່າງຈະແຈ້ງວ່າ: ໃນພາລະກິດຕໍ່ສູ້ປົດປ່ອຍຊາດ ໃນສະໄໝນັ້ນ, ເຖິງວ່າ ມີສະມາຊິກພັກບໍ່ຫຼາຍ, ແຕ່ມີຄວາມສາມາດ ແລະ ຄວາມເປັນແບບຢ່າງໃນການນຳພາ. ສະນັ້ນ, ເຖິງວ່າພາລະກິດຕໍ່ສູ້ປົດປ່ອຍຊາດຈະຍືດເຍື້ອ, ຍາວນານ, ຫຍຸ້ງຍາກສັບສົນເທົ່າໃດກໍຕາມ ສຸດທ້າຍ ກໍໄດ້ຮັບໄຊຊະນະຢ່າງສົມບູນ. ກ້າວສູ່ໄລຍະໃໝ່ຂອງການປະຕິວັດ, ພັກເຮົາ ໄດ້ສືບຕໍ່ນຳພາປວງຊົນລາວທັງຊາດປະຕິບັດ 2 ໜ້າທີ່ຍຸດທະສາດ ຄື: ປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ; ນຳພາດຳເນີນພາລະກິດປ່ຽນແປງໃໝ່ ໂດຍສະເພາະ ໃນຊຸມປີຜ່ານມາ ພັກເຮົາໄດ້ນຳພາຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ ໄດ້ຮັບຜົນສຳເລັດ ທີ່ເປັນພື້ນຖານໃຫຍ່ຫຼວງຫຼາຍດ້ານ, ແຕ່ຄຽງຄູ່ກັນນັ້ນ ກໍມີຂໍ້ບົກຜ່ອງຈຳນວນບໍ່ໜ້ອຍ ຊຶ່ງເປັນສິ່ງທ້າທາຍ, ທົດສອບຕໍ່ຄວາມສາມາດນຳພາ ແລະ ບົດບາດກຳອຳນາດຂອງພັກເຮົາ. ໃນເອກະສານກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ ໄດ້ກຳນົດບາດກ້າວເດີນ ທີ່ເປັນບາດລ້ຽວສຳຄັນ ແຫ່ງການສືບຕໍ່ນຳພາທົ່ວພັກ, ທົ່ວປວງຊົນ ພາປະເທດຊາດຫຼຸດພົ້ນອອກຈາກສະຖານະພາບດ້ອຍພັດທະນາ ຕາມຄາດໝາຍທີ່ກຳນົດໄວ້. ບັນດາຈຸດໝາຍ ແລະ ຄາດໝາຍສູ້ຊົນ ທີ່ພັກວາງອອກ ແມ່ນສຳຄັນໃຫຍ່ຫຼວງ, ແຕ່ໜັກໜ່ວງ ແລະ ຫຍຸ້ງຍາກ. ຍ້ອນແນວນັ້ນ ຈຶ່ງຮຽກຮ້ອງໃຫ້ພັກເຮົາຕ້ອງປັບປຸງຕົນເອງ, ດ້ວຍການຍົກສູງຄວາມສາມາດນຳພາ ແລະ ຄວາມເປັນແບບຢ່າງນຳໜ້າຂອງຕົນ ໃຫ້ທຽບທັນກັບຄວາມເລັ່ງທວງ ຂອງການພັດທະນາ ແລະ ໜ້າທີ່ການເມືອງ ໃນໄລຍະໃໝ່.

ເມື່ອເວົ້າເຖິງ ການກໍ່ສ້າງ ແລະ ປັບປຸງພັກ ແບບໃໝ່-ພັກກຳອຳນາດ ທີ່ເປັນຕົວແທນສິດຜົນປະໂຫຍດ ຂອງຊົນຊັ້ນກຳມະກອນ ແລະ ຊາວຜູ້ອອກແຮງງານ ທ່ານ ເລນິນ ໄດ້ເນັ້ນໜັກວ່າ: ພັກຕ້ອງມີສະຕິປັນຍາ, ກຽດສັກສີແຫ່ງຍຸກສະໄໝ. ໃນເອກະສານກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ ໄດ້ຢ້ຳວ່າ: ໃນໄລຍະ

ໃໝ່ນີ້, ກ່ອນອື່ນໝົດ ພັກເຮົາຕ້ອງມີສະຕິປັນຍາ, ຄວາມຮູ້ທີ່ທັນກັບຍຸກສະໄໝ, ມີຄວາມສາມາດໃນການຄົ້ນຄວ້າ, ສ້າງບັນດາໂຄງການ ການເມືອງ, ແນວທາງນະໂຍບາຍຍຸດທະສາດ.

**3. ຍົກສູງຄວາມສາມາດນຳພາ ແລະ ຄວາມເປັນແບບຢ່າງນຳໜ້າຂອງພັກເຮົາ ແມ່ນບັນຫາຮີບດ່ວນຂອງການກໍ່ສ້າງພັກ ໃນເງື່ອນໄຂປັດຈຸບັນ.**

ໃນຊຸມປີຜ່ານມາ ເຖິງວ່າ ພັກໄດ້ຕັ້ງໜ້າປັບປຸງຕົນເອງຢ່າງບໍ່ຢຸດຢັ້ງ ເພື່ອນຳພາປະເທດຊາດເຮົາ ກ້າວຂຶ້ນດ້ວຍຖ່ວງທ່າອັນໜັກແໜ້ນກໍຕາມ, ແຕ່ຢູ່ພາຍໃນພັກຂອງພວກເຮົາ ກໍຍັງມີຫຼາຍບັນຫາ ທີ່ຕ້ອງໄດ້ສຸມໃສ່ແກ້ໄຂຢ່າງຮີບດ່ວນ ເປັນຕົ້ນແມ່ນ ຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດ, ແບບແຜນວິທີການເຮັດວຽກ ແລະ ແບບແຜນດຳລົງຊີວິດ, ນ້ຳໃຈຮັບໃຊ້ຊາດ, ຮັບໃຊ້ປະຊາຊົນ ແລະ ຄວາມເສຍສະຫຼະເພື່ອສ່ວນລວມ; ສະມາຊິກພັກ, ພະນັກງານຈຳນວນບໍ່ໜ້ອຍ ໄດ້ມີການເສື່ອມຖອຍ, ເກີດມີພະຍາດອາດຍາສິດ, ຫ່າງເຫີນຈາກປະຊາຊົນ, ມີແນວຄິດຈຸ້ມເຈື້ອເຊື້ອສາຍ, ພັກພວກ, ມີການສວຍໃຊ້ໜ້າທີ່ຕຳແໜ່ງ ເພື່ອສະແຫວງຫາຜົນປະໂຫຍດສ່ວນຕົວທີ່ປະກົດໃຫ້ເຫັນຢູ່ຫຼາຍຂື້ນ, ປະກົດການສໍ້ລາດບັງຫຼວງ ມີລັກສະນະແຜ່ລາມທົ່ວໄປ ແລະ ຍັງບໍ່ທັນໄດ້ຮັບການແກ້ໄຂຢ່າງເດັດຂາດເຂັ້ມງວດ. ບັນດາປະກົດການຫຍໍ້ທໍ້ເຫຼົ່ານັ້ນ ມີລັກສະນະຮ້າຍແຮງຂຶ້ນຊັກໄຊ້ ແລະ ແຜ່ລາມກວ້າງອອກ, ມີຄວາມສະຫຼັບສັບຊ້ອນ, ແກ້ໄຂໄດ້ຍາກ ຊຶ່ງໄດ້ເປັນ ແລະ ພວມເປັນບັນຫາທ້າທາຍຕໍ່ພັກ ແລະ ກະທົບໂດຍກົງ ໃສ່ຄວາມເຊື່ອໝັ້ນ ແລະ ສັດທາ ຂອງປະຊາຊົນຕໍ່ພັກເຮົາ. ຍ້ອນແນວນັ້ນ ສະມາຊິກພັກທຸກສະຫາຍ ຕ້ອງໄດ້ຮີບຮ້ອນຕັ້ງໜ້າຍົກລະດັບຄວາມສາມາດນຳພາ ແລະ ຄວາມເປັນແບບຢ່າງນຳໜ້າທີ່ດີ ໃນການນຳພາຂອງຕົນ ໃຫ້ສົມຄູ່ກັບຄວາມຮຽກຮ້ອງຕ້ອງການພັດທະນາ ແລະ ໜ້າທີ່ການເມືອງ ໃນເງື່ອນໄຂປັດຈຸບັນ.

**II. ທິດທາງຍົກສູງຄວາມສາມາດນຳພາ ແລະ ຄວາມເປັນແບບຢ່າງນຳໜ້າຂອງພັກເຮົາ ໃນຕໍ່ໜ້າ.**

**1. ທິດທາງຍົກສູງຄວາມສາມາດນຳພາຂອງພັກ.**

**①. ຍົກສູງຄວາມສາມາດໃນການກຳນົດແນວທາງ ບົນພື້ນຖານກຳແໜ້ນທິດສະດີມາກ-ເລນິນ ແລະ ທິດສະດີກ້າວໜ້າອື່ນໆ, ຮັບຮູ້ບັນດາກົດເກນ ແລະ ໝູນໃຊ້ຢ່າງສອດຄ່ອງ, ເພີ່ມທະວີການຄົ້ນຄວ້າທິດສະດີ, ສະຫຼຸບພຶດຕິກຳ ແລະ ໃຫ້ຄຳຕອບຕໍ່ບັນຫາຕ່າງໆ ທີ່ພຶດຕິກຳການປະຕິວັດຕັ້ງຂຶ້ນຢ່າງທັນການ.**

- ການຄົ້ນຄວ້າທິດສະດີ ແລະ ສະຫຼຸບພຶດຕິກຳ ຂອງພັກ ແມ່ນເພື່ອສືບຕໍ່ບຸກທະລຸທາງດ້ານຈິນຕະນາການ ທິດສະດີ ແນໃສ່ສ້າງພື້ນຖານ ໃນການຍົກສູງສະຕິປັນຍາ, ຄວາມສາມາດນຳພາຂອງພັກ ແລະ ຄວາມສາມາດ ໃນການຫັນທິດສະດີ ເປັນແນວທາງ, ແຜນນະໂຍບາຍຂອງພັກ ໃຫ້ສອດຄ່ອງກັບສະພາບແວດລ້ອມພາຍນອກ ແລະ ເງື່ອນໄຂຂອງປະເທດເຮົາ. ດັ່ງນັ້ນ, ຕ້ອງດຳເນີນການສະຫຼຸບຕີລາຄາວຽກງານຄົ້ນຄວ້າທິດສະດີ ແລະ ສະຫຼຸບພຶດຕິກຳ ເພື່ອສືບຕໍ່ປັບປຸງ, ເພີ່ມເຕີມບັນດາເນື້ອໃນ ໃນການຄົ້ນຄວ້າ ໂດຍສະເພາະ ແມ່ນບັນຫາທີ່ພົວພັນເຖິງ ຄວາມສາມາດກຳແໜ້ນລັກສະນະຂອງການປະຕິວັດ ຢູ່ປະເທດເຮົາ ໃນໄລຍະໃໝ່ ຫຼື ກຳນົດທິດທາງ ໃນບາດກ້າວໃໝ່ ແຫ່ງການສ້າງປະຖົມປັດໄຈກ້າວຂຶ້ນສັງຄົມນິຍົມ. ຕ້ອງສືບຕໍ່ກວດກາ ແລະ ຊຸກຍູ້ ການຈັດຕັ້ງປະຕິບັດໂຄງການຄົ້ນຄວ້າທິດສະດີ ແລະ ສະຫຼຸບພຶດຕິກຳ ຕາມຫົວຂໍ້ໃຫຍ່ລະດັບຊາດ ໃຫ້ສຳເລັດຕາມຄາດໝາຍ.

- ຈັດວາງ, ສັບຊ້ອນບຸກຄະລາກອນ ໄປພ້ອມກັບການປັບປຸງການຈັດຕັ້ງ ຂອງພາກສ່ວນເຮັດວຽກງານຄົ້ນຄວ້າທິດສະດີ ແລະ ສະຫຼຸບພຶດຕິກຳ ໃຫ້ກະທັດລັດ, ສົມເຫດ, ສົມຜົນ ແລະ ມີປະສິດທິຜົນສູງ ເປັນຕົ້ນ

ແມ່ນ ສະຖາບັນວິທະຍາສາດ-ສັງຄົມແຫ່ງຊາດ, ສະພາວິທະຍາສາດ-ສັງຄົມແຫ່ງຊາດ, ບັນດາສະຖາບັນຄົ້ນຄວ້າ ຂອງກະຊວງ-ອົງການ, ສະພາວິທະຍາສາດ ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ.

**②. ຍົກສູງຄວາມສາມາດໃນການຫັນແນວທາງ, ແຜນນະໂຍບາຍຂອງພັກ ໃຫ້ກາຍເປັນທິດທາງ, ແຜນການ ແລະ ລະບຽບກົດໝາຍຕ່າງໆ ທີ່ສ່ອງແສງເຖິງຜົນປະໂຫຍດ, ເຈດຈຳນົງ ແລະ ຄວາມມຸ່ງມາດປາຖະໜາ ຂອງປະຊາຊົນຢ່າງຖືກຕ້ອງ, ຄົບຖ້ວນ ແລະ ຊີ້ນຳການຈັດຕັ້ງປະຕິບັດໃຫ້ເປັນຈິງ.**

ສິ່ງສຳຄັນ ໃນການຫັນແນວທາງ ຕ້ອງຢຶດໝັ້ນລັກສະນະປະຕິວັດ ແລະ ລັກສະນະວິທະຍາສາດ ຂອງທິດສະດີມາກ-ເລນິນ ແລະ ຫຼີກເວັ້ນພຶດຕິກຳ ທີ່ຖືລັດທິມາກ-ເລນິນ ເປັນຄຳພີຕາຍຕົວ.

- ຄະນະພັກແຕ່ລະຂັ້ນ ຕ້ອງເພີ່ມທະວີຄວາມຮັບຜິດຊອບ ໃນການຊີ້ນຳ-ນຳພາ ການຄົ້ນຄວ້າ, ກຳແໜ້ນແນວທາງ, ແຜນນະໂຍບາຍຂອງພັກ ແລະ ຫັນເປັນແຜນການ ແລະ ໂຄງການຂອງຂັ້ນຕົນ, ທັງຈັດຕັ້ງປະຕິບັດໃຫ້ເປັນຈິງ.

- ການຈັດຕັ້ງພັກແຕ່ລະຂັ້ນ ຕ້ອງເປັນເຈົ້າການປັບປຸງປ່ຽນແປງພຶດຕິກຳນຳພາ ທີ່ບໍ່ຖືກຕ້ອງ, ບໍ່ສອດຄ່ອງກັບແນວທາງ ເພື່ອເຮັດໃຫ້ແນວທາງນະໂຍບາຍຂອງພັກ ນັບມື້ເປັນຮູບປະທຳ, ນຳເອົາຜົນປະໂຫຍດຕົວຈິງ ມາໃຫ້ແກ່ປະຊາຊົນ ແລະ ໄດ້ຮັບການສະໜັບສະໜູນຈາກປະຊາຊົນ ຢ່າງກວ້າງຂວາງ.

**③. ຍົກສູງຄວາມສາມາດຊີ້ນຳ-ນຳພາ ການຈັດຕັ້ງປະຕິບັດແນວທາງ, ແຜນນະໂຍບາຍຂອງພັກໃຫ້ເປັນຈິງ ເພື່ອນຳເອົາຜົນປະໂຫຍດສູງສຸດ ມາໃຫ້ປະເທດຊາດ ແລະ ປະຊາຊົນ.**

ພັກເຮົາກຳເນີດຈາກ ຂະບວນການຕໍ່ສູ້ຂອງປະຊາຊົນ, ເຕີບໃຫຍ່ຂະຫຍາຍຕົວ ຍ້ອນມີການສະໜັບສະໜູນຂອງມະຫາຊົນ. ສະນັ້ນ, ພັກເຮົາ ຕ້ອງຕໍ່ສູ້ເພື່ອຜົນປະໂຫຍດຂອງມະຫາຊົນ, ຖືມະຫາຊົນເປັນກົກ, ເປັນກຳລັງແຮງຊະນະເລີດຂອງພັກ; ສະມາຊິກພັກ, ຄະນະພັກແຕ່ລະຂັ້ນ ຕ້ອງໃກ້ຊິດຕິດແທດ ແລະ ກຳແໜ້ນແນວຄິດຈິດໃຈຂອງມະຫາຊົນ, ເປັນເຈົ້າການນຳເອົາແນວທາງຂອງພັກ ໄປຊີ້ແຈງອະທິບາຍ ຊວນເຊື່ອມະຫາຊົນພ້ອມທັງນຳເອົາຄວາມຂັດຂ້ອງໝອງໃຈ, ຄວາມມຸ່ງມາດປາຖະໜາຂອງປະຊາຊົນ ສ່ອງແສງໃຫ້ພັກຮັບຮູ້ ແລະ ນຳພາປະຊາຊົນ ໃຫ້ມີຄວາມຕື່ນຕົວ, ຫ້າວຫັນ, ເປັນເຈົ້າການຈັດຕັ້ງປະຕິບັດແນວທາງຂອງພັກ ໃຫ້ເປັນຈິງ.

- ຄະນະພັກແຕ່ລະຂັ້ນ ຕ້ອງສືບຕໍ່ຍຶດໝັ້ນ ແລະ ເສີມຂະຫຍາຍແບບແຜນນຳພາທີ່ຖືກຕ້ອງ ແລະ ເປັນມູນເຊື້ອອັນດີງາມຂອງພັກ, ໂຄສະນາຂົນຂວາຍປຸກລະດົມ ຊວນເຊື່ອມະຫາຊົນ ຈັດຕັ້ງປະຕິບັດແນວທາງນະໂຍບາຍຂອງພັກ, ນຳເອົາຜົນປະໂຫຍດຕົວຈິງມາໃຫ້ແກ່ປະເທດຊາດ ແລະ ປະຊາຊົນ.

**④. ຍົກສູງຄວາມສາມາດ ໃນການຕິດຕາມ, ກວດກາ, ກະຕຸກຊຸກຍູ້ ການເຄື່ອນໄຫວຂອງທົ່ວລະບົບການເມືອງ ໃນການຈັດຕັ້ງປະຕິບັດແນວທາງຂອງພັກ.**

- ຄະນະພັກແຕ່ລະຂັ້ນ ຕ້ອງເພີ່ມທະວີການຊີ້ນຳ-ນຳພາ ແລະ ຈັດຕັ້ງປະຕິບັດວຽກງານຕິດຕາມ, ກວດກາ ຕາມຫຼັກການຂອງພັກ ແລະ ກົດໝາຍຂອງລັດ; ຄົ້ນຄວ້າວາງລະບອບລະບຽບການ, ກົນໄກການຕິດຕາມ, ກວດກາໃຫ້ຄົບຖ້ວນ ແລະ ຮັດກຸມ, ໃນນັ້ນ ລວມທັງກົນໄກໃຫ້ຂັ້ນລຸ່ມ, ແນວລາວສ້າງຊາດ ແລະ ບັນດາອົງການຈັດຕັ້ງມະຫາຊົນໄດ້ຕິດຕາມ, ກວດກາການຈັດຕັ້ງພັກ, ສະມາຊິກພັກໃນການປະຕິບັດລະບຽບ, ມະຕິຄຳສັ່ງຂອງພັກ, ຕິດຕາມ, ກວດກາບັນດາອົງການອຳນາດລັດ ໃນການປະຕິບັດກົດໝາຍ, ລະບຽບການຕ່າງໆ ແລະ ການແກ້ໄຂປະກົດການຫຍໍ້ທໍ້, ການສໍ້ລາດບັງຫຼວງທີ່ເກີດຂຶ້ນ ໃນກົງຈັກການຈັດຕັ້ງ, ຖືເອົາການສະກັດກັ້ນ ແລະ ແກ້ໄຂການສໍ້ລາດບັງຫຼວງ ເປັນຄວາມຮັບຜິດຊອບຂອງຄະນະພັກທຸກຂັ້ນ, ຂອງທຸກການຈັດຕັ້ງ.

- ສ້າງເງື່ອນໄຂໃຫ້ສື່ມວນຊົນ ແລະ ປະຊາຊົນ ໄດ້ເຂົ້າຮ່ວມວຽກງານຕິດຕາມ, ກວດກາ ການເຄື່ອນໄຫວປະຕິບັດໜ້າທີ່ ແລະ ການດຳລົງຊີວິດ ຂອງພະນັກງານ, ສະມາຊິກພັກ.

- ເພີ່ມທະວີຄວາມຮັບຜິດຊອບ ຂອງຄະນະພັກ ແລະ ການນຳທຸກຂັ້ນ ຕໍ່ການແກ້ໄຂຜົນຂອງການກວດກາ ໃຫ້ທັນການ, ເຂັ້ມງວດ, ສັກສິດ, ຕາມກົດລະບຽບຂອງພັກ, ກົດໝາຍ ແລະ ລະບຽບການຕ່າງໆຂອງລັດ.

- ເພີ່ມຄວາມເອົາໃຈໃສ່ ຕໍ່ການປັບປຸງກົງຈັກການຈັດຕັ້ງຄະນະກວດກາແຕ່ລະຂັ້ນ, ແຕ່ລະຂະແໜງການ ແລະ ກໍ່ສ້າງ, ບຳລຸງພະນັກງານກວດກາ ໃຫ້ຮັບປະກັນທັງທາງດ້ານປະລິມານ ແລະ ຄຸນນະພາບ ພ້ອມທັງສ້າງເງື່ອນໄຂໃຫ້ຄະນະກວດກາແຕ່ລະຂັ້ນ ປະຕິບັດພາລະບົດບາດຂອງຕົນ ມີປະສິດທິພາບສູງ.

**⑤. ເພີ່ມຄວາມສາມາດ ໃນການຄົ້ນເຫັນ ແລະ ຕໍ່ສູ້ຕ້ານ, ກຳຈັດປັດເປົ່າປະກົດການຫຍໍ້ທໍ້ພາຍໃນພັກຢ່າງທັນການ ແລະ ຕ້ານກົນອຸບາຍຫັນປ່ຽນໂດຍສັນຕິ ຂອງອິທິກຳລັງປໍລະປັກ.**

- ຄະນະພັກທຸກຂັ້ນ, ພະນັກງານ, ສະມາຊິກພັກທຸກຄົນ ຕ້ອງເຊີດຊູຈິດໃຈຮັກຊາດ, ຮັກລະບອບປະຊາທິປະໄຕປະຊາຊົນ ດ້ວຍການຕັ້ງໜ້າຝຶກຝົນຫຼໍ່ຫຼອມ ຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດໃຫ້ມີຄວາມໜັກແໜ້ນ ເຮັດໃຫ້ພະນັກງານ, ສະມາຊິກພັກ ມີຄວາມຈົງຮັກພັກດີຕໍ່ພັກ, ຕໍ່ປະເທດຊາດ ແລະ ຕໍ່ປະຊາຊົນ, ເດັດດ່ຽວຕອບຕ້ານທຸກກົນອຸບາຍທຳລາຍມ້າງເພ ຂອງອິທິກຳລັງປໍລະປັກ ແລະ ພວກຄົນບໍ່ດີ; ສະກັດກັ້ນ ແລະ ຕ້ານກັບປະກົດການຫຍໍ້ທໍ້ຕ່າງໆ ທີ່ເກີດຂຶ້ນພາຍໃນພັກ ຢ່າງເດັດຂາດ, ທັນການ ເພື່ອບໍ່ໃຫ້ພະນັກງານ, ສະມາຊິກພັກຜູ້ໃດ ຢູ່ນອກ ຫຼື ຢູ່ເໜືອ ກົດໝາຍ.

- ຄະນະພັກທຸກຂັ້ນ, ສະມາຊິກພັກທຸກຄົນ ຕ້ອງເປັນແບບຢ່າງນຳໜ້າໃນການສະກັດກັ້ນ ແລະ ແກ້ໄຂປະກົດການຫຍໍ້ທໍ້ຕ່າງໆ ພາຍໃນພັກ ໂດຍເລີ່ມຈາກ ການສຳຫຼວດກວດກາຕົນເອງ, ຕຳນິກໍ່ສ້າງຊ່ວຍເຫຼືອຊຶ່ງກັນ ແລະ ກັນ ດ້ວຍຄວາມຈິງໃຈ; ຫາກມີສິ່ງຫຍໍ້ທໍ້ເກີດຂຶ້ນ ຕ້ອງມີຄວາມຕື່ນຕົວເປັນເຈົ້າການແກ້ໄຂຢ່າງເດັດຂາດ; ເອົາໃຈໃສ່ຕິດຕາມ, ກວດກາຂີດເຂດຄວາມຮັບຜິດຊອບຂອງຕົນ ຢ່າງເປັນປະຈຳ, ຫາກເຫັນສິ່ງຫຍໍ້ທໍ້ເກີດຂຶ້ນ ຕ້ອງມີຄວາມເດັດຂາດ, ເຂັ້ມງວດ ໃນການແກ້ໄຂຕາມທິດນຳ ບັນຫາຫຍໍ້ທໍ້ເກີດຂຶ້ນຢູ່ບ່ອນໃດ ແມ່ນຄະນະພັກບ່ອນນັ້ນ ເປັນເຈົ້າການແກ້ໄຂ ຫຼີກເວັ້ນການປົກປ້ອງ ຫຼື ປົກປິດສິ່ງຫຍໍ້ທໍ້ດັ່ງກ່າວ.

## 2. ທິດທາງຍົກສູງລັກສະນະນຳໜ້າຂອງພັກ.

ຄວາມເປັນແບບຢ່າງນຳໜ້າທີ່ດີຂອງພັກ ແມ່ນພື້ນຖານທີ່ດີໃຫ້ແກ່ການນຳພາຂອງພັກ ທັງແມ່ນແວ່ນແຍງອັນໃສແຈ້ງ ແລະ ເປັນແຮງດຶງດູດເອົາຄວາມເຊື່ອໝັ້ນຂອງມະຫາຊົນ ຢ່າງກວ້າງຂວາງ. ສະນັ້ນ, ສະມາຊິກພັກທຸກສະຫາຍ ຕ້ອງຕັ້ງໜ້າຍົກສູງຄວາມເປັນແບບຢ່າງນຳໜ້າຂອງຕົນ ຊຶ່ງສະແດງອອກໃນ 4 ດ້ານດັ່ງນີ້:

**①. ເປັນແບບຢ່າງນຳໜ້າ ໃນການປັບປຸງບູລະນະແນວທາງ, ແຜນນະໂຍບາຍຂອງພັກ ໃຫ້ຖືກຕ້ອງ, ສອດຄ່ອງກັບສະພາບການຕົວຈິງ ແລະ ການປ່ຽນແປງຂອງສະພາບແວດລ້ອມພາຍນອກ.**

ການສ້າງຄວາມສາມາດ ແລະ ລັກສະນະນຳໜ້າຂອງພັກ, ກ່ອນອື່ນໝົດ ຕ້ອງເລີ່ມຈາກການວາງແນວທາງ ເພື່ອຮັບໃຊ້ປະຊາຊົນ ໃຫ້ຖືກຕ້ອງ ແລະ ສອດຄ່ອງຢູ່ສະເໝີ; ເພາະວ່າ ຖ້າພັກວາງແນວທາງການ

ເມືອງອອກຜິດພາດແລ້ວ ບໍ່ສະເພາະແຕ່ຈະພາໃຫ້ລັກສະນະນຳໜ້າຂອງພັກຫຼຸດລົງ, ຍິ່ງໄປກວ່ານັ້ນ ກໍຈະພາໃຫ້ເກີດໄພອັນຕະລາຍ ຕໍ່ບົດບາດກຳອຳນາດຂອງພັກນຳອີກ.

ການຄົ້ນຄວ້າປັບປຸງ ແລະ ວາງແນວທາງ ໃຫ້ຖືກຕ້ອງ, ສອດຄ່ອງກັບສະພາບການຕົວຈິງ ແມ່ນການເສີມຂະຫຍາຍ ແລະ ຍົກລະດັບສະຕິປັນຍາຂອງພັກ ໃຫ້ທັນກັບຍຸກສະໄໝ, ຍົກລະດັບຄວາມສາມາດໃນການກຳແໜ້ນ, ວິໄຈສະພາບຄວາມເປັນຈິງ, ທ່າແຮງບົ່ມຊ້ອນຂອງປະເທດ ແລະ ທ້ອງຖິ່ນຮາກຖານ ເພື່ອກຳນົດທິດທາງໜ້າທີ່ ແລະ ມາດຕະການຈັດຕັ້ງປະຕິບັດຢູ່ຂັ້ນຕົ້ນ ໃຫ້ມີປະສິດທິຜົນສູງ; ເປັນເຈົ້າການຕື່ນຕົວປັບປຸງປ່ຽນແປງສິ່ງທີ່ບໍ່ຖືກຕ້ອງ, ບໍ່ສອດຄ່ອງກັບແນວທາງແຜນນະໂຍບາຍຂອງພັກ ແລະ ເຮັດໃຫ້ແນວທາງຂອງພັກນັບມື້ໄດ້ຮັບການຈັດຕັ້ງປະຕິບັດໃຫ້ເປັນຈິງ ແລະ ໃຫ້ປະຊາຊົນສະໜັບສະໜູນຢ່າງກວ້າງຂວາງ.

**②. ເປັນແບບຢ່າງນຳໜ້າ ໃນການຍົກສູງຄວາມເປັນເຈົ້າການ ແລະ ຄວາມຮັບຜິດຊອບ ໃນການຈັດຕັ້ງປະຕິບັດແນວທາງໃຫ້ມີຜົນສຳເລັດ ໂດຍຖືເອົາ ການຕອບສະໜອງຜົນປະໂຫຍດຂອງປະຊາຊົນເປັນຈຸດເລີ່ມຕົ້ນ.**

- ຄວາມເຂັ້ມແຂງ, ໜັກແໜ້ນຂອງພັກ ບໍ່ແມ່ນພຽງແຕ່ຕ້ອງວາງແນວທາງ, ແຜນນະໂຍບາຍໃຫ້ຖືກຕ້ອງ, ສອດຄ່ອງກັບສະພາບຄວາມເປັນຈິງ ຂອງປະເທດ ຖືກກັບຄວາມມຸ່ງມາດປາຖະໜາຂອງປະຊາຊົນ ແລະ ຈຸດພິເສດຂອງຍຸກສະໄໝເທົ່ານັ້ນ, ຫາກຍັງຂຶ້ນກັບຄວາມສາມາດ ກໍຄື ຄວາມເປັນເຈົ້າການ ແລະ ຄວາມຮັບຜິດຊອບຂອງພັກ ໃນການນຳພາປະຊາຊົນຈັດຕັ້ງປະຕິບັດແນວທາງຂອງພັກໃຫ້ເປັນຈິງ. ແນວທາງຖືກຕ້ອງຢູ່ໃນໜ້າເຈ້ຍຊື່ໆ, ຫາກບໍ່ໄດ້ຮັບການຈັດຕັ້ງປະຕິບັດ ກໍບໍ່ມີຄວາມໝາຍຫຍັງ. ສະນັ້ນ, ການຈັດຕັ້ງພັກແຕ່ລະຂັ້ນ ຕ້ອງຍົກສູງຄວາມຮັບຜິດຊອບໃນການນຳພາຂອງຕົນ, ສູ້ຊົນນຳພາ ແລະ ຈັດຕັ້ງປະຕິບັດບັນດາຄາດໝາຍທີ່ກອງປະຊຸມໃຫຍ່ຂອງພັກ ແລະ ບັນດາຄາດໝາຍ ຂອງແຕ່ລະອົງຄະນະພັກວາງອອກໃຫ້ເປັນຈິງ ໂດຍສະເພາະ ແມ່ນສຸມໃສ່ນຳພາການແກ້ໄຂຄວາມທຸກຍາກຂອງປະຊາຊົນ, ບັນລຸເປົ້າໝາຍການພັດທະນາ ທີ່ຍືນຍົງ ແລະ ນຳພາປະເທດຊາດຫຼຸດພົ້ນຈາກ ສະຖານະພາບດ້ອຍພັດທະນາ ໃນປີ 2025.

- ພະນັກງານ, ສະມາຊິກພັກທຸກຄົນ ຕ້ອງເປັນແບບຢ່າງຫ້າວຫັນອຸທິດເຫື່ອແຮງ ແລະ ສະຕິປັນຍາຂອງຕົນ ເຂົ້າໃນພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ໃຫ້ນັບມື້ຈະເລີນກ້າວໜ້າ ແລະ ມີຄວາມເປັນຫ່ວງເປັນໄຍນຳຄວາມສຸກ-ທຸກ ຂອງປະຊາຊົນ. ໃນການປະຕິບັດໜ້າທີ່ວຽກງານ ບໍ່ວ່າຈະຢູ່ໃນຕຳແໜ່ງໃດກໍຕາມ ເມື່ອໄດ້ຮັບມອບໝາຍວຽກງານຈາກການຈັດຕັ້ງ ເຖິງວ່າ ຈະເປັນວຽກໃຫຍ່ ວຽກນ້ອຍ, ວຽກຫຍຸ້ງຍາກສັບສົນປານໃດກໍຕາມ ຕ້ອງຕັ້ງໜ້າປະຕິບັດດ້ວຍຈິດໃຈສູ້ຊົນ, ບຸກບືນ, ກ້າຄິດ, ກ້າເຮັດ, ກ້າຮັບຜິດຮັບຊອບ, ເວົ້າຕ້ອງໄປຄຽງຄູ່ກັບການປະຕິບັດ ແລະ ຕ້ອງເຮັດທຸກສິ່ງທຸກຢ່າງ ເພື່ອນຳເອົາຄວາມຢູ່ດີ, ກິນດີ ມາໃຫ້ປະຊາຊົນ ແລະ ນຳເອົາຄວາມມັ່ງຄັ່ງເຂັ້ມແຂງ ມາໃຫ້ປະເທດຊາດ.

**③. ເປັນແບບຢ່າງນຳໜ້າໃນການກຳຈັດ ແລະ ແກ້ໄຂຂໍ້ບົກພ່ອງຂອງຕົນ, ກໍ່ສ້າງປັບປຸງພັກດ້ວຍຄວາມເປັນເຈົ້າການ.**

ໃນການດຳລົງຊີວິດ ກໍຄື ການເຮັດວຽກ, ພະນັກງານ-ສະມາຊິກພັກທຸກສະຫາຍ ຕ້ອງເຂົ້າໃຈສະເໝີວ່າ: ຈຸດດີ ແລະ ຈຸດອ່ອນ ແມ່ນຄູ່ມາດຕະເກນອັນໜຶ່ງ, ເພາະວ່າ ຢູ່ໃນໂລກນີ້ ບໍ່ມີສິ່ງໃດສົມບູນແບບຢ່າງເດັດ

ຖານ. ບັນຫາສຳຄັນຢູ່ບ່ອນວ່າ ພວກເຮົາຈະຕີລາຄາການນຳພາອັນດີ, ອັນອ່ອນ ຖືກຕ້ອງກັບຄວາມເປັນຈິງ ຫຼື ບໍ່ ແລະ ຈະເສີມຂະຫຍາຍຈຸດດີ ແລະ ມີຄວາມຕັດສິນໃຈ ເປັນເຈົ້າການປັບປຸງແກ້ໄຂ ຈຸດອ່ອນ-ຂໍ້ບົກພ່ອງ ຫຼື ບໍ່ ເພື່ອເຮັດໃຫ້ພັກປອດໃສ, ເຂັ້ມແຂງ ແລະ ໜັກແໜ້ນ. ສະນັ້ນ, ເພື່ອຍົກສູງຄວາມເປັນແບບຢ່າງນຳໜ້າໃນການກຳຈັດ ແລະ ແກ້ໄຂຂໍ້ບົກພ່ອງຂອງຕົນ, ກ່ອນອື່ນໝົດ, ສະມາຊິກພັກທຸກສະຫາຍ ຕ້ອງເຂົ້າໃຈວ່າ ການຍົກສູງຄວາມສາມາດນຳພາຂອງພັກ ຕ້ອງໄປຄຽງຄູ່ກັບ ການຍົກສູງຄວາມເປັນແບບຢ່າງນຳໜ້າ ຕໍ່ສູ້ຂອງສະມາຊິກພັກ, ເດັດດ່ຽວແກ້ໄຂປະກົດການຫຍໍ້ທໍ້ ທີ່ເກີດຂຶ້ນຢູ່ໃນການຈັດຕັ້ງຂອງພັກ-ລັດ ກໍຄື ໃນຖັນແຖວສະມາຊິກພັກ, ພະນັກງານຢ່າງທັນການ ເຮັດໄດ້ແນວນັ້ນ ຈຶ່ງຮັບປະກັນໃຫ້ພັກມີຄວາມປອດໃສ, ເຂັ້ມແຂງ ແລະ ໜັກແໜ້ນ ຢູ່ສະເໝີ.

- ເອົາໃຈໃສ່ກໍ່ສ້າງ ແລະ ປັບປຸງພັກ ໃຫ້ມີຄວາມໜັກແໜ້ນທາງດ້ານການເມືອງ-ແນວຄິດ, ປອດໃສ, ເຂັ້ມແຂງ ທາງດ້ານການຈັດຕັ້ງ, ມີແບບແຜນການນຳພາ ແລະ ວິທີເຮັດວຽກຖືກຕ້ອງແທດຕົວຈິງ.

- ສະມາຊິກພັກແຕ່ລະສະຫາຍ ຕ້ອງເຊີດຊູຄວາມເປັນເຈົ້າການປະກອບສ່ວນ ເຂົ້າໃນການປັບປຸງກົງຈັກການຈັດຕັ້ງພັກແຕ່ລະຂັ້ນ ໃຫ້ປອດໃສ, ເຂັ້ມແຂງ, ໜັກແໜ້ນ ບົນພື້ນຖານປະຕິບັດຫຼັກການລວມສູນປະຊາທິປະໄຕ ໃຫ້ຖືກຕ້ອງ ແລະ ເຂັ້ມງວດ, ປັບປຸງພາລະບົດບາດ, ໜ້າທີ່ຂອງການຈັດຕັ້ງພັກ ຢູ່ບັນດາກະຊວງ-ອົງການ ຂັ້ນສູນກາງ ແລະ ທ້ອງຖິ່ນຮາກຖານ, ປັບປຸງຄຸນນະພາບບັນດາອົງການ ແລະ ບຸກຄະລາກອນ ທີ່ເປັນເສນາທິການຂອງພັກ ແລະ ລັດ; ເສີມຂະຫຍາຍປະຊາທິປະໄຕ ໃນການດຳເນີນຊີວິດພັກ ຢູ່ໃນການຈັດຕັ້ງພັກແຕ່ລະຂັ້ນ; ປັບປຸງການຈັດຕັ້ງຮາກຖານພັກ ຕິດພັນກັບການສ້າງຄວາມປອດໃສ, ເຂັ້ມແຂງ, ໜັກແໜ້ນ, ຍົກສູງຄຸນນະພາບຂອງສະມາຊິກພັກ ແລະ ເພີ່ມທະວີວຽກງານຄຸ້ມຄອງສະມາຊິກພັກ ແລະ ຂະຫຍາຍພັກ, ສ້າງແບບແຜນດຳລົງຊີວິດທີ່ປອດໃສ, ເປັນເຈົ້າການເຮັດວຽກຢ່າງປະດິດສ້າງ ແລະ ຍົກສູງຄວາມຮັບຜິດຊອບຂອງສະມາຊິກພັກ ຕໍ່ການປະຕິບັດໜ້າທີ່ວຽກງານ ທີ່ໄດ້ຮັບມອບໝາຍ.

**④. ເປັນແບບຢ່າງນຳໜ້າ ໃນການເຄົາລົບລັດຖະທຳມະນູນ ແລະ ກົດໝາຍ, ມີຄວາມເຂັ້ມງວດໃນການປະຕິບັດກົດລະບຽບ ແລະ ຂໍ້ຫ້າມຕ່າງໆຂອງພັກ.**

- ພັກມີບົດບາດໃນການຄົ້ນຄວ້າ ແລະ ກຳນົດແນວທາງຂອງພັກ, ຊີ້ນຳຄົ້ນຄວ້າລະບຽບກົດໝາຍຂອງລັດ. ສະນັ້ນ, ຄະນະພັກທຸກຂັ້ນ, ສະມາຊິກພັກທຸກສະຫາຍ ຕ້ອງເປັນແບບຢ່າງທີ່ດີ ໃນການເຄົາລົບ ແລະ ປະຕິບັດລັດຖະທຳມະນູນ, ກົດໝາຍ ແລະ ລະບຽບການຕ່າງໆ ຢ່າງເຂັ້ມງວດ, ບໍ່ສວຍໃຊ້ກົດໝາຍ ແລະ ໜ້າທີ່ຕຳແໜ່ງຂອງຕົນ ເພື່ອຫາຜົນປະໂຫຍດແບບບໍ່ຖືກຕ້ອງ ໃຫ້ແກ່ຕົນເອງ.

- ເຄົາລົບສິດເສລີພາບຂອງພົນລະເມືອງ, ໂຄສະນາ, ປຸກລະດົມປະຊາຊົນ ຊັ້ນຄົນຕ່າງໆ ໃຫ້ຮັບຮູ້-ເຂົ້າໃຈ ແລະ ມີສະຕິເຄົາລົບ ປະຕິບັດລະບຽບກົດໝາຍ ແລະ ລະບຽບການຕ່າງໆ ທີ່ລັດປະກາດໃຊ້ໃຫ້ຖືກຕ້ອງ, ເຂັ້ມງວດ.

- ເປັນແບບຢ່າງນຳໜ້າ ປະກອບສ່ວນເຂົ້າໃນການປົກປ້ອງກົດໝາຍ ແລະ ຄວາມຍຸຕິທຳ; ເປັນເຈົ້າການປະກອບສ່ວນເຂົ້າໃນການຮັກສາຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍ ແລະ ຄວາມປອດໄພໃນສັງຄົມ.

**ສັງລວມແລ້ວ:** ການຍົກສູງຄວາມສາມາດນຳພາ ແລະ ຄວາມເປັນແບບຢ່າງນຳໜ້າຂອງສະມາຊິກພັກ ແມ່ນວຽກງານທີ່ສຳຄັນ ແລະ ແມ່ນບັນຫາ ທີ່ມີລັກສະນະເປັນຕາຍຂອງພັກກຳອຳນາດ. ຢາກນຳພາປະເທດຊາດ ໄປສູ່ຄວາມວັດທະນະຖາວອນໄດ້, ກ່ອນອື່ນໝົດ ພັກຕ້ອງມີຄວາມເຂັ້ມແຂງ, ຢາກມີຄວາມເຂັ້ມແຂງຕ້ອງຮູ້ກໍ່ສ້າງ ແລະ ປັບປຸງຕົນເອງຢ່າງຮອບດ້ານ ແລະ ເປັນປະຈຳ ເປັນຕົ້ນແມ່ນ ຍົກສູງຄວາມສາມາດ

ນຳພາຂອງພັກ ຕ້ອງເຂົ້າໃຈວ່າ ແມ່ນການເພີ່ມທະວີຄວາມສາມາດນຳພາຂອງພັກ ໃຫ້ດີກວ່າເກົ່າ ໂດຍສະເພາະ ແມ່ນກະໂຕສະມາຊິກພັກ ໃຫ້ໄດ້ດີຂຶ້ນລື່ນແຕ່ກ່ອນ ແລະ ມີແຕ່ຍົກສູງຄວາມສາມາດນຳພາຂອງພັກສູງຂຶ້ນເທົ່ານັ້ນ, ພັກຈຶ່ງມີຄວາມເຂັ້ມແຂງ ແລະ ຄວາມສາມາດກຳອຳນາດ ໄດ້ຢ່າງໝັ້ນຄົງຍາວນານ ແລະ ນຳພາປວງຊົນທັງຊາດ ສ້າງສາພັດທະນາປະເທດຊາດ ໃຫ້ປະສົບຜົນສຳເລັດຕາມອຸດົມການ ທີ່ກຳນົດໄວ້: **"ປະເທດຊາດມັ່ງຄັ່ງເຂັ້ມແຂງ, ປະຊາຊົນຮັ່ງມີຜາສຸກ, ສັງຄົມສາມັກຄີປອງດອງ, ປະຊາທິປະໄຕ, ຍຸຕິທຳ ແລະ ສີວິໄລ".**

# ບົດທີ 3
# ຕັ້ງໜ້າຝຶກຝົນຫຼໍ່ຫຼອມ
# ຄຸນທາດການເມືອງ ແລະ ຄຸນສົມບັດສິນທຳປະຕິວັດ

**✱ ຈຸດປະສົງ-ລະດັບຄາດໝາຍ.**

1. ເພື່ອເຮັດໃຫ້ພະນັກງານ, ສະມາຊິກພັກ ມີຄວາມຮັບຮູ້, ເຂົ້າໃຈ ກ່ຽວກັບຄວາມໝາຍ ແລະ ຄວາມສຳຄັນ ຂອງຄຸນທາດການເມືອງ ແລະ ຄຸນສົມບັດສິນປະຕິວັດ.

2. ເຂົ້າໃຈກ່ຽວກັບ ເນື້ອໃນຂອງຄຸນທາດການເມືອງ ແລະ ຄຸນສົມບັດສິນທຳປະຕິວັດ ຂອງພະນັກງານ, ສະມາຊິກພັກ.

3. ບົນພື້ນຖານຄວາມຮັບຮູ້, ເຂົ້າໃຈ ດັ່ງກ່າວນັ້ນ ພະນັກງານ, ສະມາຊິກພັກທຸກສະຫາຍ ຕ້ອງເອົາໃຈໃສ່ຍົກສູງຄວາມເປັນແບບຢ່າງນຳໜ້າ ໃນການຝຶກຝົນຫຼໍ່ຫຼອມ ຄຸນທາດການເມືອງ ແລະ ຄຸນສົມບັດສິນທຳປະຕິວັດ ເພື່ອເຮັດໃຫ້ພະນັກງານ, ສະມາຊິກພັກ ມີຫຼັກໝັ້ນຊຶນຊັ້ນທີ່ໜັກແໜ້ນ ແລະ ເປັນການສະແດງເຖິງ ຄວາມຈົງຮັກພັກດີ ແລະ ນ້ຳໃຈປະຕິວັດ ສຸດກົກສຸດປາຍຂອງພະນັກງານ, ສະມາຊິກພັກ.

## I. ຄວາມໝາຍ, ຄວາມສຳຄັນ ຂອງຄຸນທາດການເມືອງ ແລະ ຄຸນສົມບັດສິນທຳປະຕິວັດ.

### 1. ຄວາມໝາຍ ແລະ ຄວາມສຳຄັນ ຂອງຄຸນທາດການເມືອງ.

**①. ຄວາມໝາຍ ຂອງຄຸນທາດການເມືອງ.**

- ຄຸນທາດການເມືອງ ແມ່ນອົງປະກອບອັນໜຶ່ງທີ່ສຳຄັນ ຢູ່ໃນຄຸນນະພາບ ຂອງສະມາຊິກພັກແຕ່ລະສະຫາຍ, ແມ່ນມາດຖານແຖວໜ້າ, ແມ່ນຄວາມຮຽກຮ້ອງຕ້ອງການອັນເປັນພື້ນຖານທີ່ຂາດບໍ່ໄດ້ ທັງເປັນພື້ນຖານໃຫ້ແກ່ການຝຶກຝົນຫຼໍ່ຫຼອມ ຄຸນສົມບັດສິນທຳປະຕິວັດ ແລະ ການເຄື່ອນໄຫວປະຕິບັດໜ້າທີ່ວຽກງານປະຈຳວັນ ຂອງພະນັກງານ, ສະມາຊິກພັກ.

- ເນື້ອແທ້ ຂອງຄຸນທາດການເມືອງ ແມ່ນໝາຍເຖິງ ທັດສະນະຫຼັກໝັ້ນຊຶນຊັ້ນ, ທັດສະນະມິດ-ສັດຕູ ແລະ ຄວາມເດັດດ່ຽວໜຽວແໜ້ນ ຕໍ່ອຸດົມການສັງຄົມນິຍົມ.

**②. ຄວາມສຳຄັນ ຂອງຄຸນທາດການເມືອງ.**

- ພັກປະຊາຊົນປະຕິວັດລາວ ນັບແຕ່ມື້ກຳເນີດ ໄດ້ຖືສຳຄັນ ແລະ ເອົາໃຈໃສ່ ສ້າງຖັນແຖວພະນັກງານ, ສະມາຊິກພັກ ໃຫ້ມີຄຸນທາດການເມືອງ ທີ່ໜັກແໜ້ນ.

- ຖ້າພະນັກງານ, ສະມາຊິກພັກ ມີຄຸນທາດການເມືອງໜັກແໜ້ນ ປະເທດຊາດ ກໍຍິ່ງຈະພັດທະນາກ້າວໜ້າໄປເລື້ອຍໆ; ກົງກັນຂ້າມ, ຖ້າສະມາຊິກພັກ, ພະນັກງານ ບໍ່ມີຄຸນທາດການເມືອງ ປະເທດຊາດຈະບໍ່ໄດ້ຮັບການພັດທະນາ. ສະນັ້ນ, ຮຽກຮ້ອງໃຫ້ພະນັກງານ, ສະມາຊິກພັກ ມີຄວາມໜັກແໜ້ນດ້ານຄຸນທາດການເມືອງ ເພື່ອຈັດຕັ້ງປະຕິບັດແນວທາງ, ແຜນນະໂຍບາຍຂອງພັກໃຫ້ເປັນຈິງ ເພາະວ່າ ພະນັກງານ, ສະມາຊິກພັກ ເປັນປັດໄຈຕັດສິນຜົນໄດ້, ຜົນເສຍ ໃນການຈັດຕັ້ງປະຕິບັດແນວທາງ, ແຜນນະໂຍບາຍຂອງພັກ.

## 2. ຄວາມໝາຍ ແລະ ຄວາມສຳຄັນ ຂອງຄຸນສົມບັດສິນທຳປະຕິວັດ.

### ①. ຄວາມໝາຍ ຂອງຄຸນສົມບັດສິນທຳປະຕິວັດ.

- ຄຸນສົມບັດສິນທຳປະຕິວັດຂອງພະນັກງານ, ສະມາຊິກພັກ ແມ່ນອົງປະກອບໜຶ່ງທີ່ສຳຄັນ ຂອງຄຸນທາດການເມືອງ; ມັນແມ່ນອາລົມຈິດ, ແມ່ນແບບແຜນການເຄື່ອນໄຫວເຮັດວຽກ, ດຳລົງຊີວິດໃນສັງຄົມ ແລະ ໃນຄອບຄົວຂອງພະນັກງານ, ສະມາຊິກພັກ ແຕ່ລະສະຫາຍ.

- ຄຸນສົມບັດສິນທຳປະຕິວັດ ແມ່ນສິ່ງຕັດສິນຄວາມກ້າວໜ້າຂອງພະນັກງານ, ສະມາຊິກພັກ ແຕ່ລະສະຫາຍ.

### ②. ຄວາມສຳຄັນ ຂອງຄຸນສົມບັດສິນທຳປະຕິວັດ.

- ການຝຶກຝົນຫຼໍ່ຫຼອມຕົນເອງ ໃຫ້ມີຄຸນສົມບັດສິນທຳປະຕິວັດ ມີຄວາມສຳຄັນທີ່ສຸດ ຕໍ່ພະນັກງານ, ສະມາຊິກພັກ. ພັກເຮົາຖືວ່າ ຄຸນສົມບັດເປັນຫຼັກ ແລະ ຄວາມສາມາດເປັນສິ່ງສຳຄັນທີ່ຂາດບໍ່ໄດ້, ພະນັກງານນຳພາຜູ້ໜຶ່ງ, ຖ້າມີແຕ່ຄຸນສົມບັດສິນທຳປະຕິວັດ, ແຕ່ຂາດຄວາມຮູ້, ຄວາມສາມາດ ແມ່ນເຮັດວຽກຫຍັງກໍຍາກ; ກົງກັນຂ້າມ, ຖ້າມີແຕ່ຄວາມຮູ້, ຄວາມສາມາດເກັ່ງ, ແຕ່ຂາດຄຸນສົມບັດສິນທຳປະຕິວັດ ແມ່ນບໍ່ສາມາດນຳພາການປະຕິວັດໄດ້ ຫຼື ໃຊ້ການບໍ່ໄດ້.

- ຄຸນສົມບັດສິນທຳປະຕິວັດ ເນື້ອແທ້ແມ່ນ ຄຸນນະພາບຂອງສະມາຊິກພັກ, ຖ້າຫາກສະມາຊິກພັກມີຄຸນນະພາບດີ ເປັນສ່ວນຫຼາຍ, ພັກກໍມີຄວາມເຂັ້ມແຂງ ສາມາດນຳພາມະຫາຊົນໄດ້; ກົງກັນຂ້າມ, ຖ້າມີສະມາຊິກພັກ ສ່ວນຫຼາຍຄຸນນະພາບບໍ່ດີ, ພັກກໍບໍ່ເຂັ້ມແຂງ ແລະ ບໍ່ສາມາດນຳພາມະຫາຊົນໄດ້.

## II. ເນື້ອໃນ ຂອງຄຸນທາດການເມືອງ ແລະ ຄຸນສົມບັດສິນທຳປະຕິວັດ.

## 1. ເນື້ອໃນ ຂອງຄຸນທາດການເມືອງ.

### ①. ມີຄວາມເຊື່ອໝັ້ນ ຕໍ່ອຸດົມການສັງຄົມນິຍົມຢ່າງຕາຍໃຈ.

ພະນັກງານ, ສະມາຊິກພັກ ຕ້ອງມີຄວາມເຊື່ອໝັ້ນ ຕໍ່ລັດທິສັງຄົມນິຍົມ ຢ່າງໜັກແໜ້ນ; ມີຄວາມຈົງຮັກພັກດີຕໍ່ພັກ, ຕໍ່ປະເທດຊາດ ແລະ ຕໍ່ລະບອບປະຊາທິປະໄຕ ຢ່າງໜັກແໜ້ນ; ມີຄວາມຕື່ນຕົວ ເປັນເຈົ້າການເສີມຂະຫຍາຍສິດເປັນເຈົ້າ, ມີມານະຈິດອົດທົນຜ່ານຜ່າຄວາມຫຍຸ້ງຍາກ ແລະ ມີນ້ຳໃຈເສຍສະຫຼະ ເພື່ອຄວາມຮັ່ງມີ-ຜາສຸກ ຂອງປະຊາຊົນລາວບັນດາເຜົ່າ ກໍຄື ເພື່ອຄວາມກ້າວໜ້າຂອງປະເທດຊາດ.

### ②. ມີຫຼັກໝັ້ນມິດ-ສັດຕູ ອັນຈະແຈ້ງ.

ພະນັກງານ, ສະມາຊິກພັກ ຕ້ອງເດັດດ່ຽວໜຽວແໜ້ນຕໍ່ສູ້ກັບກົນອຸບາຍມ້າງເພທຳລາຍຂອງອິທິກຳປໍລະປັກ ແລະ ກຸ່ມຄົນບໍ່ດີ ໃນທຸກຮູບແບບ ເພື່ອປົກປັກຮັກສາປະເທດຊາດ ແລະ ຄວາມໝັ້ນຄົງຂອງລະບອບປະຊາທິປະໄຕປະຊາຊົນ; ຕ້ອງເປັນເຈົ້າການສະກັດກັ້ນການຫັນປ່ຽນດ້ວຍຕົນເອງ ຢູ່ພາຍໃນຂອງພວກເຮົາ, ມີຄວາມສະດຸ້ງໄວ ແລະ ມີສະຕິລະວັງຕົວສູງ, ບໍ່ຫວັ່ນໄຫວຄອນແຄນຕໍ່ກົນອຸບາຍຫັນປ່ຽນໂດຍສັນຕິຂອງສັດຕູ; ຮູ້ປຸກລະດົມຈັດຕັ້ງນຳພາມະຫາຊົນ, ໝູນໃຊ້ຮູບແບບ ແລະ ວິທີການຕໍ່ສູ້ ທີ່ສອດຄ່ອງ, ເໝາະສົມ ເພື່ອຮັບປະກັນສະຖຽນລະພາບ ແລະ ຄວາມໝັ້ນຄົງຂອງປະເທດຊາດ.

**③. ມີຄວາມຮູ້ກ່ຽວກັບລັດທິມາກ-ເລນິນ ແລະ ແນວທາງແຜນນະໂຍບາຍຂອງພັກ ຢ່າງເລິກເຊິ່ງ.**

ພະນັກງານ, ສະມາຊິກພັກ ຕ້ອງຕັ້ງໜ້າຄົ້ນຄວ້າຮໍ່າຮຽນທິດສະດີມາກ-ເລນິນ, ຄົ້ນຄວ້າເຊື່ອມຊຶມ ແລະ ກໍາແໜ້ນແນວທາງ, ແຜນນະໂຍບາຍຂອງພັກ, ນະໂຍບາຍ, ລະບຽບກົດໝາຍຂອງລັດໃຫ້ເລິກເຊິ່ງ; ມີຄວາມສາມາດຫັນແນວທາງ, ແຜນນະໂຍບາຍຂອງພັກ ມາເປັນແຜນການ ແລະ ໂຄງການ ວຽກງານລະອຽດຂອງຄະນະພັກ, ຂອງຂະແໜງການ ແລະ ທ້ອງຖິ່ນຕົນ; ຮູ້ໂຄສະນາ-ປຸກລະດົມ ແລະ ຈັດຕັ້ງນໍາພາຂະບວນການປະຕິວັດ ດ້ວຍຈິດໃຈຮັກຊາດອັນແທ້ຈິງ, ເສີມຂະຫຍາຍຈິດໃຈເພິ່ງຕົນເອງ, ສ້າງຄວາມເຂັ້ມແຂງດ້ວຍຕົນເອງ ເພື່ອນໍາເອົາຄວາມຮັ່ງມີ-ຜາສຸກ ມາໃຫ້ປະເທດຊາດ ແລະ ປະຊາຊົນ; ຕ້ອງກໍາແໜ້ນແນວທາງການຕ່າງປະເທດ ແລະ ທິດທາງ, ຫຼັກການດ້ານການເປີດກວ້າງການພົວພັນຮ່ວມມື, ການເຊື່ອມໂຍງກັບພາກພື້ນ ແລະ ສາກົນຂອງພັກ, ຮູ້ຍາດແຍ່ງ, ກໍາແໜ້ນກາລະໂອກາດ ເພື່ອພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ໃຫ້ມີບາດກ້າວຂະຫຍາຍຕົວຢ່າງບໍ່ຢຸດຢັ້ງ.

**④. ມີຄວາມຮັບຜິດຊອບຕໍ່ໜ້າທີ່, ວຽກງານທີ່ໄດ້ຮັບການມອບໝາຍສູງ.**

ພະນັກງານ, ສະມາຊິກພັກ ຕ້ອງຍົກສູງຄວາມຮັບຜິດຊອບການເມືອງ, ມີຄວາມຫ້າວຫັນເປັນເຈົ້າການປະຕິບັດວຽກງານດ້ວຍຄວາມປະດິດສ້າງ, ມີຄວາມກ້າຫານຮັບຜິດຊອບຕໍ່ຜົນໄດ້, ຜົນເສຍ ໃນການປະຕິບັດໜ້າທີ່ວຽກງານ; ບໍ່ເລືອກວຽກ, ການຈັດຕັ້ງມອບໝາຍຫຍັງໃຫ້ ກໍຕ້ອງຕັດສິນໃຈເຮັດໃຫ້ສໍາເລັດ ແລະ ເຮັດວຽກມີປະສິດທິຜົນສູງ.

**⑤. ມີຄວາມເຊື່ອໝັ້ນ ຕໍ່ກໍາລັງແຮງ ແລະ ສະຕິປັນຍາຂອງມະຫາຊົນຢ່າງໜັກແໜ້ນ.**

ສະມາຊິກພັກ ຕ້ອງຮູ້ປຸກລະດົມຂົນຂວາຍ ແລະ ເສີມຂະຫຍາຍກໍາລັງແຮງສັງລວມຂອງປະຊາຊົນບັນດາເຜົ່າ, ຊັ້ນຄົນຕ່າງໆ ແລະ ບັນດາພາກສ່ວນເສດຖະກິດ; ຮູ້ຂຸດຄົ້ນ ແລະ ນໍາໃຊ້ທ່າແຮງກັບທີ່, ທັງທ່າແຮງດ້ານຊັບພະຍາກອນທໍາມະຊາດ ແລະ ທ່າແຮງດ້ານກໍາລັງຄົນ ເຂົ້າໃນການແກ້ໄຂຄວາມທຸກຍາກ ແລະ ການພັດທະນາປະເທດຊາດ ເພື່ອບັນລຸອຸດົມການ ທີ່ພັກເຮົາກໍານົດໄວ້.

**⑥. ເຄົາລົບ ແລະ ປະຕິບັດກົດລະບຽບຂອງພັກ, ກົດໝາຍຂອງລັດ ຢ່າງເຂັ້ມງວດ.**

ພະນັກງານ, ສະມາຊິກພັກ ຈະຢູ່ໃນຖານະຕໍາແໜ່ງໃດກໍຕາມ, ຕ້ອງເຄົາລົບ ແລະ ປະຕິບັດກົດໝາຍຢ່າງເຂັ້ມງວດ, ມີສະຕິຕໍ່ການຈັດຕັ້ງ, ມີລະບຽບວິໄນ, ເປັນການນໍາຂັ້ນສູງເທົ່າໃດ ຍິ່ງຕ້ອງເປັນແບບຢ່າງທີ່ດີໃນການເຄົາລົບ ແລະ ປະຕິບັດລະບຽບກົດໝາຍ, ບໍ່ເຮັດໃນສິ່ງທີ່ລະເມີດລະບຽບກົດໝາຍ. ພະນັກງານ, ສະມາຊິກພັກ ຕ້ອງເອົາໃຈໃສ່ປົກປັກຮັກສາ ແລະ ທະນຸບໍາລຸງຄວາມສາມັກຄີເປັນເອກະພາບພາຍໃນພັກ, ຕ້ອງສຶກສາອົບຮົມຄອບຄົວ ແລະ ຍາດພີ່ນ້ອງ ບໍ່ໃຫ້ກະທໍາຜິດລະບຽບກົດໝາຍ.

## 2. ເນື້ອໃນ ຂອງຄຸນສົມບັດສິນທໍາປະຕິວັດ.

**①. ມີນໍ້າໃຈເສຍສະຫຼະເພື່ອຊາດ, ເພື່ອປະຊາຊົນ.**

ການມີນໍ້າໃຈເສຍສະຫຼະເພື່ອຊາດ, ເພື່ອສ່ວນລວມ ເນື້ອແທ້ ກໍແມ່ນການສະແດງອອກຂອງໜ້າທີ່ການເມືອງ ອັນເປັນພື້ນຖານກວ່າໝູ່ຂອງຄຸນທາດການເມືອງ ເປັນຕົ້ນແມ່ນ ຄວາມອົດທົນສູ້ຊົນ ເພື່ອເຮັດ

ໃຫ້ແນວທາງແຜນນະໂຍບາຍ ແລະ ອຸດົມຄະຕິຂອງພັກ ເປັນຈິງເທື່ອລະກ້າວ ຄື: ເຮັດໃຫ້ປະຊາຊົນຮັ່ງມີ-ຜາສຸກ ປະເທດຊາດມັ່ງຄັ່ງເຂັ້ມແຂງ, ສັງຄົມສາມັກຄີປອງດອງ, ປະຊາທິປະໄຕ, ຍຸຕິທຳ ແລະ ສີວິໄລ ເທື່ອລະກ້າວ; ການເສຍສະຫຼະເພື່ອປະເທດຊາດ, ເພື່ອປະຊາຊົນ ໝາຍເຖິງ ການທຸ້ມເທສະຕິປັນຍາ ແລະ ກຳລັງແຮງຂອງຕົນ ເພື່ອຮັບໃຊ້ຊາດ ແລະ ປະຊາຊົນ ກໍຄື ຮັບໃຊ້ພາລະກິດຕໍ່ສູ້ປະຕິວັດ ໂດຍບໍ່ເລືອກວຽກ, ບໍ່ລັ່ງເລທໍ້ຖອຍຕໍ່ຄວາມຫຍຸ້ງຍາກໃດໆ; ພະນັກງານ, ສະມາຊິກພັກ ໂດຍສະເພາະ ແມ່ນພະນັກງານການນຳແຕ່ລະຂັ້ນຍິ່ງມີຖານະຕຳແໜ່ງ ແລະ ມີຄວາມຮັບຜິດຊອບສູງເທົ່າໃດ ຍິ່ງຕ້ອງມີຄວາມເສຍສະຫຼະສູງເທົ່ານັ້ນ ການເສຍສະຫຼະເພື່ອຊາດ, ເພື່ອປະຊາຊົນ ຕ້ອງສະແດງອອກໃນການກະທຳ, ແຕ່ບໍ່ແມ່ນໃນຄຳເວົ້າຊື່ໆ ເປັນຕົ້ນແມ່ນ ການເສຍສະຫຼະເວລາ, ເສຍສະຫຼະເລືອດເນື້ອ, ເຫື່ອແຮງ ແລະ ສະຕິປັນຍາ, ເສຍສະຫຼະຄວາມສຸກສ່ວນຕົວ ເພື່ອປະຕິບັດໜ້າທີ່ດ້ວຍຄວາມຮັບຜິດຊອບສູງ, ສູ້ຊົນເຮັດຫຼ້ອນໜ້າທີ່ ໂດຍບໍ່ຮຽກຮ້ອງ, ເລັ່ງທວງເອົາຜົນປະໂຫຍດໃດໆໃຫ້ຕົນ ນອກເໜືອຈາກ ນະໂຍບາຍລວມຂອງພັກ, ຂອງລັດ ໄດ້ກຳນົດໄວ້.

**໒. ມີຄວາມດຸໝັ່ນ, ພາກພຽກ, ສັດຊື່, ປະຢັດ ແລະ ປອດໃສ.**

ເປັນພະນັກງານ, ສະມາຊິກພັກ ໂດຍສະເພາະ ຜູ້ທີ່ເປັນຫຼັກແຫຼ່ງນຳພາ, ຄຸ້ມຄອງ ຕ້ອງດຸໝັ່ນ, ປະຢັດ, ສັດຊື່ ແລະ ມີຄວາມປອດໃສ, ເປັນແບບຢ່າງທີ່ດີ ເພື່ອໃຫ້ຂັ້ນລຸ່ມ ແລະ ຜູ້ອື່ນໄດ້ຮຽນນຳ, ເພາະວ່າ: **"ຄວາມເປັນແບບຢ່າງທີ່ດີ ແມ່ນການນຳພາທີ່ດີ"** ຫາກຂາດຄວາມເປັນແບບຢ່າງທີ່ດີ, ມະຫາຊົນກໍບໍ່ນັບຖື ແລະ ຂາດຄວາມເຊື່ອໝັ້ນ ຊຶ່ງສິ່ງຜົນສະທ້ອນທາງລົບໂດຍກົງ ຕໍ່ພາລະບົດບາດການນຳພາຂອງພັກ ຄວາມເປັນແບບຢ່າງທີ່ດີ ຕ້ອງສະແດງອອກທັງຄຳເວົ້າ ແລະ ການກະທຳ.

**- ດຸໝັ່ນ:** ແມ່ນເຮັດວຽກດ້ວຍຄວາມຕັ້ງໜ້າບຸກບືນ, ຕື່ນຕົວເປັນເຈົ້າການ; ຫາກບໍ່ແມ່ນໃຫ້ຜູ້ອື່ນມາບອກ, ມາສັ່ງຈຶ່ງເຮັດ; ວຽກຍາກ ຫຼື ວຽກງ່າຍ ກໍຕ້ອງອົດທົນເຮັດໃຫ້ສຳເລັດມີປະສິດທິຜົນສູງ; ເຮັດໃຫ້ດີທີ່ສຸດ, ເຮັດໃຫ້ໄວ, ເຮັດໃຫ້ຖືກກົດໝາຍ ແລະ ມີຄວາມຮັບຜິດຊອບສູງ.

**- ພາກພຽນ:** ແມ່ນເຮັດວຽກດ້ວຍຄວາມມານະ, ອົດທົນ ໂດຍມີການຄົ້ນຄິດໝູນໃຊ້ຄວາມຮູ້, ຄວາມສາມາດ ເຂົ້າໃນວຽກງານໃຫ້ເກີດຜົນປະໂຫຍດສູງສຸດ, ເຮັດວຽກມີແຜນການ, ມີການຕິດຕາມ, ກວດກາເຫັນອັນດີ, ປັດໄຈໃໝ່ ກໍເອົາໃຈໃສ່ເສີມຂະຫຍາຍ, ເຫັນຈຸດອ່ອນ, ຂໍ້ຄົງຄ້າງ ກໍພະຍາຍາມປັບປຸງແກ້ໄຂໃຫ້ດີຂຶ້ນ.

**- ປະຢັດ:** ແມ່ນຮູ້ຈັກໃຊ້, ຮູ້ຈັກຈ່າຍຢ່າງສົມເຫດ, ສົມຜົນ ແລະ ເປັນປະໂຫຍດ, ບໍ່ຫຼິ້ນກິນຟູມເຟືອຍ, ເສລີຊະຊາຍ, ຮູ້ຈັກປົກປັກຮັກສາບົວລະບັດສິ່ງຂອງສ່ວນຕົວ, ສ່ວນລວມ ເພື່ອໃຫ້ໃຊ້ໄດ້ດົນ; ປະຢັດຍັງໝາຍເຖິງ ການໃຊ້ຖືກກັບເປົ້າໝາຍ, ຖືກກັບຈຸດປະສົງ ແລະ ໃຊ້ໃຫ້ເກີດປະໂຫຍດແກ່ສ່ວນລວມຫຼາຍ ເທົ່າທີ່ຈະຫຼາຍໄດ້; ປະຢັດ ຍັງແມ່ນການໃຊ້ຈ່າຍບໍ່ຟູມເຟືອຍ, ບໍ່ໃຊ້ຈ່າຍເກີນຖານະຕຳແໜ່ງ ແລະ ຖານະການເງິນຂອງຕົນ.

**- ສັດຊື່**: ແມ່ນການກະທຳທີ່ສອດຄ່ອງກັບຄຳເວົ້າ, ບໍ່ຕົວະ, ບໍ່ສໍ້ໂກງ; ບໍ່ສວຍໂອກາດ ຊອກຊ່ອງຫວ່າງ ແລະ ວິທີການ ເພື່ອລັກໂລບ, ຍັກຍອກເອົາຊັບສິນການຈັດຕັ້ງພັກ-ລັດ ແລະ ຂອງຜູ້ອື່ນ ມາເປັນຂອງຕົນເອງ.

**- ປອດໃສ:** ແມ່ນໝາຍເຖິງ ຈິດໃຈ ແລະ ການກະທຳ ທີ່ໃສສະອາດ, ບໍລິສຸດ, ຈິງໃຈຕໍ່ການຈັດຕັ້ງ ແລະ ຕໍ່ຄອບຄົວ; ປອດໃສ ຍັງໝາຍເຖິງ ການກະທຳທີ່ຖືກຕ້ອງຕາມລະບຽບກົດໝາຍ ແລະ ຮີດຄອງປະເພນີອັນດີງາມຂອງຊາດ.

**③. ມີລະບຽບວິໄນ ແລະ ເຄົາລົບກົດໝາຍ.**

ພະນັກງານ, ສະມາຊິກພັກ ຍິ່ງເປັນພະນັກງານການນຳສູງເທົ່າໃດ ຍິ່ງຕ້ອງເປັນຜູ້ນຳໜ້າທີ່ດີ ໃນການຮຽນຮູ້ກ່ຽວກັບກົດໝາຍ, ເຄົາລົບນັບຖືກົດໝາຍ, ປະຕິບັດ ແລະ ນຳໃຊ້ກົດໝາຍຢ່າງເຂັ້ມງວດ, ບໍ່ສວຍໃຊ້ ຫຼື ລະເມີດກົດໝາຍ, ກົດລະບຽບຕ່າງໆ ເພື່ອໃຫ້ຕົນເອງມີຄວາມສະດວກ, ມີຜົນປະໂຫຍດອັນຈະພາໃຫ້ປະຊາຊົນຂາດຄວາມເຊື່ອຖື.

- ການມີລະບຽບວິໄນ ແລະ ເຄົາລົບກົດໝາຍ ຍັງສະແດງອອກໃນການເຄົາລົບສິດເສລີພາບຂອງພົນລະເມືອງ, ເປັນເຈົ້າການປະກອບສ່ວນປົກປ້ອງກົດໝາຍ ແລະ ຄວາມຍຸຕິທຳ, ປະກອບສ່ວນເຂົ້າໃນການຮັກສາຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍ ແລະ ຄວາມປອດໄພໃນສັງຄົມ.

**④. ມີຄວາມສາມັກຄີ ເອື້ອເຟື້ອເພື່ອແຜ່.**

ຄວາມສາມັກຄີ ເອື້ອເຟື້ອເພື່ອແຜ່ ສະແດງອອກ ໃນຄວາມເຄົາລົບນັບຖື ຊຶ່ງກັນ ແລະ ກັນ, ຮັກແພງກັນ, ເຊື່ອໝັ້ນກັນ, ເຮັດວຽກນຳກັນດ້ວຍຄວາມເຂົ້າໃຈກັນ ແລະ ຊ່ວຍເຫຼືອກັນ ໃຫ້ມີຜົນສຳເລັດ, ມີຈິດໃຈເສຍສະຫຼະ ເພື່ອຜູ້ອື່ນດ້ວຍຄວາມບໍລິສຸດໃຈ, ບໍ່ຢ້ານລື່ນຢ້ານເຫຼືອ ແລະ ບໍ່ມີອະຄະຕິ ອິດສາບັງບຽດກັນ.

**⑤. ມີຈິດໃຈຮັກຊາດອັນດູດດື່ມ.**

ຈິດໃຈຮັກຊາດອັນດູດດື່ມ ແມ່ນການສະແດງອອກ ເຖິງລັດທິຮັກຊາດ, ແມ່ນຄວາມພາກພູມໃຈຕໍ່ຊາດ, ມີຄວາມເອກອ້າງທະນົງໃຈເປັນຄົນລາວ, ຄົນລາວມີຈິດໃຈອົງອາດກ້າຫານ, ຊາດລາວວິລະຊົນບໍ່ເຄີຍຍອມຈຳນົນໃຫ້ຊາດອື່ນ ເຂົ້າມາຄອບຄອງ, ມີເອກະລັກ, ມີຮີດຄອງປະເພນີອັນດີງາມ, ອັນໃດແມ່ນຂອງຄົນລາວເຮັດ, ອັນໃດແມ່ນຜະລິດຕະພັນທີ່ດີງາມ ຈາກສະຕິປັນຍາ, ເຫື່ອແຮງ ແລະ ທຶນຮອນຂອງຄົນລາວໃນຊາດ ຕ້ອງຕັ້ງໜ້າປົກປັກຮັກສາ ແລະ ສົ່ງເສີມ; ອັນໃດແມ່ນຜົນສຳເລັດ, ອັນໃດແມ່ນໄຊຊະນະທີ່ຄົນລາວຍາດມາໄດ້ ກໍຕ້ອງມີຄວາມພາກພູມໃຈ, ເອກອ້າງ, ຍ້ອງຍໍສັນລະເສີນ. ນ້ຳໃຈຮັກຊາດ ຍັງສະແດງອອກ ໃນການເປັນເຈົ້າການເຜີຍແຜ່ສິ່ງທີ່ດີງາມຂອງຊາດລາວ ຕໍ່ຕ່າງປະເທດ; ເອົາໃຈໃສ່ໃນການຄົ້ນຄວ້າປະດິດສ້າງເພື່ອຜະລິດວັດຖຸສິ່ງຂອງທີ່ມີຄຸນນະພາບ, ວິຈິດສວຍງາມ ເພື່ອສະແດງໃຫ້ຕ່າງຊາດເຫັນ. ພ້ອມກັນນັ້ນ, ກໍສະແດງອອກ ໃນການມີຈິດໃຈຮ່ວມມື, ແຂ່ງຂັນກັບຊາດອື່ນ ເພື່ອກຽດສັກສີ ແລະ ຊື່ສຽງຂອງຊາດຕົນ.

**⑥. ມີຄວາມສຸພາບຮຽບຮ້ອຍ ແລະ ເຮັດແທ້ທຳຈິງ.**

ເປັນພະນັກງານ, ສະມາຊິກພັກ ນອກຈາກມີຈັນຍາບັນ ແລະ ມີລະບຽບວິໄນແລ້ວ ຍັງຕ້ອງມີຄວາມສຸພາບຮຽບຮ້ອຍ, ສະຫງ່ຽມຄ່ຽມຄົມ, ບໍ່ອວດອົ່ງທະນົງຕົວ, ບໍ່ດູຖູກໝິ່ນປະໝາດຜູ້ອື່ນ; ພະນັກງານ, ສະມາຊິກພັກ ຢາກໄດ້ຮັບກຽດ, ຢາກໄດ້ການເຄົາລົບນັບຖືຈາກຜູ້ອື່ນ ກໍຕ້ອງມີທັດສະນະ ແລະ ການກະທຳໃຫ້

ກຽດແກ່ຜູ້ອື່ນ, ເຄົາລົບນັບຖືເພື່ອນຮ່ວມງານ ແລະ ປະຊາຊົນ; ຕ້ອງເປັນຄົນເຮັດແທ້ທຳຈິງ, ເວົ້າແນວໃດຕ້ອງເຮັດຄືແນວນັ້ນ ແລະ ຕ້ອງເຮັດໃຫ້ດີທີ່ສຸດ, ບໍ່ອະນຸຍາດໃຫ້ເວົ້າແບບໜຶ່ງແລ້ວ ໄປເຮັດອີກແບບໜຶ່ງ, ບໍ່ດັ່ງນັ້ນ ກໍຈະຂາດຄວາມເປັນແບບຢ່າງທີ່ດີ, ຂາດລັກສະນະນຳໜ້າ ແລະ ຂາດຄວາມເຫຼື້ອມໃສສັດທາ ຈາກປະຊາຊົນ.

**໗. ບຸກບືນຮຽນຮູ້ ແລະ ພັດທະນາຕົນເອງ.**

ພະນັກງານ, ສະມາຊິກພັກ ຕ້ອງສະແຫວງຫາ ແລະ ບຸກບືນຄົ້ນຄວ້າຮໍ່າຮຽນ ເພື່ອຍົກລະດັບຄວາມຮູ້ຂອງຕົນໃຫ້ສູງຂຶ້ນໃນທຸກດ້ານ ເຊັ່ນ: ຮຽນຮູ້ດ້ວຍຕົນເອງ, ຮຽນຮູ້ນຳໝູ່ຄູ່ເພື່ອນສະຫາຍ, ຮຽນຕາມຫຼັກການຕຳລາ, ຮຽນຮູ້ນຳວຽກງານຕົວຈິງ. ອັນສຳຄັນທີ່ສຸດ ແມ່ນຮຽນຮູ້ນຳຂະບວນການມະຫາຊົນ ແລະ ຮຽນແລ້ວ ຕ້ອງຮູ້ເຮັດ. ການຮຽນຮູ້ບໍ່ມີວັນສິ້ນສຸດ ທ່ານ ເລນິນ ເວົ້າວ່າ: **"ຮຽນແລ້ວ, ຮຽນອີກ, ຮຽນເລື້ອຍໆໄປ"** ຈຶ່ງຈະສາມາດພັດທະນາຕົນເອງຂະຫຍາຍຕົວຢ່າງບໍ່ຢຸດຢັ້ງ ປະກອບສ່ວນພັດທະນາປະເທດຊາດ ໃຫ້ມັ່ງຄັ່ງເຂັ້ມແຂງໄດ້.

## III. ວິທີການຝຶກຝົນຫຼໍ່ຫຼອມ ຄຸນທາດການເມືອງ ແລະ ຄຸນສົມບັດສິນທຳປະຕິວັດ.

ເພື່ອຝຶກຝົນຫຼໍ່ຫຼອມຕົນເອງ ໃຫ້ມີຄຸນທາດການເມືອງ ແລະ ຄຸນສົມບັດສິນທຳປະຕິວັດອັນໜັກແໜ້ນ ພະນັກງານ, ສະມາຊິກພັກ ຕ້ອງເອົາໃຈໃສ່ ບາງວິທີການຕົ້ນຕໍ ດັ່ງນີ້:

1. ອອກແຮງຄົ້ນຄວ້າຮໍ່າຮຽນ ລັດທິມາກ-ເລນິນ ເປັນປະຈຳ; ເອົາໃຈໃສ່ຄົ້ນຄວ້າເຊື່ອມຊຶມ ແລະ ກຳແໜ້ນແນວທາງ, ແຜນນະໂຍບາຍຂອງພັກ, ລະບຽບກົດໝາຍຂອງລັດ; ເອົາໃຈໃສ່ຮໍ່າຮຽນຍົກລະດັບຄວາມຮູ້ດ້ານຕ່າງໆ ໃຫ້ສູງຂຶ້ນຢ່າງບໍ່ຢຸດຢັ້ງ.

2. ເຂົ້າຮ່ວມດຳເນີນຊີວິດ, ສຳຫຼວດກວດກາເປັນປົກກະຕິ ແລະ ເຂັ້ມງວດ ເພື່ອຊອກໃຫ້ເຫັນດ້ານຕັ້ງໜ້າ ແນໃສ່ປົກປັກຮັກສາ ແລະ ເສີມຂະຫຍາຍ, ພ້ອມກັນນັ້ນ ຕ້ອງຊອກໃຫ້ເຫັນຈຸດອ່ອນ, ຂໍ້ຄົງຄ້າງ ເພື່ອມີວິທີການປັບປຸງແກ້ໄຂ ຢ່າງເດັດຂາດ ແລະ ທັນການ.

3. ເອົາໃຈໃສ່ປັບປຸງທັດສະນະມະຫາຊົນ ໃຫ້ໜັກແໜ້ນ ດ້ວຍການຕັ້ງໜ້າເຂົ້າຮ່ວມຂະບວນການຂອງມະຫາຊົນ ໂດຍຖືເອົາຂະບວນການມະຫາຊົນ ເປັນບ່ອນຝຶກຝົນຫຼໍ່ຫຼອມຕົນເອງ ແລະ ຖືເອົາມະຫາຊົນເປັນຜູ້ສ້າງພັກ.

- ສະມາຊິກພັກຕ້ອງດຳລົງຊີວິດ ແລະ ປະຕິບັດໜ້າທີ່ວຽກງານ ຕິດແທດກັບມະຫາຊົນ, ສະແດງຄວາມເຄົາລົບນັບຖືມະຫາຊົນ, ເຂົ້າໃຈຄວາມທຸກ-ສຸກ, ຄວາມຂັດຂ້ອງໝອງໃຈ ແລະ ຄວາມມຸ່ງມາດປາຖະໜາຂອງມະຫາຊົນ.

- ສະມາຊິກພັກ ຕັ້ງໜ້າຊອກຫາທຸກວິທີທາງ ເພື່ອນຳພາມະຫາຊົນຈັດຕັ້ງປະຕິບັດແນວທາງ, ແຜນນະໂຍບາຍຂອງພັກ ກໍຄື ປະຕິບັດໃຫ້ບັນລຸຈຸດໝາຍ ແຫ່ງຄວາມມຸ່ງມາດປາຖະໜາ ຂອງມະຫາຊົນ.

4. ເອົາໃຈໃສ່ປັບປຸງທັດສະນະຫຼັກໝັ້ນຊົນຊັ້ນ ໃຫ້ໜັກແໜ້ນ ແລະ ຍົກສູງສະຕິລະວັງຕົວຢູ່ສະເໝີ ເພື່ອບໍ່ໃຫ້ມີຊ່ອງຫວ່າງໃຫ້ສັດຕູສວຍໃຊ້ ເພື່ອມ້າງເພທຳລາຍພວກເຮົາ.

5. ເອົາໃຈໃສ່ກໍ່ສ້າງ ແລະ ປັບປຸງພັກໃຫ້ປອດໃສ, ເຂັ້ມແຂງ, ໜັກແໜ້ນຮອບດ້ານ; ກໍ່ສ້າງອົງການປົກຄອງໃຫ້ມີຄວາມເຂັ້ມແຂງ ແລະ ຂະຫຍາຍຕົວຢ່າງບໍ່ຢຸດຢັ້ງ.

6. ບັນຫາທີ່ເປັນພື້ນຖານກວ່າໝູ່ ແມ່ນພະນັກງານ, ສະມາຊິກພັກທຸກສະຫາຍ ຕ້ອງມີຄວາມຕັດສິນໃຈສູງ ໃນການຝຶກຝົນຫຼໍ່ຫຼອມຕົນເອງ ໂດຍເລີ່ມຈາກ ການຍົກສູງຄວາມຮັບຜິດຊອບຕໍ່ວຽກງານທີ່ໄດ້ຮັບມອບໝາຍ ແລະ ເຂັ້ມງວດຕໍ່ຕົນເອງ, ກ້າຫານທັນປ່ຽນດ້ວຍຕົນເອງ, ຍິນດີຮັບເອົາຄຳຕິຊົມຈາກຄົນອື່ນດ້ວຍຄວາມຈິງໃຈ ແລະ ເອົາໃຈໃສ່ຕ້ານລັດທິເອກະຊົນ, ແນວຄິດຂີ້ຄ້ານມັກງ່າຍ, ແນວຄິດຄັບແຄບ, ອວດອົ່ງທະນົງຕົວ.

**ສັງລວມແລ້ວ:** ການຝຶກຝົນຄຸນທາດການເມືອງ ແລະ ຄຸນສົມບັດສິນທຳປະຕິວັດ ແມ່ນໜ້າທີ່ຂອງພະນັກງານ, ສະມາຊິກພັກທຸກຄົນ ຕ້ອງຕັ້ງໜ້າເປັນແບບຢ່າງຝຶກຝົນຫຼໍ່ຫຼອມ ຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດ ເພາະເປັນມາດຖານແຖວໜ້າ, ແມ່ນຄວາມຈຳເປັນອັນຮີບດ່ວນ ຂອງພັກເຮົາ ແລະ ເປັນພື້ນຖານທີ່ຂາດບໍ່ໄດ້ ເພື່ອສ້າງພັກໃຫ້ມີຄວາມປອດໃສ, ເຂັ້ມແຂງ ແລະ ໜັກແໜ້ນ. ສະນັ້ນ, ພະນັກງານ, ສະມາຊິກພັກ ໂດຍສະເພາະ ແມ່ນພະນັກງານນຳພາແຕ່ລະຂັ້ນ ຕ້ອງຕັ້ງໜ້າ ແລະ ເພີ່ມທະວີຄວາມເປັນແບບຢ່າງ ໃນການຝຶກຝົນຫຼໍ່ຫຼອມ ຄຸນທາດການເມືອງ ມີຄຸນສົມບັດສິນປະຕິວັດ ແລະ ແບບແຜນດຳລົງຊີວິດ ທີ່ປອດໃສຂາວສະອາດ; ຍົກສູງນ້ຳໃຈຮັບຜິດຊອບຕໍ່ພັກ, ຕໍ່ປະເທດຊາດ ແລະ ປະຊາຊົນ, ຮັບໃຊ້ຊາດ ຮັບໃຊ້ປະຊາຊົນຢ່າງສຸດໃຈ.

# ບົດທີ 4
# ເດັດດ່ຽວແກ້ໄຂປະກົດການຫຍໍ້ທໍ້
# ໃນຖັນແຖວພະນັກງານ, ສະມາຊິກພັກ

**✱ ຈຸດປະສົງ-ລະດັບຄາດໝາຍ.**

1. ເພື່ອເຮັດໃຫ້ພະນັກງານ, ສະມາຊິກພັກ ມີຄວາມຮັບຮູ້, ເຂົ້າໃຈ ກ່ຽວກັບຄວາມໝາຍ ແລະ ຄວາມຈຳເປັນ ຂອງການແກ້ໄຂປະກົດການຫຍໍ້ທໍ້ ໃນຖັນແຖວພະນັກງານ, ສະມາຊິກພັກ ແລະ ໄພອັນຕະລາຍຂອງປະກົດການຫຍໍ້ທໍ້.

2. ເຂົ້າໃຈກ່ຽວກັບທັດສະນະຂອງພັກ ຕໍ່ກັບການແກ້ໄຂປະ ກົດການຫຍໍ້ທໍ້, ການຝຶກຝົນຫຼໍ່ຫຼອມຕົນເອງ ຂອງພະນັກງານ, ສະມາຊິກພັກ ແລະ ບາງວິທີຈັດຕັ້ງປະຕິບັດ ຕໍ່ກັບການແກ້ໄຂປະກົດການຫຍໍ້ທໍ້ ສຳລັບພະນັກງານ, ສະມາຊິກພັກ.

3. ບົນພື້ນຖານຄວາມຮັບຮູ້, ເຂົ້າໃຈດັ່ງກ່າວ ເພື່ອປັບປຸງກໍ່ສ້າງພັກໃຫ້ໜັກແໜ້ນ, ເຂັ້ມແຂງ, ຮັກສາໄດ້ບົດບາດ ແລະ ຄວາມສາມາດກຳອຳນາດຂອງພັກ, ເຮັດໃຫ້ພັກ ມີຄວາມເປັນເອກະພາບທາງດ້ານແນວຄິດ ແລະ ການກະທຳຂອງພັກ, ຮັບປະກັນໃຫ້ພັກສືບຕໍ່ນຳພາລະກິດປົກປັກຮັກສາ ແລະ ພັດທະນາປະເທດຊາດ ໃຫ້ກ້າວເດີນໄປຕາມທິດທີ່ພັກກຳນົດໄວ້; ເພື່ອປັບປຸງທັດສະນະ, ຄວາມຮັບຮູ້ເຂົ້າໃຈ, ຄວາມຮັບຜິດຊອບ ແລະ ຍົກສູງຄວາມເປັນແບບຢ່າງນຳໜ້າ ຂອງພະນັກງານນຳພາ-ຄຸ້ມຄອງ ແຕ່ລະຂັ້ນ, ສະມາຊິກພັກ, ພະນັກງານທຸກລະດັບ ຕໍ່ການແກ້ໄຂປະກົດການຫຍໍ້ທໍ້ຕ່າງໆ ໃນຖັນແຖວພະນັກງານ, ສະມາຊິກພັກໃຫ້ໝົດໄປ.

## I. ຄວາມໝາຍ ແລະ ຄວາມຈຳເປັນ ຂອງການແກ້ໄຂປະກົດການຫຍໍ້ທໍ້ ໃນຖັນແຖວພະນັກງານ, ສະມາຊິກພັກ.

### 1. ຄວາມໝາຍ ຂອງການແກ້ໄຂປະກົດການຫຍໍ້ທໍ້ ໃນຖັນແຖວພະນັກງານ, ສະມາຊິກພັກ.

- ປະກົດການຫຍໍ້ທໍ້ ໃນຖັນແຖວພະນັກງານ, ສະມາຊິກພັກ ເປັນການເສື່ອມຖອຍຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດ, ທັດສະນະແນວຄິດ ແລະ ການກະທຳທີ່ບໍ່ຖືກຕ້ອງ, ຂາດສະຕິຄວາມຮັບຜິດຊອບຕໍ່ໜ້າທີ່ການເມືອງ ແລະ ຂາດຄວາມເປັນແບບຢ່າງ ໃນການດຳລົງຊີວິດ ຫຼື ມີການລະເມີດກົດລະບຽບຂອງພັກ ແລະ ກົດໝາຍຂອງລັດ ຂອງພະນັກງານ, ສະມາຊິກພັກ ຊຶ່ງປະກົດການຫຍໍ້ທໍ້ທີ່ໜ້າເປັນຫ່ວງໄດ້ສະແດງອອກໃນປັດຈຸບັນ ແມ່ນການຊີ້ນຳ-ນຳພາ ຫ່າງເຫີນປະຊາຊົນ, ຫ່າງເຫີນຈາກຕົວຈິງ, ເວົ້າແບບລວມໆ, ຊີ້ນຳແບບຜີວເຜີນ, ມັກໃຊ້ແຕ່ຄຳສັ່ງ, ຂາດການວິເຄາະ, ໄຈ້ແຍກບັນຫາຢ່າງລະອຽດ, ເຂົ້າໃຈເປົ້າໝາຍແບບລວມໆ, ພິຈາລະນາ ແລະ ຕົກລົງບັນຫາບໍ່ແທດຕົວຈິງ, ບໍ່ຖືສຳຄັນການຕິດຕາມ, ຊຸກຍູ້, ກວດກາ, ປະເມີນຜົນ ແລະ ຖອດຖອນບົດຮຽນຈາກພຶດຕິກຳ ຈາກນັ້ນ, ຈຶ່ງມີສະພາບເວົ້າຫຼາຍ ແຕ່ເຮັດບໍ່ເປັນ, ເວົ້າດີແຕ່ເຮັດບໍ່ເກີດ, ຂະບວນການຄຶແຕ່ຫົວທີ ແຕ່ບໍ່ຍືນຍົງ; ອວດຮັ່ງ-ອວດມີ, ໃຊ້ຈ່າຍຟູມເຟືອຍ, ໂລບມາກໂລພາ, ສໍ້ໂກງຍັກຍອກເອົາເງິນ, ເອົາຊັບສິນຂອງລັດ, ຂອງປະຊາຊົນ, ສວຍໂອກາດສ້າງຄວາມລ້ຳລວຍ, ຫຼິ້ນການ

ພະນັນ, ຄ້າຂາຍເຖື່ອນ, ຄ້າຂາຍສິ່ງເສບຕິດ, ເຫັນແກ່ກຸ່ມກ້ອນພັກພວກ, ຈຸ້ມເຈື້ອເຊື້ອສາຍ, ອະຄະຕິຕໍ່ຜູ້ອື່ນ, ອິດສາບັງບຽດ, ປັກປໍ້າຜູ້ອື່ນ... ສິ່ງເຫຼົ່ານັ້ນ ມັນກະທົບໂດຍກົງ ເຖິງປະສິດທິພາບ ແລະ ຄຸນນະພາບຂອງການນຳພາຄຸ້ມຄອງ. ໃນມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ ກໍໄດ້ຢືນຢັນວ່າ: ສະມາຊິກພັກ, ພະນັກງານຈຳນວນບໍ່ໜ້ອຍ ຂາດຄວາມເປັນເຈົ້າການ ໃນການຈັດຕັ້ງປະຕິບັດໜ້າທີ່ ທີ່ຖືກມອບໝາຍ, ນ້ຳໃຈເສຍສະຫຼະເພື່ອຜົນປະໂຫຍດສ່ວນລວມບໍ່ທັນສູງ ແລະ ບໍ່ກ້າຕໍ່ສູ້ ຕ້ານທ່າອ່ຽງ ແລະ ປະກົດການຜິດເຂວ; ປະກົດການເລືອກວຽກທີ່ມີຄວາມແອບແຝງດ້ານຜົນປະໂຫຍດ ກໍຄື ປະກົດການສວຍໃຊ້ຕຳແໜ່ງ, ໜ້າທີ່ ເພື່ອຫາຜົນປະໂຫຍດສ່ວນຕົວ ແລະ ກຸ່ມກ້ອນຂອງເຈົ້າໜ້າທີ່ລັດ. ຍິ່ງໄປກວ່ານັ້ນ ຈຳນວນໜຶ່ງ ຍັງຕິດຫ້ອຍກັບຄວາມເຂົ້າໃຈແບບເດີມໆ, ບໍ່ກ້າປ່ຽນແປງໄປສູ່ອັນໃໝ່ ຈຶ່ງບໍ່ສາມາດເສີມຂະຫຍາຍ ຄວາມເປັນເຈົ້າການບຸກເບີກ, ປະດິດສ້າງ ໃນການແກ້ໄຂບັນຫາທີ່ເກີດຂຶ້ນ ຢູ່ແຕ່ລະບ່ອນ.

- ການແກ້ໄຂປະກົດການຫຍໍ້ທໍ້ ຂອງພະນັກງານ, ສະມາຊິກພັກ ແມ່ນເພື່ອເຮັດໃຫ້ບັນຫາທີ່ກ່າວມາຂ້າງເທິງນັ້ນ ຫຼຸດໜ້ອຍຖອຍລົງ ຫຼື ແກ້ໄຂໃຫ້ຕົກໄປຢ່າງຂາດຕົວເທື່ອລະກ້າວ. ການແກ້ໄຂປະກົດການຫຍໍ້ທໍ້ຂອງພະນັກງານ, ສະມາຊິກພັກ ເນື້ອແທ້ແມ່ນ ການຍົກສູງຄວາມເຂັ້ມແຂງໃຫ້ແກ່ການຈັດຕັ້ງພັກທຸກຂັ້ນ, ສະມາຊິກພັກທຸກສະຫາຍ ໃຫ້ມີຄວາມປອດໃສ ຊຶ່ງເອີ້ນວ່າ ແມ່ນການປາບພະຍາດຮ້າຍ ເພື່ອກູ້ເອົາຄືນ ແລະ ເປັນການຍົກສູງຖານະບົດບາດຂອງການຈັດຕັ້ງ ໃຫ້ເປັນທີ່ເຄົາລົບນັບຖື ຈາກປະຊາຊົນດີຂຶ້ນ.

## 2. ຄວາມຈຳເປັນ ຂອງການແກ້ໄຂປະກົດການຫຍໍ້ທໍ້ ໃນຖັນແຖວພະນັກງານ, ສະມາຊິກພັກ.

ປະເທດຊາດເຮົາ ກຳລັງພົບພໍ້ຄວາມຫຍຸ້ງຍາກ ທາງດ້ານເສດຖະກິດ-ການເງິນ, ໄພເງິນເຟີ້, ຄ່າຄອງຊີບສູງຢູ່ແລ້ວ ຊໍ້າບໍ່ພໍພັດຍັງມີພະນັກງານ, ສະມາຊິກພັກ ເກີດມີປະກົດການຫຍໍ້ທໍ້ຕື່ມອີກ ເຊັ່ນ: ການສໍ້ລາດບັງຫຼວງ, ຫຼິ້ນກິນຟູມເຟືອຍ, ຕັ້ງໜ້າເຮັດຜິດຕໍ່ກົດໝາຍຂອງລັດ ແລະ ອື່ນໆ ຊຶ່ງສິ່ງດັ່ງກ່າວນີ້ ພວມແຜ່ຫຼາຍ ໃນກົງຈັກຂອງພັກ ແລະ ລັດເຮົາ; ກຳລັງສ້າງຄວາມເສື່ອມເສຍຕໍ່ປະເທດຊາດ, ເປັນຫົ່ນແໜງຄວາມສ່ຽງຕໍ່ຄວາມສະຫງົບທາງການເມືອງ ແລະ ສັງຄົມ, ເປັນສິ່ງທ້າທາຍຕໍ່ການຄົງຕົວຂອງລະບອບການເມືອງ, ລະບອບປະຊາທິປະໄຕປະຊາຊົນ, ຕໍ່ບົດບາດການນຳພາຂອງພັກ, ການຄຸ້ມຄອງຂອງລັດ ແລະ ບັ່ນທອນຄວາມເຊື່ອໝັ້ນ, ສັດທາຂອງປະຊາຊົນ ຕໍ່ພັກ, ຕໍ່ແນວທາງ. ອຳນາດການປົກຄອງພວກເຮົາ ຕ້ອງແກ້ໄຂປະກົດການຫຍໍ້ທໍ້ທີ່ເກີດຂຶ້ນຢູ່ໃນຖັນແຖວພະນັກງານ, ສະມາຊິກພັກຢ່າງເຂັ້ມງວດ, ຈິງຈັງ ແລະ ຂາດຕົວ ຕົກໄປເທື່ອລະກ້າວ ເພື່ອຮັບປະກັນສ້າງຄວາມປອດໃສ, ເຂັ້ມແຂງ, ໜັກແໜ້ນ ຂອງການຈັດຕັ້ງພັກ, ຄວາມໂປ່ງໃສ ແລະ ປະສິດທິພາບຂອງອົງການລັດ, ເພີ່ມຄວາມເຊື່ອໝັ້ນຕໍ່ພັກຫຼາຍຂຶ້ນ ແລະ ຍາດແຍ່ງກຳລັງແຮງຈາກປະຊາຊົນ.

## 3. ໄພອັນຕະລາຍ ຂອງປະກົດການຫຍໍ້ທໍ້ ໃນຖັນແຖວພະນັກງານ, ສະມາຊິກພັກ.

ບັນຫາປະກົດການຫຍໍ້ທໍ້ ໃນຖັນແຖວພະນັກງານ, ສະມາຊິກພັກ ຖືວ່າ ເປັນໄພອັນຕະລາຍຮ້າຍແຮງຕໍ່ຄວາມສະຫງົບສຸກ ແລະ ຄວາມໝັ້ນຄົງຂອງລະບອບໃໝ່. ປັດຈຸບັນ ປະກົດການຫຍໍ້ທໍ້ອັນໜຶ່ງ ທີ່ສະແດງອອກແຈ້ງ ແລະ ມີລັກສະນະແຜ່ຫຼາຍທົ່ວໄປ ຢູ່ໃນຖັນແຖວພະນັກງານ, ສະມາຊິກພັກ ແມ່ນການສໍ້ລາດບັງຫຼວງ ຊຶ່ງພວມເປັນໄພອັນຕະລາຍຮ້າຍແຮງ ຕໍ່ການພັດທະນາເສດຖະກິດ-ສັງຄົມ, ເປັນໄພຂົ່ມຂູ່ຕໍ່ສະຖຽນລະພາບ ແລະ ຄວາມໝັ້ນຄົງຂອງຊາດ, ເປັນບັນຫາສຳຄັນ ທີ່ສ້າງຄວາມເສຍຫາຍ ໃຫ້ແກ່ບົດບາດການນຳພາຂອງ

ພັກ, ທຳລາຍປະເທດຊາດ ແລະ ຄວາມສັກສິດ ໃນການຄຸ້ມຄອງລັດ, ຄຸ້ມຄອງສັງຄົມດ້ວຍກົດໝາຍຫຼຸດລົງ. ຖ້າບໍ່ໄດ້ຮັບການເອົາໃຈໃສ່ແກ້ໄຂ ຢ່າງຖືກຕ້ອງເໝາະສົມ ມັນຈະສ້າງຄວາມເສຍຫາຍຢ່າງມະຫາສານ ທາງດ້ານຊີວິດ, ຊັບສິນ ເປັນຈຳນວນຫຼວງຫຼາຍ, ເຮັດໃຫ້ສັງຄົມບໍ່ມີຄວາມສະຫງົບ, ປອດໄພ ແລະ ກາຍເປັນສິ່ງທ້າທາຍ, ເປັນອຸປະສັກອັນໃຫຍ່ຫຼວງທີ່ກົດໜ່ວງທ່ວງດຶງ ຕໍ່ການສ້າງສາພັດທະນາ ແລະ ສະຖຽນລະພາບຂອງປະເທດເຮົາ, ມີຜົນກະທົບອັນບໍ່ດີ ຕໍ່ລະບອບປະຊາທິປະໄຕປະຊາຊົນຂອງພວກເຮົາ ໃນສະເພາະໜ້າ, ຍາວນານ ແລະ ເປັນໄພອັນຕະລາຍໃຫຍ່ຫຼວງ ຕໍ່ການຄົງຕົວຂອງລະບອບປະຊາທິປະໄຕປະຊາຊົນ ແລະ ຄວາມເຂັ້ມແຂງຂອງພັກທີ່ກຳອຳນາດ. ຈາກນັ້ນ, ກໍຈະເຮັດໃຫ້ປະຊາຊົນບັນດາເຜົ່າ ຂາດຄວາມເຊື່ອໝັ້ນ ຕໍ່ການນຳພາຂອງພັກ, ບໍ່ໃຫ້ຄວາມເຄົາລົບນັບຖືລະບຽບກົດໝາຍຂອງລັດ ແລະ ບັນດາບັນຫາດັ່ງກ່າວ ຖ້າຫາກເກີດຂຶ້ນໃນຂົງເຂດວຽກງານໃດໜຶ່ງ ຫຼື ພະນັກງານ, ສະມາຊິກພັກຄົນໃດໜຶ່ງຂົງເຂດວຽກງານນັ້ນ, ພະນັກງານ, ສະມາຊິກພັກຜູ້ນັ້ນ ກໍຈະກາຍເປັນຜູ້ເສື່ອມຄຸນປ່ຽນທາດ, ສັງຄົມບໍ່ມີຄວາມສະຫງົບ.

## II. ເດັດດ່ຽວແກ້ໄຂປະກົດການຫຍໍ້ທໍ້ ໃນຖັນແຖວພະນັກງານ, ສະມາຊິກພັກ.

### 1. ທັດສະນະຂອງພັກ ແລະ ທິດຊີ້ນຳລວມ ກ່ຽວກັບການແກ້ໄຂປະກົດການຫຍໍ້ທໍ້ ໃນຖັນແຖວພະນັກງານ, ສະມາຊິກພັກ.

**①. ທັດສະນະຂອງພັກ ກ່ຽວກັບການແກ້ໄຂປະກົດການຫຍໍ້ທໍ້ ໃນຖັນແຖວພະນັກງານ, ສະມາຊິກພັກ.**

ພັກເຮົາຖືວ່າ ປະກົດການຫຍໍ້ທໍ້ພາຍໃນພັກ, ໃນຖັນແຖວພະນັກງານ, ສະມາຊິກພັກ ແມ່ນການລະເມີດລະບຽບຂອງພັກ, ກົດໝາຍຂອງລັດ ຊຶ່ງສະແດງອອກ ຄື: ພະນັກງານ, ສະມາຊິກພັກ ຖືຕົນເປັນໃຫຍ່, ອາຍາສິດ, ຫ່າງເຫີນຈາກມະຫາຊົນ, ຜະເດັດການ, ເຈົ້າໂຄດ, ເອກະຊົນເຫັນແກ່ຜົນປະໂຫຍດສ່ວນຕົວ, ຂາດຄວາມຮັບຜິດຊອບ, ເຮັດວຽກບໍ່ເອົາຈິງເອົາຈັງ, ບໍ່ເຂັ້ມງວດ ໃນການປະຕິບັດຄຳສັ່ງ, ອັນໃດມັກ, ອັນໃດມີຜົນປະໂຫຍດແກ່ຕົນເອງຈຶ່ງເຮັດ, ບໍ່ຈິງໃຈ, ບໍ່ກ້າຮັບຜິດຊອບຂໍ້ບົກຜ່ອງ, ກົງກັນຂ້າມ ຊໍ້າພັດຢາກໄດ້ແຕ່ຄວາມດີ, ຄວາມຊອບ, ປະຈົບປະແຈງຂັ້ນເທິງ ເພື່ອໃຫ້ຕົນເອງໄດ້ດີ.

ສະນັ້ນ, ພັກເຮົາໄດ້ຖືວ່າ ການແກ້ໄຂປະກົດການຫຍໍ້ທໍ້ໃນຖັນແຖວພະນັກງານ, ສະມາຊິກພັກ ໂດຍສະເພາະ ແມ່ນການສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ ແມ່ນຄວາມຈຳເປັນພາວະວິໄສ, ເປັນໜ້າທີ່ ແລະ ຄວາມຮັບຜິດຊອບໂດຍກົງຂອງພັກ-ລັດ. ຄະນະພັກ, ພະນັກງານການນຳທຸກຂັ້ນ ແລະ ທຸກພາກສ່ວນຕ້ອງຈັດຕັ້ງນຳພາແກ້ໄຂຢ່າງຕັ້ງໜ້າ ແລະ ເປັນເຈົ້າການສູງ. ມະຕິກອງປະຊຸມໃຫຍ່ ຄັ້ງທີ X ຂອງພັກໄດ້ກຳນົດໄວ້ວ່າ: **"ຖືສຳຄັນ ແລະ ບຸລິມະສິດຕໍ່ການສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ ໃນກົງຈັກການຈັດຕັ້ງ ແລະ ໃນຖັນແຖວພະນັກງານ, ສະມາຊິກພັກ; ເອົາໃຈໃສ່ແກ້ໄຂປະກົດການຫຍໍ້ທໍ້, ການສໍ້ລາດບັງຫຼວງທີ່ເກີດຂຶ້ນໃນກົງຈັກການຈັດຕັ້ງ ຖືເອົາການສະກັດກັ້ນ ແລະ ແກ້ໄຂການສໍ້ລາດບັງຫຼວງ ເປັນຄວາມຮັບຜິດຊອບຂອງພັກ, ຂອງທຸກການຈັດຕັ້ງ".** ເພື່ອຈັດຕັ້ງປະຕິບັດເນື້ອໃນຈິດໃຈດັ່ງກ່າວ ໃຫ້ເປັນຈິງ, ກ່ອນອື່ນໝົດ ຄະນະພັກ, ພະນັກງານການນຳທຸກຂັ້ນ, ທຸກຂະແໜງການຕ້ອງເປັນແບບຢ່າງ ໃນການແກ້ໄຂປະກົດການຫຍໍ້ທໍ້ ໂດຍສະເພາະ ແມ່ນການສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ, ມີແບບແຜນດຳລົງຊີວິດທີ່

ຖືກຕ້ອງ, ບໍ່ສວຍໃຊ້ໜ້າທີ່ຕໍາແໜ່ງ; ເປັນແບບຢ່າງໃນການປະຕິບັດກົດລະບຽບຂອງພັກ, ກົດໝາຍ ແລະ ລະບຽບການຕ່າງໆຂອງລັດ; ຕ້ອງຖືເອົາການຕິດຕາມ, ກວດກາປົກກະຕິ; ກວດກາເລີ່ມແຕ່ຫົວທີ ເປັນວິທີການຕົ້ນຕໍ; ເອົາການກວດກາຕາມຄໍາສັ່ງ, ຕາມຄໍາຮ້ອງ, ຄໍາສະເໜີ ແລະ ຕາມຜົນການກວດສອບເປັນອັນຈໍາເປັນ, ການສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ ຕ້ອງຖືເອົາການສຶກສາອົບຮົມ ເພື່ອສະກັດກັ້ນເປັນມາດຕະການຕົ້ນຕໍ ແລະ ຖືເອົາການແກ້ໄຂດ້ວຍລະບຽບກົດໝາຍ ເປັນມາດຕະການທີ່ຈໍາເປັນຕ້ອງປະຕິບັດ.

**໒. ທິດຊີ້ນໍາລວມ ກ່ຽວກັບການແກ້ໄຂປະກົດການຫຍໍ້ທໍ້ ໃນຖັນແຖວພະນັກງານ, ສະມາຊິກພັກ.**

ທິດຊີ້ນໍາລວມ ກ່ຽວກັບການແກ້ໄຂປະກົດການຫຍໍ້ທໍ້ ໃນຖັນແຖວພະນັກງານ, ສະມາຊິກພັກຄວນເອົາໃຈໃສ່ ດັ່ງນີ້:

**ໜຶ່ງ:** ຄະນະພັກທຸກຂັ້ນ, ພະນັກງານ, ສະມາຊິກພັກທຸກສະຫາຍ ຕ້ອງເຊີດຊູນໍ້າໃຈຮັກຊາດ, ຮັກລະບອບປະຊາທິປະໄຕປະຊາຊົນ ດ້ວຍການຕັ້ງໜ້າຝຶກຝົນຫຼໍ່ຫຼອມ ຄຸນທາດການເມືອງ, ຄຸນສົມບັດສິນທໍາປະຕິວັດ ໃຫ້ມີຄວາມໜັກແໜ້ນ; ເຮັດໃຫ້ພະນັກງານ, ສະມາຊິກພັກ ມີຄວາມຈົງຮັກພັກດີຕໍ່ພັກ, ຕໍ່ປະເທດຊາດ ແລະ ຕໍ່ປະຊາຊົນ ເດັດດ່ຽວຕອບຕ້ານທຸກກົນອຸບາຍທໍາລາຍມ້າງເພ ຂອງອິທິກໍາລັງປໍລະປັກ ແລະ ພວກຄົນບໍ່ດີ; ສະກັດກັ້ນ ແລະ ແກ້ໄຂປະກົດການຫຍໍ້ທໍ້ຕ່າງໆ ທີ່ເກີດຂຶ້ນພາຍໃນພັກ ຢ່າງເດັດຂາດ, ທັນການ ເພື່ອບໍ່ໃຫ້ພະນັກງານ, ສະມາຊິກພັກ ເສື່ອມຄຸນປ່ຽນທາດ.

**ສອງ:** ຄະນະພັກທຸກຂັ້ນ, ສະມາຊິກພັກທຸກສະຫາຍ ຕ້ອງເປັນແບບຢ່າງນໍາໜ້າ ໃນການສະກັດກັ້ນ ແລະ ແກ້ໄຂປະກົດການຫຍໍ້ທໍ້ຕ່າງໆ ພາຍໃນພັກ ໂດຍເລີ່ມຈາກການສໍາຫຼວດກວດກາຕົນເອງ, ຕໍານິກໍ່ສ້າງຊ່ວຍເຫຼືອ ຊຶ່ງກັນ ແລະ ກັນ ດ້ວຍຄວາມຈິງໃຈ; ຫາກມີສິ່ງຫຍໍ້ທໍ້ເກີດຂຶ້ນ ຕ້ອງມີຄວາມຕື່ນຕົວເປັນເຈົ້າການແກ້ໄຂຢ່າງເດັດຂາດ; ເອົາໃຈໃສ່ຕິດຕາມ, ກວດກາຂົງເຂດຄວາມຮັບຜິດຊອບຂອງຕົນຢ່າງເປັນປະຈໍາ; ຫາກເຫັນສິ່ງຫຍໍ້ທໍ້ເກີດຂຶ້ນ ຕ້ອງມີຄວາມເດັດຂາດ, ເຂັ້ມງວດ ໃນການແກ້ໄຂບັນຫາຕາມທິດນໍາ **"ບັນຫາຫຍໍ້ທໍ້ເກີດຂຶ້ນຢູ່ບ່ອນໃດ ຄະນະພັກບ່ອນນັ້ນ ເປັນເຈົ້າການແກ້ໄຂ, ຫຼີກເວັ້ນການປົກປ້ອງ ຫຼື ປົກປິດສິ່ງຫຍໍ້ທໍ້ ດັ່ງກ່າວ".**

**ສາມ:** ຕ້ອງນໍາໃຊ້ຫຼາຍມາດຕະການ ເພື່ອສະກັດກັ້ນ ແລະ ແກ້ໄຂປະກົດການອາຍາສິດ ແລະ ສໍ້ລາດບັງຫຼວງຢ່າງຕັ້ງໜ້າ ເປັນຕົ້ນແມ່ນ ມາດຕະການສຶກສາອົບຮົມ, ມາດຕະການທາງດ້ານບໍລິຫານ, ມາດຕະການທາງດ້ານກົດໝາຍ ແລະ ອື່ນໆ; ບັນຫາເກີດຂຶ້ນຢູ່ບ່ອນໃດ ບ່ອນນັ້ນ ຕ້ອງເປັນເຈົ້າແກ້ໄຂ ແລະ ແກ້ໄຂຢ່າງເດັດຂາດ, ທັນການ. ໃນນີ້, ຖືເອົາການສະກັດກັ້ນແຕ່ຫົວທີ ເປັນຕົ້ນຕໍ ແລະ ເປັນບັນຫາພື້ນຖານຍາວນານ, ເອົາການຕ້ານ, ການແກ້ໄຂເປັນບັນຫາຈໍາເປັນທີ່ຕ້ອງໄດ້ປະຕິບັດຢ່າງເຂັ້ມງວດ; ການສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ ຕ້ອງຕິດພັນກັບນະໂຍບາຍປະຢັດ ແລະ ຕ້ານການຟູມເຟືອຍ.

**ສີ່:** ຕ້ອງເຮັດໃຫ້ການຕ້ານ ແລະ ແກ້ໄຂພະຍາດອາຍາສິດ, ການສໍ້ລາດບັງຫຼວງ ກາຍເປັນໜ້າທີ່ ແລະ ຄວາມຮັບຜິດຊອບຂອງພະນັກງານທຸກປະເພດ, ສະມາຊິກພັກທຸກສະຫາຍ, ທຸກການຈັດຕັ້ງ ແລະ ທົ່ວສັງຄົມ; ການຕ້ານພະຍາດອາຍາສິດ ແລະ ການສໍ້ລາດບັງຫຼວງ ຕ້ອງເລີ່ມຈາກຄວາມເປັນແບບຢ່າງ ຂອງແຕ່ລະສະຫາຍ ເປັນຕົ້ນ ພະນັກງານນໍາພາ-ຄຸ້ມຄອງ ແຕ່ລະຂັ້ນ.

**ຫ້າ:** ຕ້ອງຕັ້ງໜ້າ ແລະ ມີຄວາມພະຍາຍາມສູງ ໃນການຈຳກັດ ແລະ ອັດຊ່ອງວ່າງ ບໍ່ໃຫ້ເກີດມີປະກົດການອາຍາສິດ ແລະ ການສໍ້ລາດບັງຫຼວງ, ເຮັດໃຫ້ສະພາບການດັ່ງກ່າວ ທີ່ມີຢູ່ໃນປັດຈຸບັນຫຼຸດໜ້ອຍຖອຍລົງ ແລະ ໄດ້ຮັບການແກ້ໄຂຢ່າງຕັ້ງໜ້າ, ຕໍ່ເນື່ອງ ແລະ ບໍ່ຫຼົດລະ.

**ຫົກ:** ການແກ້ໄຂພະຍາດອາຍາສິດ, ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ ເປັນວຽກໜຶ່ງທີ່ການຈັດຕັ້ງທຸກຂັ້ນ, ທຸກພາກສ່ວນ ຕ້ອງໄດ້ເອົາໃຈໃສ່ເຮັດເປັນປະຈຳ, ເຮັດຢ່າງມີຈຸດສຸມ, ມີແຜນການລະອຽດຂອງຕົນ ໃນແຕ່ລະໄລຍະ ເພື່ອຕິດຕາມ, ກວດກາເປັນປົກກະຕິ ຖ້າມີຫົ່ນແໜງຂອງປະກົດການອາຍາສິດ ແລະ ການສໍ້ລາດບັງຫຼວງ ເກີດຂຶ້ນຢູ່ບ່ອນໃດ ຕ້ອງເປັນເຈົ້າການແກ້ໄຂ, ກຳຈັດປັດເປົ່າແຕ່ຫົວທີ ຢ່າງທັນການ, ເຂັ້ມງວດ ແລະ ເດັດຂາດ.

**③. ພະນັກງານ, ສະມາຊິກພັກ ຕ້ອງຝຶກຝົນຕົນເອງ ເພື່ອຕ້ານກັບປະກົດການຫຍໍ້ທໍ້ທີ່ເກີດຂຶ້ນ.**

ເພື່ອຕ້ານປະກົດການຫຍໍ້ທໍ້ທີ່ເກີດຂຶ້ນ ພະນັກງານ, ສະມາຊິກພັກ ຕ້ອງເອົາໃຈໃສ່ປະຕິບັດບາງບັນຫາ ດັ່ງນີ້:

**ໜຶ່ງ:** ພະນັກງານ, ສະມາຊິກພັກ ກ່ອນອື່ນໝົດ ແມ່ນພະນັກງານການນຳແຕ່ລະຂັ້ນ ຕ້ອງຕັ້ງໜ້າ ແລະ ເປັນແບບຢ່າງຝຶກຝົນຫຼໍ່ຫຼອມ ຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດ ແລະ ແບບແຜນດຳລົງຊີວິດທີ່ປອດໃສ ຂາວສະອາດ ໃຫ້ແກ່ຕົນເອງຢູ່ສະເໝີ ເພາະວ່າ ຄຸນສົມບັດ ແມ່ນຄຸນນະພາບຂອງພະນັກງານ, ສະມາຊິກພັກ.

**ສອງ:** ພະນັກງານ, ສະມາຊິກພັກ ຕ້ອງຍົກສູງນໍ້າໃຈຄວາມຮັບຜິດຊອບຕໍ່ປະເທດຊາດ, ຕໍ່ພັກ ແລະ ຕໍ່ປະຊາຊົນ; ຮັບໃຊ້ຊາດ ແລະ ຮັບໃຊ້ປະຊາຊົນ ຢ່າງສຸດໃຈ; ຄະນະພັກ, ການຈັດຕັ້ງພັກແຕ່ລະຂັ້ນ ຕ້ອງສ້າງເງື່ອນໄຂໃຫ້ສະມາຊິກພັກ ປະຕິບັດໜ້າທີ່ໃຫ້ມີຜົນສຳເລັດ.

**ສາມ:** ເພີ່ມທະວີການຕິຊົມຕົນເອງ ແລະ ຕິຊົມກັນຢ່າງຕັ້ງໜ້າ, ແກ້ໄຂບັນຫາພະນັກງານ, ສະມາຊິກພັກ ທີ່ຂາດຄວາມຮັບຜິດຊອບ, ບຸກຄົນເສື່ອມຄຸນທາດການເມືອງ ແລະ ຄຸນສົມບັດສິນທຳປະຕິວັດຢ່າງເຄັ່ງຄັດ; ຄົ້ນຄວ້າອອກຂໍ້ກຳນົດ ໃນແຕ່ລະໄລຍະໃຫ້ພະນັກງານ, ສະມາຊິກພັກ ໄດ້ມີເວລາຮ່ຳຮຽນຍົກລະດັບ ເພື່ອປັບປຸງຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດ.

**ສີ່:** ເດັດດ່ຽວຕໍ່ສູ້ຕ້ານກົນອຸບາຍ ແລະ ການເຄື່ອນໄຫວຫັນປ່ຽນໂດຍສັນຕິຂອງພວກຄົນບໍ່ດີ ໃຫ້ປະລະໄຊລົງ; ເປັນເຈົ້າການສະກັດກັ້ນ ການຫັນປ່ຽນດ້ວຍຕົນເອງຢູ່ພາຍໃນພວກເຮົາ, ຈຳກັດການເສື່ອມຖອຍດ້ານແນວຄິດ-ການເມືອງ, ຄຸນສົມບັດສິນທຳປະຕິວັດ, ແບບແຜນດຳລົງຊີວິດຂອງພະນັກງານ, ສະມາຊິກພັກ, ຮັກສາຄວາມສາມັກຄີ ເປັນເອກະພາບພາຍໃນພັກ ແລະ ພາຍໃນສັງຄົມ ໃຫ້ແໜ້ນແຟ້ນ.

**ຫ້າ:** ພະນັກງານ, ສະມາຊິກພັກ ຈະມີຄວາມກ້າວໜ້າ ໃນໜ້າທີ່ການງານ ຫຼື ໄດ້ຮັບການສົ່ງເສີມໃຫ້ຮັບຜິດຊອບໜ້າທີ່ ທີ່ສຳຄັນກໍຕໍ່ເມື່ອ ມີການຝຶກຝົນຕົນເອງ ແລະ ເສີມຂະຫຍາຍຄຸນສົມບັດສິນທຳປະຕິວັດຢູ່ສະເໝີ. ໃນເງື່ອນໄຂແຫ່ງການປ່ຽນແປງໃໝ່ ແລະ ນຳໃຊ້ເສດຖະກິດຕະຫຼາດ, ເປີດກວ້າງການພົວພັນຮ່ວມມືກັບຕ່າງປະເທດ, ພະນັກງານ, ສະມາຊິກພັກ ຍິ່ງຈຳເປັນຕ້ອງຝຶກຝົນ ແລະ ເສີມຂະຫຍາຍຄຸນທາດປະຕິວັດ, ເພີ່ມຄວາມຮູ້, ຄວາມສາມາດໃຫ້ສູງຂຶ້ນເລື້ອຍໆ ເປັນຕົ້ນແມ່ນ ຍຶດໝັ້ນໃນລັກສະນະທາດແທ້ຊົນ

ຊັ້ນກຳມະກອນ, ໃນເສັ້ນທາງ ແລະ ຈຸດໝາຍສັງຄົມນິຍົມຢ່າງໜັກແໜ້ນ; ຝຶກຝົນຄຸນສົມບັດສິນທຳປະຕິວັດ, ຍົກລະດັບຄວາມຮູ້, ຄວາມສາມາດຂຶ້ນຢ່າງບໍ່ຢຸດຢັ້ງເທົ່ານັ້ນ ພັກເຮົາຈຶ່ງສາມາດນຳພາປະຊາຊົນ ສ້າງສາພັດທະນາປະເທດຊາດ ໃຫ້ຈະເລີນກ້າວໜ້າ, ລະບອບໃໝ່ຂອງພວກເຮົາ ຈຶ່ງໝັ້ນຄົງ.

**2. ເດັດດ່ຽວແກ້ໄຂປະກົດການຫຍໍ້ທໍ້ ໃນຖັນແຖວພະນັກງານ, ສະມາຊິກພັກຢ່າງທັນການ, ເຂັ້ມງວດ ແລະ ເດັດຂາດ.**

ເດັດດ່ຽວແກ້ໄຂບັນຫາປະກົດການຫຍໍ້ທໍ້ ໃນຖັນແຖວພະນັກງານ, ສະມາຊິກພັກຢ່າງຈິງຈັງ, ເດັດຂາດ; ເຮັດໃຫ້ພະນັກງານ, ສະມາຊິກພັກ ມີຄວາມປອດໃສ, ເຂັ້ມແຂງ ແລະ ໜັກແໜ້ນ ຕ້ອງສຸມໃສ່ແກ້ໄຂໃນບາງດ້ານ ດັ່ງນີ້:

**①. ສ້າງຄວາມເຂັ້ມແຂງຂອງການຈັດຕັ້ງພັກ ແຕ່ລະຂັ້ນ ແລະ ຍົກສູງຄຸນນະພາບ ຂອງສະມາຊິກພັກ.**

**ໜຶ່ງ:** ປັບປຸງເນື້ອໃນນຳພາ ແລະ ຄຸນນະພາບການດຳເນີນຊີວິດຂອງໜ່ວຍພັກ ແລະ ຄະນະພັກແຕ່ລະຂັ້ນ ໂດຍສຸມໃສ່ກວດກາ, ປະເມີນຄວາມຄືບໜ້າ ໃນການປະຕິບັດໜ້າທີ່ການເມືອງ, ລົງເລິກວິເຄາະ, ໄຈ້ແຍກ ຈຸດທີ່ຍັງບໍ່ທັນປະຕິບັດໄດ້, ພິຈາລະນາຕໍ່ຄວາມຮັບຜິດຊອບຂອງແຕ່ລະບຸກຄົນສະມາຊິກພັກ ຕິດພັນກັບການຕິຊົມຕົນເອງ ແລະ ຕິຊົມກັນ ຢ່າງແຂງແຮງ ແລະ ແບບສ້າງສັນ, ທັງເຊີດຊູສະຕິຄວາມຮັບຜິດຊອບ ແລະ ຮ່ວມມືກັນປຶກສາຫາລືກັນຢ່າງຈິງຈັງ ເພື່ອໃຫ້ມີຄວາມເປັນເອກະພາບ ແລະ ສາມາດກຳນົດແຜນເຄື່ອນໄຫວ ແກ້ໄຂບັນຫາເກົ່າທີ່ຍັງຄົງຄ້າງ ແລະ ຮັບມືກັບບັນຫາທີ່ເກີດຂຶ້ນໃໝ່ ຢ່າງເປັນເຈົ້າການ; ພ້ອມກັນນັ້ນ ຖືໂອກາດການດຳເນີນຊີວິດອັນເປັນປົກກະຕິ ແລະ ການປັບປຸງເນື້ອໃນເຄື່ອນໄຫວໃຫ້ມີຈຸດສຸມນັ້ນ ເປັນການກຳນົດຂອບປະຕິບັດ ແລະ ດຳເນີນການປະເມີນຜົນ ຕໍ່ການເສີມຂະຫຍາຍປະຊາທິປະໄຕ ຢູ່ພາຍໃນ ແລະ ການເຄື່ອນໄຫວນຳພາ ຕໍ່ສູ້ສະກັດກັ້ນ ແລະ ຕີຖອຍປະກົດການຫຍໍ້ທໍ້ ຢູ່ພາຍໃນການຈັດຕັ້ງ ເພື່ອສ້າງບາດກ້າວຫັນປ່ຽນຕົວຈິງໃຫ້ຈະແຈ້ງ ແລະ ເປັນຮູບປະທຳຢ່າງຕໍ່ເນື່ອງ ໃນການປັບປຸງຄວາມເຂັ້ມແຂງຂອງການຈັດຕັ້ງພັກ ແຕ່ລະຂັ້ນ, ແຕ່ລະບ່ອນ.

**ສອງ:** ເອົາໃຈໃສ່ຍົກສູງຄຸນນະພາບຂອງສະມາຊິກພັກ ຕິດພັນກັບເພີ່ມທະວີການຄຸ້ມຄອງ ດ້ານລະບຽບວິໄນ, ຊຸກຍູ້ສິ່ງເສີມຂະບວນການຝຶກຝົນຫຼໍ່ຫຼອມ ດ້ານຄຸນທາດການເມືອງ ແລະ ຄຸນສົມບັດສິນທຳປະຕິວັດ ຕິດພັນກັບການສຶກສາອົບຮົມແນວຄິດ ແລະ ຄຸນສົມບັດສິນທຳປະຕິວັດຂອງປະທານ ໄກສອນ ພົມວິຫານ, ພັດທະນາດ້ານຄວາມຮູ້ ແລະ ປະສົບການ ໃນການເຄື່ອນໄຫວນຳພາການເມືອງ ແລະ ວິຊາສະເພາະ ໃຫ້ສະມາຊິກພັກສູງຂຶ້ນເລື້ອຍໆ.

**ສາມ:** ການຂະຫຍາຍສະມາຊິກພັກໃໝ່ ຕ້ອງຖືຄຸນນະພາບເປັນຫຼັກ, ເດັດດ່ຽວແກ້ໄຂສະມາຊິກພັກທີ່ເສຍທາດຂາດຄຸນ, ຂາດສະຕິຄວາມຮັບຜິດຊອບຕໍ່ໜ້າທີ່ ແລະ ຂາດຄວາມເປັນແບບຢ່າງ ໃນການດຳລົງຊີວິດ ຫຼື ມີການລະເມີດວິໄນຂອງພັກ ແລະ ກົດໝາຍຂອງລັດ ອອກຈາກການຈັດຕັ້ງດ້ວຍວິທີການ ແລະ ມາດຕະການຕົວຈິງ ຢ່າງເດັດຂາດ, ເໝາະສົມ ແລະ ທັນການ.

**②. ເພີ່ມປະສິດທິພາບ ແລະ ຄວາມສັກສິດຂອງວຽກງານກວດກາ ໃນການແກ້ໄຂປະກົດການຫຍໍ້ທໍ້ ຢູ່ໃນຖັນແຖວພະນັກງານ, ສະມາຊິກພັກ.**

ພັກເຮົາຍາມໃດກໍຢືນຢັນວ່າ: ວຽກງານກວດກາແມ່ນໜຶ່ງໃນພາລະບົດບາດ ແລະ ແບບແຜນການນຳພາທີ່ສຳຄັນຂອງພັກ, ບໍ່ມີການຕິດຕາມ ກວດກາ ກໍໝາຍຄວາມວ່າ ບໍ່ມີການນຳພາ. ໃນເງື່ອນໄຂເສດຖະ

ກົດຕະຫຼາດ ແລະ ການເປີດກວ້າງ ການພົວພັນຮ່ວມມື-ເຊື່ອມໂຍງກັບສາກົນໃນປັດຈຸບັນ, ບັນຫາທີ່ຕ້ອງເອົາໃຈໃສ່ ແມ່ນ:

**ໜຶ່ງ:** ຄະນະພັກ ຕ້ອງເພີ່ມທະວີການນໍາພາ, ຊີ້ນໍາ ແລະ ຈັດຕັ້ງປະຕິບັດວຽກງານຕິດຕາມ ກວດກາ ການເຄື່ອນໄຫວຂອງທຸກການຈັດຕັ້ງພັກ, ກວດກາ ການປະຕິບັດກົດລະບຽບຂອງພັກ, ການປະຕິບັດແນວທາງແຜນນະໂຍບາຍ, ມະຕິ, ຄໍາສັ່ງ ແລະ ຂໍ້ກໍານົດຕ່າງໆ ຂອງພັກ.

**ສອງ:** ຖືສໍາຄັນ ແລະ ບູລິມະສິດ ຕໍ່ການສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ ໃນກົງຈັກການຈັດຕັ້ງ ແລະ ໃນຖັນແຖວພະນັກງານ, ສະມາຊິກພັກ; ເອົາໃຈໃສ່ແກ້ໄຂປະກົດການຫຍໍ້ທໍ້, ການສໍ້ລາດບັງຫຼວງທີ່ເກີດໃນກົງຈັກການຈັດຕັ້ງ, ຖືເອົາການສະກັດກັ້ນ ແລະ ແກ້ໄຂສໍ້ລາດບັງຫຼວງ ເປັນຄວາມຮັບຜິດຊອບຂອງພັກ, ຂອງທຸກອົງການຈັດຕັ້ງ. ຄະນະພັກ, ພະນັກງານການນໍາຢູ່ແຕ່ລະຂັ້ນ ຕ້ອງເປັນແບບຢ່າງ ໃນການສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ, ມີແບບແຜນການດໍາລົງຊີວິດທີ່ຖືກຕ້ອງ, ບໍ່ສວຍໃຊ້ໜ້າທີ່ຕໍາແໜ່ງ; ເປັນແບບຢ່າງ ໃນການປະຕິບັດກົດລະບຽບຂອງພັກ, ກົດໝາຍ ແລະ ລະບຽບການຕ່າງໆ ຂອງລັດ; ຕ້ອງຖືເອົາການຕິດຕາມ, ກວດກາປົກກະຕິ, ກວດກາແຕ່ຫົວທີ ເປັນວິທີການຕົ້ນຕໍ, ເອົາກວດກາຕາມຄໍາສັ່ງ, ຕາມຄໍາຮ້ອງ, ຄໍາສະເໜີ ແລະ ຕາມຜົນການກວດສອບເປັນອັນຈໍາເປັນ. ກ່ຽວກັບບັນຫາການສໍ້ລາດບັງຫຼວງນັ້ນ ຕ້ອງຖືເອົາການສຶກສາອົບຮົມ ເພື່ອສະກັດກັ້ນເປັນຕົ້ນຕໍ, ເອົາການກວດກາ, ແກ້ໄຂເປັນມາດຕະການທີ່ຈໍາເປັນຕ້ອງປະຕິບັດ.

**ສາມ:** ຄົ້ນຄວ້າວາງລະບອບ, ລະບຽບ, ກົນໄກການຕິດຕາມ, ກວດກາໃຫ້ຄົບຖ້ວນ ແລະ ຮັດກຸມ, ໃນນີ້ລວມມີທັງກົນໄກໃຫ້ຂັ້ນລຸ່ມ, ແນວລາວສ້າງຊາດ ແລະ ບັນດາອົງການຈັດຕັ້ງມະຫາຊົນໄດ້ຕິດຕາມ ແລະມີຄວາມຄິດຄວາມເຫັນຕໍ່ການນໍາພາຂອງຂັ້ນເທິງ, ຕິດຕາມ, ກວດກາບັນດາອົງການອໍານາດລັດ ໃນການປະຕິບັດກົດໝາຍ, ລະບຽບການຕ່າງໆ; ສ້າງເງື່ອນໄຂໃຫ້ສື່ມວນຊົນ ແລະ ປະຊາຊົນ ໄດ້ເຂົ້າຮ່ວມວຽກງານຕິດຕາມ, ກວດກາ ການເຄື່ອນໄຫວປະຕິບັດໜ້າທີ່ ແລະ ການດໍາລົງຊີວິດ ຂອງພະນັກງານ, ສະມາຊິກພັກ.

**ສີ່:** ເພີ່ມທະວີຄວາມຮັບຜິດຊອບຂອງຄະນະພັກ ແລະ ການນໍາທຸກຂັ້ນ ຕໍ່ການແກ້ໄຂຜົນຂອງການກວດກາ ໃຫ້ທັນການ, ເຂັ້ມງວດ, ສັກສິດ, ຕາມກົດລະບຽບຂອງພັກ, ຕາມກົດໝາຍ ແລະ ລະບຽບການຕ່າງໆຂອງລັດ. ດັ່ງນັ້ນ, ໃນການກວດກາແຕ່ລະເປົ້າໝາຍ ຕ້ອງຮອບຄອບ, ພາວະວິໄສ, ເລິກເຊິ່ງ, ເຖິງກົກເຖິງຮາກ, ຮັບປະກັນຄວາມຖືກຕ້ອງຕາມກົດໝາຍ, ຖືກຕາມຄວາມເປັນຈິງ, ຊັດເຈນ, ເປັນທໍາ. ສະພາບຫຍໍ້ທໍ້ເກີດຂຶ້ນຢູ່ບ່ອນໃດ ແມ່ນຄະນະພັກ, ຫົວໜ້າ ແລະ ການນໍາຢູ່ບ່ອນນັ້ນ ຕ້ອງມີຄວາມຮັບຜິດຊອບ ແລະ ເປັນເຈົ້າການແກ້ໄຂ ໂດຍເອົາການສຶກສາອົບຮົມເປັນພື້ນຖານ, ເອົາການແກ້ໄຂຕາມກົດໝາຍເປັນສິ່ງຈໍາເປັນ; ອັນໃດເກີນຂອບເຂດສິດຕັດສິນຂອງຕົນ ຕ້ອງນໍາສະເໜີຂັ້ນເທິງໂດຍໄວ ແລະ ທັນກັບເຫດການ.

**ຫ້າ:** ເພີ່ມຄວາມເອົາໃຈໃສ່ຕື່ມ ຕໍ່ການປັບປຸງກົງຈັກການຈັດຕັ້ງຄະນະກວດກາແຕ່ລະຂັ້ນ, ແຕ່ລະຂະແໜງການ, ກໍ່ສ້າງ ແລະ ບໍາລຸງຍົກລະດັບຂອງພະນັກງານກວດກາ ພ້ອມທັງສ້າງເງື່ອນໄຂໃຫ້ຄະນະກວດກາແຕ່ລະຂັ້ນ ປະຕິບັດພາລະບົດບາດຂອງຕົນ ໃຫ້ມີປະສິດທິພາບສູງຂຶ້ນ.

**③. ເພີ່ມຄວາມສາມາດຕໍ່ສູ້ຕ້ານ, ກໍາຈັດປັດເປົ່າປະກົດການຫຍໍ້ທໍ້ ແລະ ວາງມາດຕະການທາງວິໄນຂອງພັກຕໍ່ພະນັກງານ, ສະມາຊິກພັກ ຢ່າງທັນການ ແລະ ມີຜົນສັກສິດ.**

ພັກເຮົາຢືນຢັນມາຕະຫຼອດວ່າ ພະນັກງານ, ສະມາຊິກພັກ ມີບົດບາດຕໍ່ຜົນໄດ້-ຜົນເສຍ ຂອງການຈັດຕັ້ງປະຕິບັດແນວທາງ, ແຜນນະໂຍບາຍຂອງພັກ; ແນວທາງແຜນນະໂຍບາຍຂອງພັກ ເຖິງຈະຖືກຕ້ອງປານໃດກໍຕາມ, ຖ້າຫາກພະນັກງານ, ສະມາຊິກພັກຂາດຄວາມຮູ້, ຄວາມສາມາດ ແລະ ຄວາມເປັນແບບຢ່າງນໍາພາແລ້ວ ແນວທາງ, ນະໂຍບາຍດັ່ງກ່າວ ກໍຈະດີພຽງແຕ່ຢູ່ໃນໜ້າເຈ້ຍເທົ່ານັ້ນ. ສະນັ້ນ, ຕ້ອງສະກັດກັ້ນ ແລະ ຕ້ານທຸກປະກົດການຫຍໍ້ທໍ້ຕ່າງໆ ທີ່ເກີດຂຶ້ນພາຍໃນພັກ ກໍຄື ໃນຖັນແຖວພະນັກງານ, ສະມາຊິກພັກ ຢ່າງທັນການ ແລະ ມີຜົນສັກສິດ ຢ່າງແທ້ຈິງ.

**ໜຶ່ງ:** ເພີ່ມທະວີຄວາມເປັນແບບຢ່າງທີ່ດີ ຂອງຜູ້ເປັນຫົວໜ້າ ໃນການນໍາພາປະຕິບັດໜ້າທີ່ການເມືອງ ທີ່ໄດ້ຮັບມອບໝາຍ ແລະ ມີຄວາມຮັບຜິດຊອບໂດຍກົງ ຕໍ່ສະພາບການຫຍໍ້ທໍ້ຕ່າງໆ ທີ່ເກີດຂຶ້ນໃນຖັນແຖວພະນັກງານ, ສະມາຊິກພັກ ທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນ ເຊັ່ນ: ປະກົດການອາຍາສິດ, ການສໍ້ລາດບັງຫຼວງ, ຄວາມເສຍຫາຍທາງດ້ານຊັບສິນ, ການລະເມີດລະບຽບວິໄນ ແລະ ມະຕິ, ຄໍາສັ່ງຂອງພັກ, ກົດໝາຍ ແລະ ລະບຽບການຕ່າງໆຂອງລັດ.

**ສອງ:** ຕ້ອງຮັບປະກັນໃຫ້ທຸກຄໍາເຫັນ ຫຼື ການຕໍານິສິ່ງຂ່າວ ກ່ຽວຂ້ອງພຶດຕິກໍາທີ່ບໍ່ເໝາະສົມຂອງພະນັກງານ, ສະມາຊິກພັກ ຕ້ອງໄດ້ຮັບການພິຈາລະນາ ແລະ ແກ້ໄຂຢ່າງຖືກຕ້ອງຈາກຄະນະພັກທີ່ກ່ຽວຂ້ອງ.

**ສາມ:** ການແກ້ໄຂປະກົດການຫຍໍ້ທໍ້ ຂອງພະນັກງານ, ສະມາຊິກພັກ ຕ້ອງຢູ່ໃນຄວາມຮັບຜິດຊອບໂດຍກົງ ແລະ ເດັດຂາດ ຂອງຄະນະພັກ-ຄະນະນໍາ ແຕ່ລະຂັ້ນ; ຖືສໍາຄັນ ແລະ ເອົາໃຈໃສ່ເປັນພິເສດການຕິດຕາມ, ກວດກາ ຕໍ່ຂົງເຂດທີ່ມີຄວາມສ່ຽງທີ່ຈະກໍ່ໃຫ້ເກີດປະກົດການຫຍໍ້ທໍ້ ກໍຄື ການສໍ້ລາດບັງຫຼວງ.

**ສີ່:** ພະນັກງານ, ສະມາຊິກພັກ ທີ່ເສຍທາດຂາດຄຸນ ແລະ ລະເມີດລະບຽບວິໄນຂອງພັກ, ກົດໝາຍຂອງລັດ ຫຼື ກ່ຽວຂ້ອງກັບປະກົດການຫຍໍ້ທໍ້ຕ່າງໆ ຕ້ອງດໍາເນີນມາດຕະການທາງວິໄນ ຫຼື ມາດຕະການທາງກົດໝາຍ ຢ່າງເຂັ້ມງວດ.

**ຫ້າ:** ການແກ້ໄຂຜູ້ທີ່ມີພຶດຕິກໍາອາຍາສິດ, ເອກະຊົນ ແລະ ສໍ້ລາດບັງຫຼວງ, ເມື່ອກວດພົບເຫັນພະນັກງານ, ສະມາຊິກພັກ ຈະແມ່ນຢູ່ໃນຖານະຕໍາແໜ່ງໃດກໍຕາມ ຕ້ອງໄດ້ຮັບການແກ້ໄຂຢ່າງເຂັ້ມງວດ, ເດັດຂາດ, ທັນການ ແລະ ສັກສິດ ຕາມລະບຽບຂອງພັກ, ກົດໝາຍຂອງລັດ ໂດຍນໍາໃຊ້ມາດຕະການຕ່າງໆ ຕາມຄວາມເໝາະສົມ.

## III. ວິທີການຈັດຕັ້ງປະຕິບັດ ຕໍ່ກັບການແກ້ໄຂປະກົດການຫຍໍ້ທໍ້ ສໍາລັບພະນັກງານ, ສະມາຊິກພັກ.

1. ຄະນະພັກ, ສະມາຊິກພັກ, ພະນັກງານ ຕ້ອງເປັນເຈົ້າການຍົກສູງສະຕິປະຕິບັດກົດລະບຽບຂອງພັກ, ກົດໝາຍຂອງລັດ ແລະ ລະບຽບການທີ່ກ່ຽວຂ້ອງ ຢ່າງເຂັ້ມງວດ, ແນໃສ່ສະກັດກັ້ນປະກົດການຫຍໍ້ທໍ້ໃນຖັນແຖວພະນັກງານ, ລັດຖະກອນ, ທະຫານ, ຕໍາຫຼວດ; ຄະນະພັກທຸກຂັ້ນ; ສະມາຊິກພັກທຸກສະຫາຍຕ້ອງເປັນແບບຢ່າງນໍາໜ້າ ໃນການສະກັດກັ້ນ ແລະ ແກ້ໄຂປະກົດການຫຍໍ້ທໍ້ຕ່າງໆ ພາຍໃນພັກ ໂດຍເລີ່ມຈາກ ການສໍາຫຼວດກວດກາຕົນເອງຕໍານິກໍ່ສ້າງຊ່ວຍເຫຼືອ ຊຶ່ງກັນ ແລະ ກັນ, ຫາກມີສິ່ງຫຍໍ້ທໍ້ເກີດຂຶ້ນ ຕ້ອງມີ

ຄວາມຕື່ນຕົວ ເປັນເຈົ້າການແກ້ໄຂຢ່າງເດັດຂາດ, ເອົາໃຈໃສ່ຕິດຕາມ ກວດກາ ຂົງເຂດຄວາມຮັບຜິດຊອບຂອງຕົນຢ່າງເປັນປະຈໍາ, ຫາກເຫັນສິ່ງຫຍໍ້ທໍ້ເກີດຂຶ້ນ ກໍຕ້ອງມີຄວາມເດັດຂາດ, ເຂັ້ມງວດ ໃນການແກ້ໄຂ, ຫຼີກເວັ້ນການປົກປ້ອງ ຫຼື ປົກປິດສິ່ງຫຍໍ້ທໍ້ຕ່າງໆ ໄປຄຽງຄູ່ກັນນັ້ນ ກໍຕ້ອງເປັນເຈົ້າການ ໃນການຄົ້ນຫາສິ່ງຫຍໍ້ທໍ້ຕ່າງໆ ພາຍໃນພັກ ເພື່ອສະກັດກັ້ນ ແລະ ກ້າວໄປເຖິງການແກ້ໄຂປະກົດການຫຍໍ້ທໍ້ຕ່າງໆ ໃຫ້ໝົດໄປ.

2. ຄົ້ນຄວ້າພິຈາລະນາ ແລະ ຕົກລົງວິໄນ ຕໍ່ຜູ້ກະທໍາຜິດກົດລະບຽບຂອງພັກ, ກົດໝາຍຂອງລັດຢ່າງເຂັ້ມງວດ, ຮັບປະກັນຄວາມໂປ່ງໃສ, ຍຸຕິທໍາ, ທັນການ ຕາມທິດທີ່ວ່າ: **"ມີປະກົດການຫຍໍ້ທໍ້ເກີດຂຶ້ນຢູ່ບ່ອນໃດ ຄະນະພັກບ່ອນນັ້ນ ເປັນເຈົ້າການຄົ້ນຄວ້າ, ແກ້ໄຂຕາມຂອບເຂດສິດຄຸ້ມຄອງຂອງຕົນ".**

3. ຄະນະກໍາມະການວິໄນ ແຕ່ລະຂັ້ນ ຕ້ອງຍົກສູງຄວາມຮັບຜິດຊອບ, ປະຕິບັດໜ້າທີ່ດ້ວຍຄວາມບໍລິສຸດ, ທ່ຽງທໍາ, ພາວະວິໄສ, ດໍາເນີນຖືກຕາມກົດໝາຍ, ລະບຽບການ, ຂັ້ນຕອນທີ່ກໍານົດໄວ້ຢ່າງເຄັ່ງຄັດ.

4. ປະສານສົມທົບ ຢ່າງກົມກຽວການເຄື່ອນໄຫວຂອງຄະນະກໍາມະການວິໄນ ກັບຄະນະກວດກາແຕ່ລະຂັ້ນ ຫຼື ຄະນະກວດກາສະເພາະກິດ ຂອງຂະແໜງການ, ກົມກອງທີ່ກ່ຽວຂ້ອງ ໃນການແລກປ່ຽນຂໍ້ມູນທີ່ພົວພັນເຖິງຜູ້ກະທໍາຜິດ ເພື່ອຮັບປະກັນໃຫ້ການພິຈາລະນາ ແລະ ລົງວິໄນ ໃຫ້ຖືກຕ້ອງ, ຊັດເຈນ, ທັນເວລາ ແລະ ຮັບປະກັນຍຸຕິທໍາ.

**ສັງລວມແລ້ວ:** ປະກົດການຫຍໍ້ທໍ້ ໃນຖັນແຖວພະນັກງານ, ສະມາຊິກພັກ ແມ່ນພຶດຕິກໍາທີ່ເປັນການລະເມີດຕໍ່ກົດລະບຽບພັກ ແລະ ກົດໝາຍຂອງລັດ. ບັນຫາດັ່ງກ່າວ ໄດ້ສ້າງຜົນເສຍຫາຍຕໍ່ບົດບາດການນໍາພາຂອງພັກ ແລະ ການຄຸ້ມຄອງຂອງລັດ, ຄວາມສະຫງົບ, ປອດໄພໃນສັງຄົມ. ສະນັ້ນ, ເດັດດ່ຽວແກ້ໄຂປະກົດການຫຍໍ້ທໍ້ ໃນຖັນແຖວພະນັກງານ, ສະມາຊິກພັກ ເນື້ອແທ້ ແມ່ນການຍົກສູງບົດບາດ, ຄວາມສາມາດນໍາພາຂອງພັກ ແລະ ເຊີດຊູຄວາມສັກສິດ ໃນການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ ໃຫ້ມີຄຸນນະພາບສູງຂຶ້ນ.